# 占芭 ຈຳປາ



## ສາລະຄະດີທາງລົດໄຟຊິງໄຮ--
## ຕີເບດສ້າງສຳເລັດເປີດໃຫ້ລົດແລ່ນ

## ຂັດ L/C ນັກສຶກສາຈີນໄດ້ພິມອອກເຜີຍແຜ່

ລາຄາ: 13000 ກີບ ¥10
ISSN 1673-3266
9/2006
总第13期

# MEKONG HOTEL

## 湄公酒店

服务中国人，万象有湄公；入住湄公，如在家中

# ໂຮງແຮມ ແມ່ຂອງ




湄公酒店，是中老合资并成立于 1994 年。酒店拥有四栋建筑楼，是首都万象市最大的建筑楼群之一。楼内设有：标房、商务公寓和写字间等。配套服务项目：北京饭庄、夜总会、卡拉 OK 包房、商务中心、会议室、洗熨房、停车场等。全部客房配有：空调、中餐、中文电视、电话、冰箱、卫生间等服务设施。

湄公酒店位于万象市中心，距商业区仅 500 米，离机场 2 公里。前临老挝国家重要的交通枢纽 13 号公路，后依东南亚名河—湄公河 300 米，与泰国隔河相望，地理位置优越，交通便利。客房宽敞明亮，舒适安全，设备齐全，并配有中英文服务和 24 小时保安服务，是商务、旅游、会议、办公及中长期居住和设立办事处的最佳场所。



## Mekong Hotel.We’ve got it all!

Mekong Hotel offers excellent facilities in a superb location,with the mighty Mekong river flowing just be–hind and at a reasonable price.

Our facilities includes hotel rooms,furnished apartment,office space,the Beijing Restaurant,Friendship Night Club,Karaoke and a fully equipped business center.Free transfer service from and to airport both ways.

Whether you need somewhere to sleep,work or relax,the Mekong Hotel is a ideal place.







Address:Luangprabang Rd.Tel:(856 – 21)212937–9  Fax: (856 – 21)212822
E – mail:sales@mekong–ht.com,Website:www.mekong–ht.com










ບໍລິການນຳທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກັ໋ງ ລົດຈິບຖ0. ລົດຕູ້12 ,15ບ່ອນນັ່ງ ລົດບັດ25 ,35 ,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄຳຫລ້າຈຳກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

| Inbound Tour | Outbound Tour |
|---|---|
| We provide: | We provide: |
| Tour in Vientiane | Tour to China |
| Tour in VangViene | Tour to Malaysia |
| Tour in Luangprabang | Tour to VietNam |
| Tour in Pakze | Tour to Cambodia |
| Tour in Northern Laos | Tour to Thailand |
| Tour in Southern Laos | Tour to asia |

# ສາລະບານ

9/2006 总第13期



## 【特 别 报 道】ຂ່າວພິເສດ

04 ສາລະຄະດີທາງລົດໄຟຊິງໄຮ--ຕີເບດສ້າງສຳເລັດເປີດໃຫ້ລົດແລ່ນ

--ສົ່ງຄວາມສຸກເຖິງພູພຽງເຂດຫິມະ ນຳມຸງຄຸນມາສູ່ລູກຫຼານເຜົ່າຕີເບດ

16 ສະຖານທີ່ທ່ອງທ່ຽວ: ນາມູໂສໜອງນ້ຳສັກສິດ

## 【中 国 之 窗】ປ່ອງຢ້ຽມເມືອງຈີນ



18 ກອງປະຊຸມໃຫຍ່ວິທະຍາຄານອົງຈື້ໄດ້ໄຂຂຶ້ນທີ່ປັກກິ່ງເປັນຄັ້ງທຳອິດ

20 ຜະລິດຕະພັນທີ່ຮັບຮອງອາຫານສີຂຽວຂອງຈີນເກືອບ 10 ພັນຊະນິດ

21 ບັດ L/C ນັກສຶກສາຈີນໄດ້ພິມອອກເຜີຍແຜ່

22 ຖ້ຳຫີນໃຫຍ່ທັງ 4 ເມືອງຈີນຮ່ວມມືເສີມສ້າງຍີ່ຫໍ້ທ່ອງທ່ຽວພາກພື້ນ

24 ສປຈີນສະໜອງຈຳນວນທຶນການສຶກສາລັດຖະບານແກ່ 150 ກວ່າປະເທດ

25 ຈີນໜູນໃຊ້ຮູບເງົາກາຕູນແລະພາບເຍີ້ຍເຜີຍແຜ່ຄວາມຮູ້ດ້ານມໍລະດົກວັດທະນະທຳແກ່ຊາວໜຸ່ມເຍົາວະຊົນ




ວັດບຸດຕະລາເມືອງລາຊາ ຖ່າຍພາບ: ລານທຽນ

拉萨布达拉宫 蓝 天 摄

主 办：云南省对外文化交流协会
编 辑 出 版：《占芭》杂志社
总 顾 问：丹 增 晏友琼 梁公卿 刘 平 苏正国
总 编 辑：郑 明
副 总 编 辑：戴世平
执行副总编辑：杨 云
编 辑 总 监：董保延
责 任 编 辑：苏雯雯
美 术 总 监：祝 群
总 编 室 主 任：禹正玉
老 文 译 审：黄 冰
翻 译：黄 冰 白厚启
老 文 录 入：白厚启

发 行 范 围：国内外公开发行
出 版 日 期：每月五日
邮 发 代 号：64-36
国际标准刊号：ISSN 1673-3266
国内统一刊号：CN53-1200 / D

ຈັດທຳໂດຍ: ສະມາຄົມແລກປ່ຽນວັດທະນະທຳກັບຕ່າງປະເທດ ແຂວງຢູນນານແຫ່ງ ສ ປ ຈີນ
ຮຽບຮຽງພິມຈຳໜ່າຍ: ສຳນັກພິມວາລະສານ《ຈຳປາ》
ປະທານທີ່ປຶກສາ: ຕານເຈັນ ຢຽນຢຽວສົງ ແລງກົງຊິງ ຫຼິວພິງ ຊູເຈີນກົ່ວ
ຫົວໜ້າບັນນາທິການ: ເຈີນໝິງ
ຮອງຫົວໜ້າບັນນາທິການ: ຕ້າຍສື່ພິງ
ຮອງຫົວໜ້າບັນນາທິການ
ບໍລິຫານ: ຢາງຢູນ
ຜູ້ຄຸ້ມງານ ບັນນາທິການ: ຕົງປາວຢຽນ
ບັນນາທິການປະຈຳ: ຊູເວິນເວິນ
ຜູ້ຄຸ້ມງານຝ່າຍສິລະປະ: ຈູ້ສິນ
ຫົວໜ້າພິມຈຳໜ່າຍ ຢູຍເຈີງຢູຍ
ບັນນາທິການ ພາສາລາວ: ຮວງປິນ
ຜູ້ແປພາສາ: ຮວງປິນ ປາຍໂຫສີ
ຜູ້ພິມພາສາລາວ: ປາຍໂຫສີ

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673-3266
ລະຫັດວາລະສານປະເທດຈີນ: CN53-1200/D

http://la.yunnan.cn
E-mail: ynzhanba@163.com
ສະຖານທີ່: ເປີເຮືອນ 76 ຖະໜົນຮວາຊານໜານລູ່ນະຄອນຄຸນໝິງແຂວງຢູນນານ
ລະຫັດໄປສະນີ: 650021 ເບີໂທ: 0086-0871-3621079 ໂທລະເລກ: 0086-0871-3621069

## [环 球 扫 描] ສະແກນຮອບໂລກ

26 《ບັນຊີລາຍຊື່ນໍລະດົກໂລກ》 ເພີ່ມສະມາຊິກໃໝ່

27 ປະເທດກຳລັງພັດທະນາຄວນວາງນະໂຍບາຍປະຕິຮູບທີ່ສອດຄ່ອງກັບສະພາບປະເທດ

## [中 老 交 往] ການໄປມາຫາສູ່ກັນລະຫວ່າງຈີນ-ລາວ



28 ທ່ານເຈຍຊິ້ງລິນແລະລີສາງຊຸນພົບປະທ່ານສີສະຫວາດ ແກ້ວບຸນພັນ ປະທານແນວລາວສ້າງຊາດ

30 ສປຈີນຊ່ວຍສປປລາວເຝິກອົບຮົມໄອຍະການ 25 ຄົນຄັ້ງແຮກ

31 ທ່ານຊູເຈີງກົ່ວ ຮອງປະທານສະພາປຶກສາການເມືອງ ປະທານສະພາການຄ້າແລະອຸດສາຫະກຳແຂວງຢູນນານ
ນຳພາຄະນະຜູ້ແທນໄປສຳຫຼວດຢູ່ເມືອງລາວ

## [老 挝 印 象] ພາບປະທັບໃນເມືອງລາວ

32 ຊາວລາວທີ່ສະໜຸກສຳລານ

## [文 化 博 览] ລຽບຊົມວັດທະນະທຳ



34 ຮູບພິມຂອງຊາວນາເຜົ່າຈວງທີ່ມີລີລາເອກະລັກຈຳເພາະ

36 ເມືອງຮຸຍເຈີຢູນນານ--ເມືອງລືນາມແຫ່ງວັດທະນະທຳ

## [旅 游 纵 横] ການທ່ອງທ່ຽວທົດສະນາຈອນ



40 ພູສີງໂຕວູຕິ່ງ--"ພູເຂົາລຳດັບ 1 ໃນພາກທຳລະດີ"

42 ອັບຣ້ອງເພງພື້ນເມືອງເກົ່າແກ່ຕາມແຄມໜອງຊີງໄຮ

## [今 日 云 南] ຢູນນານໃນວັນນີ້

46 ສ້າງສາເມືອງນ້ອຍທ່ອງທ່ຽວຢູນນານກາຍເປັນຍີ່ຫໍ້

48 ອານໜີງ--ຕົວເມືອງອຸດທິຍານແຫ່ງຊາດທຳອິດຂອງຢູນນານ

50 ຕະຫຼາດເຄື່ອງໃຊ້ອຸປະກອນໂຮງແຮມໃຫຍ່ກວ່າໝູ່ໃນຢູນນານໄດ້ຕັ້ງຫຼັກປັກຖານທີ່ຄຸນໝີງ

## [东 盟 快 讯] ຈັບກະແສຂ່າວອາຊຽນ




52 ປະເທດຈີນກັບບັນດາປະເທດອາຊຽນເພີ່ມທະວີການຮ່ວມມືທ່ອງທ່ຽວຂອງຊາວໜຸ່ມ

54 ກອງປະຊຸມລັດຖະມົນຕີກະຊວງສາທາລະນະສຸກສະໄໝປະຖົມມະເລີກລະຫວ່າງຈີນ
--ອາຊຽນໄດ້ຈັດຂຶ້ນທີ່ມຽນມາ

55 ອາຊີອາຄະເນໄດ້ກາຍເປັນໜຶ່ງໃນພາກພື້ນທີ່ມີຊີວະພະລັງທາງເສດຖະກິດທີ່ສຸດໃນໂລກ

## [民 族 风 情] ຮີດຄອງພື້ນແຜ່ນຂອງຊົນເຜົ່າ



56 ສົນທະນາພາທີປະເພນີເທສະການກາງລະດູໃບໄມ້ຫຼົ່ນ

58 ຊົນເຜົ່າຍີ່ສະຫຼອງປີໃໝ່--ວັນບຸນຜີປາກແລງຊານ

## [学 汉 语] ຮຽນພາສາຈີນ

62 ຂ້ອຍຂໍໃຊ້ຢາງລຶບຂອງເຈົ້າຈັກໜ້ອຍຊິໄດ້ບໍ

## [为 您 服 务] ບໍລິການທ່ານ

64 ກິນໝາກເຂືອແລະແຕງໂມສົດຫຼາຍມີຜົນດີຫຼາຍປະການ

文：杨云　赵丽华　苏雯雯



# ສາລະຄະ ຕິເບດສ້

ຂົວໃຫຍ່ຕັ່ງສົງເບັນລັດຕາມທາງລົດໄຟຊິງໄຮ--ຕິເບດ　青藏铁路当雄本拉特大桥





为雪域高原送来安康　给藏家儿女带来吉祥

——青藏铁路通车纪行

金秋 8 月，雪域高原正是鲜花盛开的季节，几代藏家儿女梦想的青藏铁路开通了。我们随中央对外新闻单位记者团开始了青藏之旅，车窗外广袤的草原、连绵起伏的群峰、穿行其间的河流……让我们心旷神怡。满载着藏家儿女欢声与笑靥的列车带着我们一路驶向世界屋脊。

# ດິທາງລົດໄຟຊິງໄຮ--
# າງສຳເລັດເປີດໃຫ້ລົດແລ່ນ

## --ສົ່ງຄວາມສຸກເຖິງພູພຽງເຂດຫິມະ ນຳມຸງຄຸນມາສູ່ລູກຫຼານເຜົ່າຕິເບດ



ສະຖານີລົດໄຟເມືອງລາຊາ　拉萨火车站

ເດືອນ 8 ລະດູໃບໄມ້ຫຼົ່ນ ເປັນລະດູທີ່ດອງດອກມາລາພວມເບັ່ງບານບົນພູພຽງເຂດຫິມະ,ທາງລົດໄຟຊິງໄຮ--ຕິເບດທີ່ລູກຫຼານຊາວຕິເບດຫຼາຍເຊັ່ນຄົນໃຝ່ຝັນກັນມານັ້ນໄດ້ສ້າງສຳເລັດເປີດໃຫ້ລົດແລ່ນແລ້ວ.ພວກເຮົາໄດ້ຕິດຕາມຄະນະນັກຂ່າວກົມກອງຂ່າວສານສູນກາງຕໍ່ຕ່າງປະເທດເລີ່ມອອກເດີນທາງໄປຍັງຊິງໄຮ--ຕິເບດ,ທົ່ງຫຍ້າອັນກວ້າງຂວາງແລະກຸ່ມພູຍິ້ນ ໆ ລົງ ໆລຽນຕິດພຽບພ້ອມແມ່ນ້ຳລຳຫ້ວຍໄຫຼສວານສົນຕາມທາງສະດຸດຕາຢູ່ນອກປ່ອງຢ້ຽມລົດ,ເຮັດໃຫ້ພວກເຮົາມີຄວາມອີ່ມເອີບໃນຫົວໃຈ.ຂະບວນລົດໄຟທີ່ບັນທຸກລູກ ໆຫຼານ ໆຊາວຕິເບດພ້ອມດ້ວຍສຽງຫົວຊົມຊ້ອຍຊື່ນ,ພາພວກເຮົາມຸ່ງໜ້າແລ່ນໄປສູ່



ປົບຫຼັງຄາໂລກ.

**ບູລະນະພູພຽງເຂດຫິມະເປັນພູຜາແມ່ນ້ຳສີຂຽວຕະຫຼອດໄປ**

ຢູ່ຊີໜິງແຂວງຊິງໄຮ, ພໍດີພວກເຮົາໄດ້ພົບງານມະຫະກຳຖ່າຍຮູບສາກົນແຫຼ່ງສາມແມ່ນ້ຳຈີນສະໄໝປະຖົມມະເລີກໂດຍຫ້ອງການຂ່າວສານສຳນັກຄະນະລັດຖະບານ, ສະມາຄົມນັກຖ່າຍຮູບຈີນແລະຄະນະປົກຄອງປະຊາຊົນແຂວງຊິງໄຮເປັນເຈົ້າພາບຈັດຂຶ້ນ, ໃນຜະລິດຕະພັນທີ່ເຂົ້າຮ່ວມປະກວດນັ້ນ, ຜະລິດຕະພັນສອງຊຸມທີ່ສ່ອງແສງຮີດຄອງພື້ນແຜ່ນແມ່ນ້ຳຂອງຢູນນານໄດ້ດຶງດູດສາຍຕາຂອງພວກເຮົາເປັນພິເສດ, ບັນດານັກຖ່າຍຮູບ

ໃຊ້ຕາກ້ອງບັນທຶກພູມພາບທຳມະຊາດຂອງປະເທດລ້ອງແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງແລະຮີດຄອງພື້ນແຜ່ນປະຊາຊົນໃນປະເທດທີ່ງົດງາມ. ເພື່ອຈະໄດ້ສືບຮູ້ສະພາບອະນຸຮັກຊີວະພາບແຫຼ່ງສາມແມ່ນ້ຳ, ພວກເຮົາໄດ້ໄປຮອດຖິ່ນຖານບ້ານໃໝ່ຊາວອົບພະຍົບຕາແສງພູຕັນລາເມືອງເກີເອີມູຊິງໄຮ, ພາຍໃຕ້ແສງແດດກ້າ, ມີເດັກນ້ອຍຊາວຕີເບດອາຍຸ 10 ຂວບຊື່ໂຊນານກົງກາພວມຊື່ນໃຈແອບຂີ່ລົດຖີບທີ່ຫາກໍ່ຊື້ມາໃໝ່ເວົ້າຕໍ່ພວກເຮົາວ່າ,











ໝູ່ບ້ານຂອງເຂົາເຈົ້າຫາກໍ່ຍ້າຍມາຕັ້ງຢູ່ແຄມແມ່ນ້ຳໂທ ງເພື່ອອະນຸຮັກແຫຼ່ງສາມແມ່ນ້ຳ,ຢູ່ບ່ອນນີ້ໄປໂຮງຮຽນຫຼືເຂົ້າຫາຕົວເມືອງກໍ່ສະດວກສະບາຍກວ່າແຕ່ກ່ອນ.ຊາວລ້ຽງປະສຸສັດ 128 ຄົວເຮືອນຂອງຖິ່ນຖານບ້ານໃໝ່ນີ້ ເດີມທີດຳລົງຊີບຢູ່ເຂດໃຈກາງແຫຼ່ງສາມແມ່ນ້ຳ,ນັບແຕ່ລັດດຳເນີນໂຄງການອະນຸຮັກຊີວະພາບທຳມະຊາດແຫຼ່ງສາມແມ່ນ້ຳມາ,ຈຶ່ງລວມສູນຍົກຍ້າຍມາພັດທະນາຕາມທາງລຽບແມ່ນ້ຳໂທ ງຂອງທາງລົດໄຟຊິງໄຮ--ຕິເບດ.ນອກຈາກລັດໄດ້ລົງທຶນຕໍ່ກິດຈະກຳສາມຂອດໃນບ່ອນຊາວອົບພະຍົບອາໄສຢູ່ແລະປຸກສ້າງໂຮງຮຽນແລ້ວຍັງຈ່າຍເງິນອຸດໜູນຕັ້ງຫຼັກປັກຖານບ້ານຢູ່ໃຫ້ແຕ່ລະຄົວເຮືອນ40 ພັນຢວນ,ແຕ່ລະປີພັດເກື້ອກູນແຕ່ລະຄົວເຮືອນຕື່ມ 6000 ຢວນ ເພື່ອຊ່ວຍເຫຼືອເຂົາເຈົ້າດຳລົງຊີວິດໃໝ່,ກຳນົດເກື້ອກູນ 10 ປີ.



ນອກຈາກນີ້ແລ້ວ, ຊາວລ້ຽງປະສຸສັດໃນເຂດທົ່ງຫຍ້າລ້ຽງສັດ 194 ຄົວເຮືອນ, ລັດກໍ່ໄດ້ເກື້ອກູນແຕ່ລະຄົວເຮືອນປີລະ 3000 ຢວນ ເພື່ອເຮັດຮົ້ວລ້ອມຮັກສາຫຍ້າລ້ຽງສັດ. ພຽງແຕ່ໂຄງການທົ່ງຫຍ້າລ້ຽງສັດທີ່ຖອນຄືນນັ້ນ, ສູນກາງແລະທ້ອງຖິ່ນໄດ້ລົງທຶນເກືອບ 30 ລ້ານຢວນຕາມລຳດັບ, ທັງໝົດເຫຼົ່ານີ້ກໍ່ລ້ວນແຕ່ເພື່ອຟື້ນຟູຊີວະພາບແຫຼ່ງສາມແມ່ນ້ຳທັງສິ້ນ.

ພໍເມື່ອພວກເຮົາຂຶ້ນຂະບວນລົດມຸ່ງໜ້າແລ່ນໄປສູ່ເມືອງລາຊາ, ໃຕ້ແສງອະລຸນແຈ້ງເບີກຟ້າ, ມີຜູ້ອາສາສະໝັກອະນຸຮັກສິ່ງແວດລ້ອມສີຂຽວຕາມທາງລົດໄຟໄດ້ຍິ້ມແຍ້ມຕໍ່ຜູ້ໂດຍສານພ້ອມທັງແຈກຈ່າຍປື້ມໂຄສະນາອະນຸຮັກສິ່ງແວດລ້ອມຊີວະພາບ, ອະທິບາຍສະຕິປົກປັກຮັກສາສິ່ງແວດລ້ອມຢ່າງລະອຽດ.

ຜ່ານການອະນຸຮັກສິ່ງແວດລ້ອມມາຫຼາຍປີ, ຊີວະພາບເຂດພາກເໜືອຂອງຕີເບດຮັກສາໄດ້ເປັນຢ່າງດີ, ຈຳນວນລວາປ່າແລະໝີເພີ່ມຫຼາຍຂຶ້ນເປັນໜ້າຕື່ນເຕັ້ນ. ຂ້າຫຼວງເຂດຫຼີນຈີໄດ້





ເວົ້າໃນສະພາຜູ້ແທນປະຊາຊົນທົ່ວປະເທດວ່າ:ທົ່ວເຂດມີປະຊາກອນພຽງ 1 ແສນ 6 ໝື່ນຄົນ,ແຕ່ວ່າສະເພາະໝີປ່າກໍ່ມີຮອດ 2 ແສນກວ່າໂຕ,ມັນໄດ້ເລີ່ມມີຜົນກະທົບຕໍ່ຊີວິດການຜະລິດຂອງຜູ້ຄົນ.ພ້ອມກັນນັ້ນ,ຕີເບດສືບຕໍ່ປະຕິບັດວຽກງານປົກປັກຮັກສາແມ່ນ້ຳລຳເຊແລະປ້ອງກັນບຳບັດມົນລະພິດໃນເຂດຄຸ້ມຄອງທຳມະຊາດ,ເຂດສັບພະຄຸນຂອງຊີວະພາບແລະທົ່ງຫຍ້າປ່າໄພທຳມະຊາດ,ເພື່ອສ້າງຄວາມສຸກໃຫ້ແກ່ລູກຫຼານອະນຸຊົນຮຸ່ນຫຼັງ.

**ພູພຽງຊິງໄຮ--ຕີເບດໄດ້ທະລຸທາງສີລິມຸງຄຸນ**

ຢູ່ໃນຕູ້ລົດໄຟພວກເຮົາໄດ້ມີໂອກາດພົບປະກັບອົງຈຽງໂຕເຈ ພະພຸດມີຊີວິດ(ພະເຖລະລາມະ)ເຂດປົກຄອງຕົນເອງເຜົ່າຕີເບດຢີສູໂດຍບັງເອີນ,ເພິ່ນມີຄວາມປະສົງມາແຕ່ໃດ ໆຢາກໄປນະມັດສະການວັດບຸດຕະລາທີ່ເມືອງລາຊາຕີເບດ,ມາດຽວນີ້ທາງລົດໄຟຊອດແລ້ວ,ເພິ່ນດີໃຈປານຫຍັງພາແມ່ຜູ້ມີອາຍຸ58ປີໄປນະມັດສະການທີ່ເມືອງລາຊາ ພ້ອມທັງໄປຢື້ຢາມນ້າບ່າວທີ່ດຳລົງຊີບເປັນໝໍຢາພື້ນເມືອງຕີເບດ.

ໃນຕາແສງພູຕັນລາ ເກີເອີມູແຂວງຊິງໄຮ,ມີຊາວລ້ຽງປະ





ຫົວໜ້າແລະຜູ້ບໍລິການຂະບວນລົດໄຟໄດ້ເອົາໃຈໃສ່ຮັບໃຊ້ຄົນໂດຍສານຢ່າງອົບອຸ່ນ
列车长和列车员热忱周到的为旅客服务

ສຸສັດເຜົ່າຕິເບດ 422 ຄົວເຮືອນຢູ່ກະແຈກກະຈາຍຕາມທົ່ງລ້ຽງສັດທີ່ກວ້າງໃຫຍ່ໄພສານ, ກ່ອນໜ້ານີ້ບໍ່ມີທາງລົດໄຟ, ເມື່ອເຈັບເປັນນັ່ງລົດຈີບຈາກທົ່ງລ້ຽງສັດໄປຮອດຕາແສງຕ້ອງໄດ້ເສຍຄ່າສາມສີ່ຮ້ອຍຢວນ, ຖ້າຈະນັ່ງລົດຈີບໄປເຖິງເກີເອີມູກໍ່ຕ້ອງເສຍຄ່າໂດຍສານອີກພັນປາຍຢວນ, ຄັນປະຈວບກໍລະນີປ່ວຍໜັກສຸກເສີນກໍ່ຈະເຄີກເວລາເສຍງານຢູ່ສະເໝີ. ພາຍຫຼັງລົດໄຟຊອດຫາກັນ, ຊາວລ້ຽງປະສຸສັດຕາແສງພູຕັນລາ ວ່າແຕ່ໄປຮອດຕາແສງແລ້ວເສຍຄ່າລົດໄຟ 63 ຢວນກໍ່ສາມາດໄປຮອດເກີເອີມູ, ແລ້ວປະຢັດເງິນພັນປາຍຢວນ.

ຢູ່ບ້ານຕັງສູທີ່ຫ່າງຈາກສະຖານີລົດໄຟຕັງສຶງຕິເບດ, ພວກເຮົາໄປແວ່ເຮືອນຂອງກົງກາຊັງຈູ້ທີ່ມີລັກສະນະພິເສດຊົນເຜົ່າສະອາດສະອ້າງ, ຊີວິດການເປັນຢູ່ທີ່ຮັ່ງມີສີສຸກຂຶ້ນຈັ່ງແມ່ນເຮັດໃຫ້ຜູ້ມາແວ່ຊົມອິດສານຳແທ້ດາຍ. ເຮືອນກົງກາຊັງຈູ້ຜູ້ດຸໝັ່ນຂະຫຍັນພຽນໄດ້ລ້ຽງງົວແຂກ(ຈະມອນ) 110 ໂຕ, ແກະ 200 ໂຕ, ຫຼັງຈາກທາງລົດໄຟສ້າງສຳເລັດເປີດໃຫ້ລົດແລ່ນ, ເພິ່ນຍັງ







ຕາມຖະໜົນລາຊາແລະເຂດທິວທັດທ່ອງທ່ຽວ, ມັກພົບເຫັນນັກທ່ອງທ່ຽວຕ່າງຊາດທີ່ມີຜິວພັນຕ່າງກັນ 在拉萨街头和旅游景区，经常可见各种肤色的外国游客



ວັດບຸດຕະລາເມືອງລາຊາ 拉萨布达拉宫

ໄດ້ຊື້ລົດຍີ່ຫໍ້ອັນຄຳຄັນໜຶ່ງສຳລັບຂົນສົ່ງຜູ້ໂດຍສານ. ລູກສາວເພິ່ນພວມສຶກສາຢູ່ໂຮງຮຽນ. ພໍເມື່ອພວກເຮົາເຂົ້າໄປນັ່ງຢູ່ຫ້ອງຮັບແຂກແບບຕິເບດຂອງເຮືອນເພິ່ນເປັນຊົ່ວຄາວກໍ່ແນມເຫັນຮູບຜູ້ນຳສາມຣຸ່ນະໜ້າເຈີຕົງ, ເຕິ້ງສຽວຜີງແລະຈຽງເຈີໝິນ



ເດັກເຜົ່າຕິເບດທີ່ຊົມຊື່ນ
快乐的藏族儿童



ພໍ່ຈະອູ້ມລູກໄປເບິ່ງລົດໄຟ
爸爸抱你去看火车





布达拉宫门前转经的藏民
ຊາວທິເບດຟັງທຳທີ່ໜ້າວັດບຸດຕະລາ







ແຂວນຢູ່ກາງຫ້ອງຮັບແຂກ.

ແຕ່ເກີເອີມູແຂວງຊິງໄຮໄປຮອດເມືອງລາຊາ, ກໍ່ຈະມອງເຫັນຝູງແກະແລະງົວແຂກຕະຫຼອດທາງ, ຕີເບດມີຊັບພະຍາກອນເຂດລ້ຽງປະສຸສັດອັນເໝາະດີ, ລວມຍອດການລ້ຽງປະສຸສັດນອນຢູ່ອັນດັບນຳໜ້າຂອງທົ່ວປະເທດຈີນ. ທາງລົດໄຟສ້າງສຳເລັດເປີດໃຫ້ລົດແລ່ນ, ຈະຊຸກຍູ້ການພັດທະນາເສດຖະກິດຊິງໄຮແລະຕີເບດສອງທ້ອງຖິ່ນດັ່ງກ່າວຂະຫຍາຍຕົວຢ່າງວ່ອງໄວ.

**ວັດທະນະທຳຄຸນຫລຸນມີຂົງເຂດກວ້າງຂວາງ**

"ຊຸມປີມໍ່ ໆມານີ້, ເພື່ອສ້າງຍີ່ຫໍ້ວັດທະນະທຳຄຸນຫລຸນ" ແຂວງຊິງໄຮໄດ້ເຊື້ອເຊີນນັກຊ່ຽວຊານແລະນັກປາດຜູ້ມີຊື່ສຽງໃນທົ່ວປະເທດມາເກີເອີມູ, ໄດ້ຈັດງານສຳມະນາວັດທະນະທຳຄຸນຫລຸນຫຼາຍຄັ້ງ. ເຂົາເຈົ້າກຳລັງໝູນໃຊ້ວັດທະນະທຳຄຸນຫລຸນຍົກສູງລະດັບຄຸນຄ່າວັດທະນະທຳທາງດ້ານອຸດສາຫະກຳ, ຕົວເມືອງແລະການທ່ອງທ່ຽວປະຈຳທ້ອງຖິ່ນ.

ໃນຂະນະໃຫ້ສຳພາດແກ່ພວກເຮົານັ້ນ ບັນດາຜູ້ຊີ້ນຳ, ນັກສິລະປິນແລະຄູອາຈານຂອງພະແນກວັດທະນະທຳເຂດແຄ້ວນປົກຄອງຕົນເອງຕີເບດປະກົດມີສີໜ້າສະອື້ນຊື່ນໃຈວ່າ: "ທາງລົດໄຟຊິງໄຮ--ຕີເບດຂອດຫາກັນແລ້ວຍ່ອມຈະນຳມາເຊິ່ງກະແສຈໍລະຈອນວັດຖຸສິນຄ້າແລະກະແສຈໍລະຈອນດ້ານວັດທະນະທຳ, ມັນໄດ້ອຳນວຍຊ່ອງທາງອັນດີໃຫ້ແກ່ພວກເຮົາເດີນອອກໄປແລະເຊີນເຂົ້າມາ. ວັດທະນະທຳຕີເບດຂອງພວກເຮົານີ້ຈະຂະຫຍາຍຕົວເຕີບໃຫຍ່ໃນທ່າມກາງການກະທົບແລະແລກປ່ຽນກັບວັດທະນະທຳອື່ນ ໆຢ່າງບໍ່ຢຸດຢັ້ງ."

ຊຸມປີ 80 ສະຕະວັດທີ່ແລ້ວ, ຊ່າງສີມືເຄື່ອງເງິນ 10 ກວ່າຄົນໃນບ້ານຊິນຮວາເມືອງເຫີສີ້ງແຂວງຢູນນານໄດ້ເດີນທາງໄກແສນໄກໄປຮອດເມືອງລາຊາ, ໄດ້ລິເລີ່ມເສີມສ້າງທຸລະກິດອັນເປັນປາຕິຫານຢູ່ຕ່າງຖິ່ນ. 20ປີທີ່ຜ່ານພົ້ນໄປ, ມີເກືອບ200 ຄອບຄົວ ໂດຍມີຊ່າງສີມືໃນເມືອງເຫີສີ້ງຢູນນານ 1500 ກວ່າຄົນໄດ້ພາກັນຕັ້ງຫຼັກປັກຖານຢູ່ເມືອງລາຊາ, ດຽວນີ້ຢູ່ຕາມສົ້ນ








ກອງປະຊຸມແນະນຳສະພາບເມືອງເກີມູເອີແຂວງຊີງໄຮ
记者参加青海省格尔木市情介绍会





记者们纷纷用镜头留下青藏铁路沿线的美景
ນັກຂ່າວໄດ້ທະຍອຍກັນຖ່າຍພາບທິວທັດຕາມສາຍທາງລົດໄຟຊີງໄຮ--ຕິເບດ



ຖະໜົນລາຊາ,ມີເຄື່ອງເງິນ 95% ຂຶ້ນໄປແມ່ນຜະລິດຈາກສີມືຂອງເຂົາເຈົ້າ,ວັດທະນະທຳຕີເບດທີ່ມີສີສັນແພວພາວຫຼາຍຫຼາກໄດ້ຝຶກຝົນສີໄມ້ລາຍມືຂອງເຂົາເຈົ້ານັບມື້ນັບຄ່ອງເຄີຍສົມບູນ,ພ້ອມທັງໄດ້ບົ່ມສ້າງສວນຝາແປວອາຈານຫັດຖະສິນພື້ນເມືອງຊົນເຜົ່າທີ່ມີລະດັບໂລກ.ຫັດຖະກອນຮຸ່ນໜຸ່ມກໍ່ມີໂອກາດສືບທອດຊັບສິນສີມືຜະລິດເຄື່ອງເງິນຈາກຜູ້ເປັນພໍ່,ພວກເຂົາໄດ້ຊື້ຊັບສິນເຮືອນຢູ່ແລະໜ້າຮ້ານທຸລະກິດທີ່ຕົກແຕ່ງໃໝ່ຢູ່ຕະຫຼາດການຄ້າເຈີຈຽງຊຶ່ງຕັ້ງຢູ່ນາສູເປັນສະຖານີລົດໄຟແລ່ນຜ່ານ.

ພາຍໃຕ້ແສງສຸລິສ່ອງໃສ,ພວກເຮົາຢືນຢູ່ເຊິ່ງໜ້າພຸດທະຮູບຝາຜະໜັງຫີນໃຫຍ່ສູງທີ່ວັດເຈີປາງຈ້ອງມອງພາບທົ່ວເມືອງລາຊາ,ສະຖານີລົດໄຟລາຊາບໍ່ໄກໄດ້ເປົ່ງແສງເອກະລັກລະຍິບລະຍັບ,ພວກເຮົາຈະຈື່ບໍ່ລືມວ່າ,ແມ່ນທາງລົດໄຟຊິງໄຮ--ຕີເບດນຳເອົາຄວາມຢູ່ເຢັນເປັນສຸກມາສູ່ລູກຫຼານເຜົ່າຕີເບດທີ່ຢູ່ບົນພູພຽງເຂດຫິມະ.



ຈ້ອງມອງວັດເຈີປາງຈາກເນີນສູງ 俯瞰哲蚌寺

## 旅游胜地：圣湖纳木错

纳木错位于西藏北部的当雄县，广袤的草原高山深处，是闻名世界的海拔最高的咸水湖。纳木错的藏语意思为“天湖”，它被当地群众称为“圣湖”，是藏传佛教的著名圣地，每年都有众多的朝圣者到此转湖朝圣。它也是中国最美的五大湖泊之一，吸引着世界各地的人们到此旅游观光。



# ສະຖານທີ່ທ່ອງທ່ຽວ: ນາມູໂສໜອງນ້ຳສັກສິດ



ນາມູໂສຕັ້ງຢູ່ເມືອງຕັງສົງພາກເໜືອຂອງຕີເບດ,ເປັນໜອງນ້ຳເຄັມທີ່ມີລະດັບນ້ຳທະເລສູງສຸດຊ່ຳລືໃນໂລກ.ນາມູໂສເປັນພາສາຕີເບດແປວ່າ "ໜອງຟ້າ",ຖືກມອບຊື່ໃນທ້ອງຖິ່ນເອີ້ນກັນວ່າ "ໜອງນ້ຳສັກສິດ",ເປັນສະຖານທີ່ສັກສິດລືຊື່ຂອງສາສະໜາພຸດຕີເບດ,ທຸກ ໆປີກໍ່ມີຜູ້ໄປນະມັດສະການໜອງນ້ຳສັກສິດດັ່ງກ່າວຢ່າງຫຼວງຫຼາຍພາຍມາກ.ແລະກໍ່ເປັນໜອງໜຶ່ງທີ່ສວຍງາມກວ່າໝູ່ໃນ 5 ໜອງໃນເມືອງຈີນ,ມັນໄດ້ດູດດຶງເອົາບັນດາແຂກຄົນແຕ່ງຕ່າງ ໆໃນໂລກມາທັດສະນາຈອນທ່ອງທ່ຽວໃນແຕ່ງນີ້.

ໃນນິທານພື້ນເມືອງເຜົ່າຕີເບດກ່າວໄວ້ວ່າ,ນາມູໂສ(ໜອງຟ້າ)ເປັນພັນລະຍາຮັກຮ່ຳຂອງພູທິບຕັນລາ,ນັກອັດຕະລະ--ປີແບ້,ດ້ວຍເຫດນີ້ເມື່ອຮອດຍາມປີແບ້(ປີມະແມ),ກໍ່ຈະມີຜູ້ໄປນະມັດສະການນັບເປັນພັນ ໆເດີນທາງຂຶ້ນພູລົງຫ້ວຍທີ່ມາຈາກຢູນານ,ຊີງໄຮ,ເສຊວນຕະຫຼອດເຖິງອິນເດຍ,ເນປານແລະບັນດາປະເທດອາຊີອາຄະເນມາເຕົ້າໂຮມນະມັດສະການໜອງຟ້າດັ່ງກ່າວ,ຕາມເລົ່າກັນວ່າ ເມື່ອນະມັດສະການໜອງນ້ຳສັກສິດນີ້ຈະພາໃຫ້ຄົນເຮົາມີປັນຍາຄວາມຮູ້ຢ່າງກວ້າງຂວາງແລະມີບຸນປາລະມີໜັກໜາ,ຖ້າອາບລ້າງດ້ວຍນ້ຳໜອງສັກສິດກໍ່ສາມາດກຳຈັດປັດເປົ່າບາບກຳແລະຄວາມລະທົມທຸກທາງກິເລດທຸກປະການ,ລັນຕັ້ງສັດຈາທິຖານຕໍ່ໜອງຟ້າກໍ່ມີອິດທິລິດຕາມປະສົງ ວ່າຊັ້ນ.

ນ້ຳໜອງນາມູໂສສະອາດປຽບເໝືອນທ້ອງຟ້າສີຄາມ.ຈອມພູຫິມະຢູ່ບໍລິເວນແຄມໜອງສ່ອງແສງລົງກາງໜອງ,ປະກົດພາບທຳມະຊາດງາມສະຫງ່າແລະສະຫງົບງຽບ.ກາງໜອງມີດອນ 3 ແຫ່ງ,ດອນຢູ່ກ້ຳຕາເວັນອອກສຽງໃຕ້ໃຫຍ່ກວ່າໝູ່,ດອນນີ້ປະກອບໄປດ້ວຍຫີນປູນ,ຍ້ອນການຖູເຊາະຈາກນ້ຳໜອງຫຼາຍຟ້າຫຼາຍປີ,ເລີຍກາຍເປັນພູມພາບໜ້າອັດສະຈັນເຊັ່ນະດົງຈອມຫີນ,ຖ້ຳນ້ຳຍ້ອຍ,ຂົວທຳມະຊາດແລະເສົາຫີນເປັນຕົ້ນ,ມີຮູບຊົງລົງລາຍສວຍສົດງາມຕາ.

ໜອງຟ້ານີ້ບໍ່ພຽງແຕ່ມີທິວທັດສວຍສົດງົດງາມເທົ່ານັ້ນຫາກຍັງມີຊັບພະຍາກອນອັນມັ່ງມູນອີກ.ບ່ອນນີ້ຍັງມີແຮ່ທາດຫຼາຍ,ເປັນຕົ້ນສີ່ະເກືອກີນ,ອານກາລີ(alkali),ບໍລິມາດສະສົມກໍ່ຫຼາຍເຕີບ.ໃນໜອງຍັງເກີດເຕັມແຕ່ປູປາ,ເມື່ອຮອດຍາມລະດູຮ້ອນ,ຝູງປາກາງໜອງເລີກລອຍມາແຄມຫາດໜອງອອກໄຂ່,ກໍ່ຈະມີໂອກາດຈັບປາໄດ້ຕາມໃຈ.ບໍລິເວນໜອງແມ່ນທົ່ງຮາບກວ້າງຂວາງສຸດສາຍຕາ,ເກີດເຕັມແຕ່ພືດຈຳພວກຫຍ້າແລະພືດໃນນ້ຳ,ເປັນທົ່ງຫຍ້າລ້ຽງສັດທີ່ອຸດົມສົມບູນ.ຊາວລ້ຽງປະສຸສັດໃນພາກເໜືອຕີເບດເຄີຍຕ້ອນຝູງງົວຄວາຍແລະແກະມາບ່ອນນີ້ກ່ອນລະດູໜາວຈະຄືບຄານມາເຖິງ,ເພື່ອຊື່ນຄວາມໜາວຈາກພາຍຸຫິມະ.ແຕ່ສຳລັບລະດູຮ້ອນທີ່ນາມູໂສ ພັດຟົດຟື້ນອີກກະທຶກນຶກນັບ,ຈຳພວກສັດປ່າເຊັ່ນະງົວແອກປ່າ,ເຍືອງຜາແລະກະຕ່າຍປ່າໄດ້ພາກັນຊຸມກິນຫຍ້າອ່ອນຕາມຫາດທົ່ງຫຍ້າ;ນົກອົບພະຍົບເປັນຈຳນວນມາກມາຍກ່າຍກອງບິນມາແຕ່ພາກໃຕ້,ທະຍອຍກັນພັກພິງຢູ່ກາງດອນແລະແຄມໜອງເພື່ອໄຂ່ແລະອອກແມ່ແພ່ລູກ,ຫຼໍ່ລ້ຽງເຊື້ອແຊງ....

ປະຊາຊົນຕີເບດຖືເອົາໜອງຟ້າເປັນສັນຍາລັກແຫ່ງຄວາມງາມແລະຄວາມຜາສຸກ.ທາງລົດໄຟຊີງໄຮ--ຕີເບດໄດ້ເປີດໃຫ້ລົດທຽວ,ມັນໄດ້ອຳນວຍການສັນຈອນໄປມາຢ່າງສະດວກສະບາຍໄວວ່ອງກວ່າເກົ່າໃຫ້ຜູ້ຄົນທັງຫຼາຍ,ນາມູໂສທີ່ສົດສວຍແລະອຸດົມສົມບູນຈະອ້ານັບຮັບຕ້ອນຜູ້ມານະມັດສະການແລະແຂກຄົນຜູ້ມາທັດສະນາຈອນທ່ອງທ່ຽວຍິ່ງຫຼາຍກວ່າເກົ່າ,ເຮັດໃຫ້ຄົນທັງຫຼາຍແຕ່ງຕ່າງ ໆໃນໂລກສຳຜັດຄວາມງາມຄວາມຜາສຸກຂອງໜອງຟ້ານາມູໂສ.

# ກອງປະຊຸມໃຫຍ່ວິທະຍາຄານຂົງຈື້ໄດ້ໄຂຂຶ້ນທີ່ປັກກິ່ງເປັນຄັ້ງທຳອິດ

## 孔子学院大会首次在北京召开

孔子学院大会是中国在海外开设孔子学院以来召开的首次全球性会议。在为期 2 天的会议上，来自 3 8 个国家和地区的孔子学院和孔子课堂的代表会聚北京，共同探索中国语言和文化的推广之道，相互交流开办孔子学院的经验。

ກອງປະຊຸມໃຫຍ່ວິທະຍາຄານຂົງຈື້ໄດ້ໄຂຂຶ້ນທີ່ປັກກິ່ງ, ນີ້ເປັນກອງປະຊຸມລັກສະນະທົ່ວໂລກທີ່ໄຂຂຶ້ນເປັນຄັ້ງທຳອິດນັບແຕ່ຈີນໄດ້ຕັ້ງວິທະຍາຄານຂົງຈື້ຢູ່ນອກປະເທດເປັນຕົ້ນມາ, ຕໍ່ຈາກນັ້ນກອງປະຊຸມຈະໄຂຂຶ້ນປີລະຄັ້ງ. ໃນເວລາກອງປະຊຸມທີ່ກຳນົດສອງວັນນັ້ນ ມີຜູ້ແທນທີ່ມາຈາກວິທະຍາຄານຂົງຈື້ແລະຫ້ອງຮຽນຂົງຈື້ 38 ປະເທດແລະເຂດແຄວ້ນໄດ້ຊຸມນຸມພ້ອມກັນຄົ້ນຊອກຫາວທາງເຜີຍແຜ່ພາສາແລະວັດທະນະທຳຈີນ, ແລກປ່ຽນບົດຮຽນສ້າງຕັ້ງວິທະຍາຄານຂົງຈື້ເຊິ່ງກັນແລະກັນ.

ທ່ານເສັນຈີຫລີ ມຸຂະມົນຕີຈີນກ່າວເນັ້ນໃນກອງປະຊຸມວ່າ: ຈີນຈະຜ່ານເວທີວິທະຍາຄານຂົງຈື້ນີ້ ເພີ່ມທະວີການແລກປ່ຽນແລະຮ່ວມມືສາກົນ, ຮໍ່າຮຽນພາສາແລະວັດທະນະທຳນຳກັນ, ເສີມຂະຫຍາຍຄວາມເຂົ້າໃຈແລະມິດຕະພາບ, ອຸທິດກຳລັງເຫື່ອແຮງເພື່ອຊຸກຍູ້ສົ່ງເສີມສັນຕິພາບຂອງໂລກແລະຄວາມພັດທະນາ. ລັດຖະບານຈີນຍິນດີສະໜອງຄວາມສະດວກໃຫ້ແກ່ປະຊາຊົນບັນດາປະເທດຮໍ່າຮຽນພາສາຈີນແລະຮັບຮູ້ເຂົ້າໃຈວັດທະນະທຳຈີນ. ຕໍ່ໄປພາຍໜ້າ, ສປຈີນຈະສືບຕໍ່ຊຸກຍູ້ການສ້າງສັນວິ




ຄູອາຈານວິທະຍາຄານຂົງຈື້ທົ່ວໂລກຢ້ຽມຢາມຖິ່ນຖານບ້ານເກີດຂົງຈື້ 全球孔子学院教师探访孔子故里 新华社图



ນັກສຶກສາໄຕ້ຫວັນຊອກຫາກົກເຫງົ້າທີ່ບ້ານເກີດເມືອງເມັ່ງຈື້

台湾大学生孔孟故里寻根

ທະຍາຄານຂົງຈື້ກັບນັກປາດອາຈານພາຍໃນແລະຕ່າງປະເທດບົນຫຼັກການດັ່ງຕໍ່ໄປນີ້: ໜຶ່ງຄືທັງສອງກໍ່າສອງຝ່າຍສະໝັກຕົວ, ເພີ່ມທະວີການຮ່ວມມື, ພ້ອມກັນສ້າງສັນ, ຕັ້ງໂຮງຮຽນເປັນແບບມາດຖານ. ສອງຄືເຄົາລົບຕໍ່ກົດໝາຍບ້ານເມືອງຂອງປະເທດທີ່ຕັ້ງໂຮງຮຽນ, ນັບຖືຮີດຄອງປະເພນີຂອງທ້ອງຖິ່ນ, ຈັດວາງວິທີການອັນເໝາະສົມຕາມກໍລະນີເທສະທີ່ຕ່າງກັນ, ຕັ້ງໂຮງຮຽນແບບບໍ່ຕາຍຕົວ. ສາມຄືສະຫລຸບຖອດຖອນບົດຮຽນຢ່າງທ່ວງທັນເວລາ, ເຮັດໃຫ້ການສອນການຮຽນເປັນແບບມາດຖານ, ສ້າງລະບົບປະເມີນຄຸນະພາບໃຫ້ສົມບູນ.

ຕາມຕົວເລກສະຖິຕິຂອງກະຊວງສຶກສາທິການໄດ້ສະແດງໃຫ້ຮູ້ວ່າ: ການຮໍ່າຮຽນພາສາຈີນ ນັບມື້ນັບໄດ້ຮັບຄວາມເອົາໃຈໃສ່ຈາກຊຸມຊົນບັນດາປະເທດໃນໂລກ. ປະຈຸບັນ, ຈຳນວນຄົນທີ່ຮຽນພາສາຈີນດ້ວຍວິທີຕ່າງ ໆໃນນອກປະເທດລື່ນກາຍ 30 ລ້ານຄົນ, ມີມະຫາວິທະຍາໄລ 2500 ກວ່າແຫ່ງໃນ 100 ປະເທດກຳລັງສິດສອນພາສາຈີນ.

ເລີ່ມແຕ່ປີ 2004 ເປັນຕົ້ນມາ, ຈີນໄດ້ຕັ້ງ "ວິທະຍາຄານຂົງຈື້" ທີ່ບໍ່ຫວັງກຳໄລແຕ່ປະການໃດຢູ່ຕ່າງປະເທດ ໂດຍມີວັດຖຸປະສົງສິດສອນພາສາຈີນແລະຖ່າຍທອດວັດທະນະທຳຊາດຈີນ, ໄດ້ຮັບຄວາມເອົາໃຈໃສ່ຈາກຫຼາຍປະເທດແລະເຂດແຄ້ວນ, ມາຮອດປະຈຸບັນໄດ້ມີວິທະຍາຄານຂົງຈື້ແລະຫ້ອງຮຽນຂົງຈື້ 80 ຫຼັງໄດ້ຕັ້ງຫຼັກປັກຖານຢູ່ 36 ປະເທດແລະເຂດແຄ້ວນໃນໂລກ. ຍັງມີ 99 ອົງກອນໃນ 38 ປະເທດໄດ້ຍື່ນໃບຮ້ອງຂໍຕັ້ງໂຮງຮຽນດັ່ງກ່າວເປັນທາງການ. ວິທະຍາຄານຂົງຈື້ແຕ່ລະແຫ່ງໄດ້ປະສານສົມທົບກັບພາກຕົວຈິງ, ເສີມຂະຫຍາຍທ່າແຮງຂອງຕົນຢ່າງເຕັມປ່ຽມ, ໄດ້ກາຍເປັນຮູບແບບຕັ້ງໂຮງຮຽນທີ່ມີເອກະລັກຈຳເພາະຂອງໃຜລາວ, ໄດ້ສະສົມບົດຮຽນປະສົບການອັນແນ່ນອນ, ມັນເປັນສະຖານທີ່ສຳຄັນຂອງບັນດາປະເທດຮໍ່າຮຽນພາສາແລະວັດທະນະທຳຊາດຈີນແລະສຶບຮູ້ປະເທດຈີນໃນຍຸກສະໄໝ, ໄດ້ຮັບຄວາມຊົມເຊີຍທົ່ວ ໆໄປຂອງບັນດາວົງການສັງຄົມປະຈຳທ້ອງຖິ່ນ.

ປີ 2006 ສປຈີນໄດ້ເຊັນສັນຍາຈຳນວນ(ຈຸດສິດສອນ)ວິທະຍາຄານຂົງຈື້ກັບຕ່າງປະເທດອາດຈະເຖິງ 100 ແຫ່ງ. ປະຈຸບັນຈີນໄດ້ກາຍເປັນຫຼາຍຮູບແບບສ້າງຕັ້ງວິທະຍາຄານຂົງຈື້ໃນເບື້ອງຕົ້ນເຊັ່ນ: ການຮ່ວມມືໂຮງຮຽນຊັ້ນສູງລະຫວ່າງຈີນກັບຕ່າງປະເທດ, ການຮ່ວມມືລະຫວ່າງລັດຖະບານຈີນກັບຕ່າງປະເທດແລະການຮ່ວມມືລະຫວ່າງວິສາຫະກິດຕ່າງປະເທດກັບຝ່າຍຈີນເປັນຕົ້ນ.



ນັກຊ່ຽວຊານສອນພາສາຈີນມາຈາກຕ່າງປະເທດ ຖ່າຍຮູບຢູ່ໜ້າຮູບຂົງຈື້ທີ່ຊີປີ

来自海外的汉语教学专家在曲阜孔子像前留影　　　新华社图

# ຜະລິດຕະພັນທີ່ຮັບຮອງອາຫານສີຂຽວຂອງຈີນເກືອບ 10 ພັນຊະນິດ

## 中国绿色食品认证产品近万种

中国农业部农产品质量安全中心负责人表示，中国绿色食品生产企业总数已达3695家，认证产品总数达到9728个。

ຜູ້ຮັບຜິດຊອບສູນຄຸນະພາບຜະລິດຕະພັນກະສິກຳປອດໄພຂອງກະຊວງກະສິກຳຈີນສະແດງວ່າ:ຍອດຈຳນວນວິສາຫະກິດອາຫານສີຂຽວຂອງຈີນມີຮອດ 3695 ແຫ່ງ,ຍອດຈຳນວນຜະລິດຕະພັນທີ່ຮັບຮອງມີຮອດ 9728 ຊະນິດ.

ອາຫານສີຂຽວແມ່ນໝາຍເຖິງຜະລິດຕະພັນກະສິກຳແລະປຸງແຕ່ງທີ່ບໍລິໂພກຊຶ່ງຜະລິດຕາມມາດຖານເຕັກນິກກຳນົດ,ສະພາບແວດລ້ອມຂອງແຫຼ່ງຜະລິດດີເລີດແລະທຳການຄວບຄຸມຄຸນະພາບໂດຍຕະຫຼອດ ປາສະຈາກມົນລະພິດ,ປອດໄພມີຄຸນະພາບຍອດຢ້ຽມ.ປະເທດຈີນພັດທະນາອຸດສາຫະກຳອາຫານສີຂຽວເລີ່ມແຕ່ປີ1990,ປະຈຸບັນໄດ້ກ້າວສູ່ເສັ້ນທາງທີ່"ຮັບຮອງຄຸນະພາບສົມທົບກັບການຄຸ້ມຄອງພິສູດເຄື່ອງໝາຍການຄ້າ",ແລະໄດ້ສ້າງຍີ່ຫໍ້ສິ່ງຍອດຍິ່ງຂອງຜະລິດຕະພັນກະສິກຳທີ່ມີຜົນສະທ້ອນແລະມີລະດັບຊື່ສຽງຂ້ອນຂ້າງສູງ.

ສປຈີນພັດທະນາອາຫານສີຂຽວແມ່ນເອົາການອະນຸຮັກສິ່ງແວດລ້ອມນິເວດກະສິກຳແລະເສີມສ້າງສຸຂະພາບຂອງຜູ້ບໍລິໂພກໃຫ້ແຂງແຮງເປັນມະໂນຄະຕິຕົ້ນຕໍໂດຍບໍ່ໄດ້ມີຈຸດປະສົງເພື່ອເກງກຳໄລ,ນຳໃຊ້ກົນໄກພັດທະນາທີ່ມີລັດຖະບານຊຸກຍູ້ສົມທົບກັບການຊັກຈູງຂອງຕະຫຼາດ.ອາຫານສີຂຽວມີການຄວບຄຸມປັດໄຈຄວາມປອດໄພ,ທັງເນັ້ນໜັກເຖິງຜະລິດຕະພັນມີຄຸນະພາບຍອດຢ້ຽມທັງມີທາດບຳລຸງພ້ອມ,ມາດຖານຄວາມປອດໄພຂອງຄຸນະພາບຕ້ອງບັນລຸເຖິງລະດັບກ້າວໜ້າຂອງປະເທດທີ່ຈະເລີນ,ເຈາະຕະຫຼາດຢູ່ໂຕເມືອງໃຫຍ່ແລະຂະໜາດກາງພາຍໃນປະເທດແລະຕະຫຼາດໂລກເພື່ອຕອບໜອງຄວາມຮຽກຮ້ອງຕ້ອງການຊົມໃຊ້ຂອງລະດັບຂັ້ນສູງ.

ໃນປະຈຸບັນ,ອຸດສາຫະກຳອາຫານສີຂຽວຂອງຈີນໄດ້ຮັກສາທ່ວງທ່າຂະຫຍາຍຕົວຢ່າງວ່ອງໄວແລະສົມບູນຕະຫຼອດມາ.ມາຮອດທ້າຍປີ 2005,ຍອດປະລິມານວັດຖຸອາຫານສີຂຽວທີ່ຜະລິດປະຈຳປີ 63 ລ້ານໂຕນ,ມູນຄ່າຈຳໜ່າຍຜະລິດຕະພັນປະຈຳປີ 103 ຕື້ຢວນ,ມູນຄ່າສົ່ງອອກ 16.2 ຮ້ອຍລ້ານໂດລາອາເມລິກາ.ເນື້ອທີ່ດິນນາ,ທົ່ງຫຍ້າ,ປ່າໄມ້ແລະເຂດນ່ານນ້ຳທີ່ສປຈີນດຳເນີນການຕິດຕາມກວດກາສະພາບແວດລ້ອມນັ້ນມີຮອດ 9800 ໝື່ນມູ(6.53 ລ້ານເຮັກຕາ).



# 中国大学生信用卡面世

首张针对大学生群体的民族品牌信用卡——龙卡大学生卡在中国上海面世。此次中国建设银行与中国银联合作发行龙卡大学生卡，不仅将银联品牌的信用卡提供给高校学生，更将国际流行的信用消费意识引入高等学府。

# ບັດ L/C ນັກສຶກສາຈີນໄດ້ພິມອອກເຜີຍແຜ່

ບັດ ແອນ/ຊີ ຍີ່ຫໍ້ຊົນຊາດທຳອິດສຳລັບໝູ່ນັກສຶກສາຄື: ບັດແອນ/ຊີ ມັງກອນສຳລັບນັກສຶກສາໄດ້ພິມອອກເຜີຍແຜ່ທີ່ຊຽງໄຮສປຈີນ.

ທະນາຄານສ້າງສາແຫ່ງປະເທດຈີນກັບທະນາຄານປະສົມຈີນຮ່ວມມືພິມຈຳໜ່າຍ ບັດແອນ/ຊີມັງກອນສຳລັບນັກສຶກສາໃນເທື່ອນີ້ບໍ່ພຽງແຕ່ນຳເອົາບັດແອນ/ຊີຍີ່ຫໍ້ທະນາຄານປະສົມສະໜອງໃຫ້ນັກສຶກສາໂຮງຮຽນຊັ້ນສູງເທົ່ານັ້ນຍັງນຳເອົາສະຕິຊົມໃຊ້ສິນເຊື່ອທີ່ນິຍົມກັນສາກົນເຂົ້າສູ່ໂຮງຮຽນສຶກສາຊັ້ນສູງອີກ.

ລວດລາຍໜ້າບັດຂອງບັດແອນ/ຊີມັງກອນສຳລັບນັກສຶກສາມີຫົວຂໍ້ເປັນໝວກບັນດິດທີ່ສັນຍາລັກຜົນສຳເລັດການຮຽນສູງສຸດ,ປະກອບດ້ວຍສີສັນ 4 ຢ່າງເປັນຊຸດ:ສີແສດສັນຍາລັກແສງຕາເວັນ,ສີຂຽວສະແດງເຖິງການກິລາ,ສີບົວແກມອິດສີ່ງຂ່າວຄຸນທາດແລະສີດຳສະແດງເຖິງບຸກຄະລິກະພາບອັນແກ່ນກ້າຢ່າງຊັດເຈນ.ນັກສຶກສາຜ່ານບັດແອນ/ຊີ(ບັດເຄຣດິດ)ນີ້ອາດຈະເພີ່ມຄວາມຮູ້ດ້ານການເງິນ,ບົ່ມສ້າງທັກສະຄຸ້ມຄອງການເງິນແລະສ້າງສົມຄວາມເຊື່ອຖືປະຈຳຕົວເພື່ອກໍ່ສ້າງພື້ນຖານພາລະກິດທີ່ພັດທະນາສັງຄົມໃນອະນາຄົດ,ບັດເຄຣດິດນີ້ຍັງສະໜອງຜົນປະໂຫຍດຊົມໃຊ້ຕ່າງ ໆ ໃຫ້ແກ່ນັກສຶກສານັບທັງ:ບຸລິມະສິດຊຳລະເງິນເປັນງວດເວລາຊື້ເປັນໝູ່ຄະນະຂອງໂຮງຮຽນ,ບຸລິມະສິດບໍລິການຖອນເອົາເງິນສົດແລະເງິນຝາກຕ່າງຖິ່ນໂດຍບໍ່ຕ້ອງເສຍຄ່າເປັນຕົ້ນ.ອີກດ້ານໜຶ່ງນັກສຶກສາຜູ້ຖືບັດເວລາຮຽນຈົບຊັ້ນຍັງຈະໄດ້ຮັບບົດລາຍງານເຄຣດິດທີ່ມີສັກສິດຊຶ່ງທະ




ນາຄານສ້າງສາອອກໃຫ້.

ຜູ້ວ່າການທະນາຄານສ້າງສາແຫ່ງປະເທດຈີນສະແດງວ່າ:ທະນາຄານສ້າງສາຈີນໄດ້ເອົາໃຈໃສ່ການບົ່ມສ້າງຄວາມເຊື່ອຖືຂອງນັກຮຽນໂຮງຮຽນສຶກສາຊັ້ນສູງຢູ່ເລື້ອຍມາ,ຕັ້ງໜ້າປະສານສົມທົບກັບການສຶກສາຄຸນທາດຂອງໂຮງຮຽນຊັ້ນສູງ.ທະນາຄານສ້າງສາຈີນກັບທະນາຄານປະສົມຈີນຮ່ວມມືເຜີຍແຜ່ຜະລິດຕະພັນ ບັດແອນ/ຊີມັງກອນສຳລັບນັກສຶກສາ,ມັນເປັນຂີດໝາຍບັດເຄຣດິດມັງກອນມີບາດກ້າວສຳຄັນໃນທາງດ້ານຜະລິດຕະພັນມີການປະດິດສ້າງອັນໃໝ່ຢູ່ຕະຫຼາດນັກສຶກສາ.ທະນາຄານປະສົມຈີນທີ່ເປັນອົງການຈັດຕັ້ງບັດທະນາຄານ ຍິນດີສະໜອງການບໍລິການເປັນບຸກຄະລິກະພາບແກ່ຜູ້ຖືບັດທຸກປະເພດໂດຍຜ່ານການສ້າງຜະລິດຕະພັນແລະການບໍລິການອັນໃໝ່ເພື່ອຊ່ວຍເຫຼືອຜູ້ຖືບັດໂດຍສະເພາະແມ່ນໝຸ່ມນັກສຶກສາບັນລຸຄຸນຄ່າຂອງຊີວິດ.



ຖ້ຳຫີນປະຕູລອງເຫີນານ 河南龙门石窟



# ຖ້ຳຫີນໃຫຍ່ທັງ 4

ເຈົ້າໜ້າທີ່ຮັບຜິດຊອບກົມທ່ອງທ່ຽວເມືອງໂຫຼຢາງແຂວງເຫີນານ, ກົມທ່ອງທ່ຽວເມືອງຕາຖົງແຂວງຊານຊີ, ກົມທ່ອງທ່ຽວເມືອງຕຸນຮວາງການສູ, ກົມທ່ອງທ່ຽວເມືອງທຽນຊວຍແຂວງການສູແລະຖ້ຳຫີນຫຼົງເໝິນ, ຖ້ຳຫີນຢູນກັງ, ຖ້ຳຫີນຕຸນຮວາງແລະຖ້ຳຫີນໄມຈີຊານໃນປະເທດຈີນໄດ້ຮ່ວມມືກັນຈັດກອງປະຊຸມສຸດຍອດເຜີຍແຜ່ແນະນຳການທ່ອງທ່ຽວຖ້ຳຫີນໃຫຍ່ທັງ 4 ໃນເມືອງຈີນ.ລະຫວ່າງແປດຝ່າຍໄດ້ເຊັນສັນຍາຕົກລົງຮ່ວມກັນໂຄສະນາເຜີຍແຜ່ສາຍທາງທ່ອງທ່ຽວຖ້ຳຫີນໃຫຍ່ທັງ

## 中国四大石窟联手打造区域旅游品牌

中国甘肃敦煌莫高窟、麦积山石窟、山西大同云冈石窟和河南龙门石窟等中国四大石窟将联手打造精品旅游线路，开发区域旅游品牌。

# ເມືອງຈີນຮ່ວມມືເສີມສ້າງຍີ່ຫໍ້ທ່ອງທ່ຽວພາກພື້ນ



ຄູຫາໂມງເກົາຖຸນຮວາງການສູ  甘肃敦煌莫高窟

4 ,ພ້ອມກັນເສີມສ້າງຍີ່ຫໍ້ທ່ອງທ່ຽວພາກພື້ນ,ຊຸກຍູ້ສົ່ງເສີມການພັດທະນາທຸລະກິດທ່ອງທ່ຽວຂອງ 4 ຕົວເມືອງດັ່ງກ່າວ.

ສັນຍາລະບຸໄວ້ວ່າ ສ້າງຕັ້ງເຂດທ່ອງທ່ຽວຮ່ວມມືທີ່ປາສະຈາກສິ່ງອຸປະສັກຂອງໂຕເມືອງແຫ່ງສະຖານທີ່ຕັ້ງຖ້ຳຫີນໃຫຍ່ທັງ 4 ໃນເມືອງຈີນ,ຮ່ວມກັນພັດທະນາຜະລິດຕະພັນທ່ອງທ່ຽວ ,ເອົາການເສີມສ້າງ "ສາຍທາງທ່ອງທ່ຽວສິ່ງຍອດຍິ່ງຂອງຖ້ຳຫີນໃຫຍ່ທັງ 4 ໃນເມືອງຈີນ" ເປັນຫົວຂໍ້,ແຕ່ລະໂຕເມືອງຕ່າງກໍ່ເຜີຍແຜ່ຈຸດຊົມວິວທ່ອງທ່ຽວສິ່ງຍອດຍິ່ງຂອງໃຜລາວ,ພ້ອມກັນເຜີຍແຜ່ສາຍທ່ອງທ່ຽວສິ່ງຍອດຍິ່ງທີ່ຂ້າມເຂດແຄວ້ນ. 4 ຕົວເມືອງຕ້ອງສ້າງເງື່ອນໄຂສຸດຄວາມສາມາດຕາມຄວນ,ຈັດສັນການພົວພັນໃຫ້ຮຽບຮ້ອຍດີ,ວາງນະໂຍບາຍບຸລິມະສິດທີ່ດຶງດູດນັກທຸລະກິດທັດສະນາຈອນ,ສ້າງສະພາບແວດລ້ອມອັນດີໃຫ້ແຫຼ່ງແຂກຄົນທີ່ຈໍລະຈອນໄປມາ.

ສັນຍາມັດໝາຍກັນວ່າ:ເພີ່ມທະວີຕົວເມືອງຮ່ວມກັນຊຸກຍູ້ການຈຳໜ່າຍ,ສ້າງພາບພົດກວມລວມຂອງການທ່ອງທ່ຽວພາກພື້ນແລະຍີ່ຫໍ້ເປັນເອກະພາບ. ໂດຍຖືເອົາຮູບການໝູ່ປະສົມຂອງຕົວເມືອງເຂດທ່ອງທ່ຽວຮ່ວມມືເຂົ້າຮ່ວມງານນິທັດສະການທ່ອງທ່ຽວສາກົນ,ອັນແນໃສ່ຮ່ວມກັນຈັດງານເຜີຍແຜ່ແນະນຳຫົວຂໍ້ສະເພາະການທ່ອງທ່ຽວພາຍໃນປະເທດແລະລະຫວ່າງຊາດ,ຍາດແຍ່ງໃຫ້ຕົວເມືອງໃນພາກພື້ນຢ່າງໜ້ອຍແຕ່ລະປີຮ່ວມກັນຈັດການເຄື່ອນໄຫວເຜີຍແຜ່ແນະນຳພາຍໃນແລະລະຫວ່າງຊາດຄັ້ງໜຶ່ງ.

ຖ້ຳຫີນພຸດທະສາສະໜາເມືອງຈີນເລີ່ມເຈາະມາປະມານຄ.ສ.ສະຕະວັດທີ 3 ,ນິຍົມກັນຫຼາຍສະຕະວັດທີ 5 -8 .ໃນນັ້ນ,ຖ້ຳໂມເກົາຕຸນຮວາງ,ຖ້ຳຫີນໄມຈີຊານ,ຖ້ຳຫີນຢູນກັງຕາຖົງແຂວງຊານຊີແລະຖ້ຳຫີນຫຼົງເໝີນແຂວງເຫີນານຖືກຍົກຍ້ອງວ່າເປັນຖ້ຳຫີນໃຫຍ່(ຫຼືຄູຫາໃຫຍ່)ທັງ 4 ໃນເມືອງຈີນ.



ຖ້ຳຫີນໄມຈີຊານ  麦积山石窟  图片：CFP



## 中国向 150 多个国家提供政府奖学金名额

根据中国与有关国家之间签订的教育交流协议和计划，中国国家留学基金管理委员会目前已经向150多个国家提供中国政府奖学金名额。

# ສປຈີນສະໜອງຈຳນວນທຶນການສຶກສາລັດຖະບານແກ່ 150 ກວ່າປະເທດ

ອີງຕາມແຜນການແລະສັນຍາແລກປ່ຽນການສຶກສາທີ່ໄດ້ເຊັນກັນລະຫວ່າງຈີນກັບປະເທດທີ່ກ່ຽວຂ້ອງ,ມາຮອດປະຈຸບັນຄະນະກຳມະການຄຸ້ມຄອງກອງທຶນສຶກສາຢູ່ຕ່າງປະເທດແຫ່ງຊາດຈີນໄດ້ສະໜອງຈຳນວນທຶນການສຶກສາລັດຖະບານແກ່ 150 ກວ່າປະເທດແລ້ວ.

ໃນມໍ່ ໆ 10 ປີມານີ້,ຂະໜາດທຶນການສຶກສາຂອງລັດຖະບານຈີນທີ່ອຸດໜູນນັກສຶກສາທີ່ມາຮຽນຢູ່ປະເທດຈີນໄດ້ຂະຫຍາຍສ່ວນຄູ່ປີ,ແຕ່ລະປີຈຳນວນນັກສຶກສາທີ່ມາຮຽນຢູ່ຈີນໄດ້ຮັບທຶນການສຶກສາຈາກລັດຖະບານຈີນນັ້ນ ນັບແຕ່ 4000 ກວ່າຄົນຂະຫຍາຍຕົວຮອດ 7000 ກວ່າຄົນ.

ມາຮອດທ້າຍປີ 2005,ນັກສຶກສາຕ່າງປະເທດປະເພດຕ່າງຕ່າງທີ່ມາສຶກສາຢູ່ປະເທດຈີນມີຮອດ 1 ແສນ 4 ໝື່ນ ກວ່າຄົນ,ພວກເຂົາເຈົ້າມາຈາກ 179 ປະເທດແລະເຂດແຄວ້ນ.

ຕໍ່ໄປພາຍໜ້າ,ສປຈີນຍັງຈະຂະຫຍາຍຂະໜາດນັກສຶກສາຕ່າງປະເທດມາສຶກສາຢູ່ປະເທດຈີນຕື່ມອີກແລະຂະຫຍາຍຊ່ອງທາງໄປສຶກສາຢູ່ຕ່າງປະເທດໃຫ້ກວ້າງອອກ,ບູລະນະແລະດັດແກ້ວຽກງານຄຸ້ມຄອງການສຶກສາຢູ່ຕ່າງປະເທດໃຫ້ສົມບູນຢູ່ສະເໝີ.ພ້ອມກັນນັ້ນຍັງຈະຕັ້ງໜ້າບຸກເບີກຊ່ອງທາງໃໝ່ທີ່ມາສຶກສາຢູ່ປະເທດຈີນກັບລັດຖະບານຕ່າງປະເທດແລະໂຮງຮຳໂຮງຮຽນຕະຫຼອດເຖິງອົງກອນພາກສ່ວນກ່ຽວຂ້ອງປະເພດຕ່າງ ໆ ທຸກຂັ້ນຂອງຕ່າງປະເທດ.

ເລີ່ມແຕ່ປີ 2003 ມານີ້ ຄະນະກອງທຶນໄປສຶກສາຢູ່ຕ່າງປະເທດແຫ່ງຊາດຈີນໄດ້ຮັບການມອບໝາຍຕາມລຳດັບ,ຮັບຜິດຊອບຄຸ້ມຄອງ "ໂຄງການກອງສຶກສາຝຶກອົບຮົມຂອງຫວຽດນາມ" , "ໂຄງການຄະນະສຶກສາຊັ້ນສູງຂອງປາກີສະຖານ" "ໂຄງການຄະນະຂ້າລາຊະການຝ່າຍພົນລະເຮືອນຂອງປະເທດໄທ" ແລະ "ໂຄງການຂອງລັດຖະບານຕົງຊານີ" ເປັນຕົ້ນເຊິ່ງເປັນໂຄງການທຶນການສຶກສາທີ່ລັດຖະບານຕ່າງປະເທດຕັ້ງໄວ້ເພື່ອອຸດໜູນນັກສຶກສາຂອງປະເທດຕົນທີ່ມາສຶກສາຢູ່ປະເທດຈີນ.



# ຈີນໝູນໃຊ້ຮູບເງົາກາຕູນແລະພາບເຍີ້ຍເຜີຍແຜ່ຄວາມຮູ້ດ້ານມໍລະດົກວັດທະນະທຳແກ່ຊາວໜຸ່ມເຍົາວະຊົນ

ກາງວາງສະແດງຮູບແຕ້ມກາຕູນໂຕເມືອງສາກົນທີ່ນານກິ່ງ 南京国际城市动漫画展

## 中国借动漫向青少年普及文化遗产知识

动漫是当前最流行的视觉传播形式，特别为青少年所喜闻乐见，具有生动而强烈的表现力。中国将通过时尚的动漫作品在青少年中普及文化遗产知识。

ຈີນຈະໝູນໃຊ້ຜະລິດຕະພັນກາຕູນແລະພາບເຍີ້ຍທີ່ສະໄໝນິຍົມເຜີຍແຜ່ຄວາມຮູ້ດ້ານມໍລະດົກວັດທະນະທຳພາຍໃນຊາວໜຸ່ມເຍົາວະຊົນ,ຜັນຂະຫຍາຍວັດທະນະທຳມູນເຊື້ອຈີນ.

ການປະກວດຜະລິດພັນກາຕູນແລະພາບເຍີ້ຍຄັ້ງໃຫຍ່ສຳລັບມໍລະດົກວັດທະນະທຳຈີນຄັ້ງປະຖົມມະເລີກ ໂດຍກົມບູຮານວັດຖຸແຫ່ງຊາດຈີນເປັນເຈົ້າພາບຈັດທຳ,ໃນໄລຍະປະກວດເປັນເວລາຕັ້ງ 3 ເດືອນ,ຈະຮິບໂຮມເອົາຜະລິດພັນກາຕູນແລະພາບເຍີ້ຍທີ່ມີຈິດສຳນຶກໃໝ່ໃນຫົວຂໍ້ທາງມໍລະດົກວັດທະນະທຳນຳຜູ້ຊົງຄຸນວຸດທີບັນດາວົງການໃນສັງຄົມທີ່ຢູ່ສອງຝັ່ງຊ່ອງທະເລ,ຜ່ານການປະກວດພົນສຸດທ້າຍມີ 55 ປະເພດລາງວັນ.

ເຈົ້າໜ້າທີ່ຮັບຜິດຊອບຫ້ອງການກົມບູຮານວັດຖຸແຫ່ງຊາດຈີນກ່າວວ່າ:ປະເທດຈີນໄດ້ມີມໍລະດົກວັດທະນະທຳແລະທຳມະຊາດໃນໂລກ 31 ແຫ່ງ,ມໍລະດົກວັດທະນະທຳອັນມັ່ງມູນທີ່ສະສົມຕົກຄ້າງມາຈາກອະລິຍະທຳ 5 ພັນປີນັ້ນໄດ້ສະໜອງແຫຼ່ງວັດຖຸດິບທີ່ບໍ່ບົກແຫ້ງແກ່ຮູບເງົາກາຕູນແລະພາບເຍີ້ຍ.ການເຄື່ອນໄຫວດັ່ງກ່າວທັງສາມາດສວຍໃຊ້ຮູບການກາຕູນແລະພາບເຍີ້ຍສະແດງພະລັງສະເໜ່ຂອງມໍລະດົກແລະວັດທະນະທຳມູນເຊື້ອຈີນ,ແລະນຳໃຊ້ອະລິຍະທຳຊາດຈີນທີ່ໄພສານ ຊຸກຍູ້ຊັບສິນກາຕູນແລະພາບເຍີ້ຍພັດທະນາໄປຢ່າງວ່ອງໄວ.

ຮູບເງົາກາຕູນແລະພາບເຍີ້ຍເປັນຮູບການຖ່າຍທອດສຳຜັດດ້ວຍຕາທີ່ນິຍົມກັນໃນສະເພາະໜ້ານີ້,ໂດຍສະເພາະແມ່ນຊາວໜຸ່ມເຍົາວະຊົນນິຍົມຊອບກັນຫຼາຍ,ເພາະມັນມີບົດບາດສະແດງທີ່ມີຊີວິດຊີວາແລະແຮງກ້າ.ການສົມທົບກັນລະຫວ່າງມໍລະດົກວັດທະນະທຳກັບກາຕູນພາບເຍີ້ຍຈະເຮັດໃຫ້ຊັບສິນທີ່ມີຄຸນຄ່າແລະຊີວະພະລັງທັງສອງນີ້ບັງເກີດການກະຕຸກຊຸກຍູ້ກັນແລະບັນລຸຄວາມກ້າວໜ້າພ້ອມກັນ.

# 《ບັນຊີລາຍຊື່ມໍລະດົກໂລກ》ເພີ່ມສະມາຊິກໃໝ່



ບ່ອນພັກພິງຂອງໝີແພນດາເສສວນ　四川大熊猫栖息地　新华社图

## 《世界遗产名录》增加新成员

联合国教科文组织在立陶宛首都维尔纽斯举行的第30届世界遗产委员会，审核了包括中国安阳商代遗址、四川大熊猫栖息地在内的37个世界遗产地候选项目，为著名的《世界遗产名录》增加一批新成员。

ອົງການອຸຍແນສໂກສະຫະປະຊາຊາດໄດ້ຈັດການປະຊຸມກຳມາທິການມໍລະດົກໂລກສະໄໝທີ 30 ຢູ່ Vilnious ນະຄອນຫຼວງລິດຕະວາ,ໄດ້ກວດສອບລາຍການຄອຍເລືອກເຟັ້ນອັນມີສະຖານທີ່ມໍລະດົກໂລກ 37 ແຫ່ງນັບທັງບູຮານສະຖານສະໄໝຊາງທີ່ອານຢາງຈີນແລະບ່ອນພັກພິງອາໄສຂອງໝີແພນດາທີ່ແຂວງເສຊວນຈີນ,ເພື່ອຈະໄດ້ເພີ່ມສະມາຊິກໃໝ່ຈຳນວນໜຶ່ງແກ່ 《ບັນຊີລາຍຊື່ມໍລະດົກໂລກ》 ທີ່ລືຊື່.

ລາຍການມໍລະດົກກຽມເລືອກເຟັ້ນ 37 ແຫ່ງນີ້ນັບທັງມໍລະດົກວັດທະນະທຳ 27 ແຫ່ງ,ມໍລະດົກທຳມະຊາດ 8 ແຫ່ງແລະມໍລະດົກຄວບຄູ່ວັດທະນະທຳກັບທຳມະຊາດ 2 ແຫ່ງ,ໃນນັ້ນມີ 3 ແຫ່ງເປັນລາຍການຂ້າມຊາດ.

ການປະຊຸມສະໄໝນີ້ ຍັງສືບຕໍ່ປະເມີນຜົນຕໍ່ສະພາບອະນຸຮັກມໍລະດົກໂລກທີ່ເກືອບສູນຫາຍໃນປະຈຸບັນ,ພ້ອມທັງຕົກລົງເພີ່ມແລະຫລຸດລາຍການໃນ 《ບັນຊີລາຍຊື່ມໍລະດົກໂລກ》.ຂໍ້ປະເດັນອີກຂໍ້ໜຶ່ງຂອງການປະຊຸມຄືະຈະປົກປັກຮັກສາມໍລະດົກໂລກດ້ວຍປະການໃດພາຍໃຕ້ກໍລະນີພູມອາກາດປ່ຽນແປງ.

ອະນຸຮັກມໍລະດົກໂລກແມ່ນໜຶ່ງໃນແຜນການທີ່ມີຜົນສະທ້ອນຢ່າງຍິ່ງຂອງອົງການອຸຍແນັສໂກສະຫະປະຊາຊາດ.ນັບຕັ້ງແຕ່ປີ 1972 ອົງການອຸຍແນັສໂກສະຫະປະຊາຊາດໄດ້ຜ່ານ《ສົນທິສັນຍາອະນຸຮັກມໍລະດົກວັດທະນະທຳແລະທຳມະຊາດໃນໂລກ》ເປັນຕົ້ນມາ,ໄດ້ມີ 182 ປະເທດແລະເຂດແຄວ້ນເຂົ້າຮ່ວມສົນທິສັນຍາດັ່ງກ່າວ,ມີມໍລະດົກ 812 ແຫ່ງຂອງ 137 ປະເທດແລະເຂດແຄວ້ນຖືກຮັບຮອງບັນຈຸເຂົ້າ 《ບັນຊີລາຍຊື່ມໍລະດົກໂລກ》,ໃນນັ້ນມີມໍລະດົກວັດທະນະທຳ 628 ແຫ່ງ,ມໍລະດົກທຳມະຊາດ 160 ແຫ່ງ,ມໍລະດົກຄວບຄູ່ວັດທະນະທຳແລະທຳມະຊາດ 24 ແຫ່ງ.ສປຈີນເຂົ້າຮ່ວມ 《ສົນທິສັນຍາອະນຸຮັກມໍລະດົກວັດທະນະທຳແລະທຳມະຊາດໃນໂລກ》 ໃນປີ 1985,ມາຮອດປະຈຸບັນໄດ້ມີມໍລະດົກວັດທະນະທຳແລະທຳມະຊາດ 31 ແຫ່ງຖືກຮັບຮອງບັນຈຸເຂົ້າ《ບັນຊີລາຍຊື່ມໍລະດົກໂລກ》ແລ້ວ.



# ປະເທດກໍາລັງພັດທະນາຄວນວາງນະໂຍບາຍ ປະຕິຮູບທີ່ສອດຄ່ອງກັບສະພາບປະເທດ

## 发展中国家应制定符合国情的改革政策

联合国发布的有关世界经济概览的年度报告指出，发展中国家应更加自主地制定符合本国国情的经济改革政策，这样才有利于经济稳步增长，有利于缩小全球收入差距。

ບົດລາຍງານປະຈໍາປີກ່ຽວກັບບົດສັງເກດກວມລວມເສດຖະກິດຮອບໂລກທີ່ສະຫະປະຊາຊາດປະກາດຊີ້ອອກວ່າ:ປະເທດກໍາລັງພັດທະນາຍິ່ງຄວນເປັນເຈົ້າການວາງນະໂຍບາຍປະຕິຮູບເສດຖະກິດທີ່ສອດຄ່ອງກັບສະພາບປະເທດຂອງຕົນ,ມີແຕ່ເຮັດແນວນີ້ຈຶ່ງມີຜົນອໍານວຍແກ່ເສດຖະກິດເຕີບໂຕຢ່າງໝັກແໜ້ນ ແລະມີຜົນດີຕໍ່ການຫລຸດຜ່ອນຄວາມແຕກໂຕນກັນລະຫວ່າງລາຍຮັບຂອງທົ່ວໂລກ.

ບົດລາຍງານກ່າວວ່າ:ເມື່ອເບິ່ງກວມລວມແລ້ວ,ຄວາມແຕກໂຕນກັນລະຫວ່າງລາຍຮັບຂອງໂລກຍັງຄົງໝັກໜ່ວງທີ່ສຸດ ແລະປະກົດມີທ່ວງທ່າຂະຫຍາຍກວ້າງອອກ,ມູນເຫດຕົ້ນຕໍຄື:ໄລຍະ 50 ປີກ່ອນນີ້ລາຍຮັບຂອງປະເທດອຸດສາຫະກໍາໄດ້ຖີບສູງຂຶ້ນຢ່າງໝັກແໜ້ນ,ກົງກັນຂ້າມ,ຫຼາຍປະເທດກໍາລັງພັດທະນາບໍ່ໄດ້ເຮັດເຖິງຂັ້ນດັ່ງກ່າວ.

ບົດລາຍງານຍັງກ່າວວ່າ:ຄົນທັງຫຼາຍຍັງຮັບຮູ້ໂດຍທົ່ວໄປວ່າ,ອົງກອນທີ່ມີປະສິດທິພາບສູງແລະການຄຸ້ມຄອງເປັນຢ່າງດີ ມີຄວາມສໍາຄັນຍິ່ງຕໍ່ເສດຖະກິດເຕີບໂຕ,ແຕ່ວ່າ ຈະດໍາເນີນການປະຕິຮູບຢ່າງຂະໜາດໃຫຍ່ໄວວານັ້ນ ກໍ່ບໍ່ແນ່ວ່າຈະມີຜົນດີຕໍ່ເສດຖະກິດເຕີບໂຕ,ອາດຈະນໍາມາຜົນປະໂຫຍດເປັນໄລຍະສັ້ນທໍ່ນັ້ນ.ບົດຮຽນຂອງຈີນແລະຫວຽດນາມໄດ້ສະແດງໃຫ້ເຫັນວ່າ:ດໍາເນີນນະໂຍບາຍປະຕິຮູບທີ່ໝັ້ນທ່ຽງແລະຄ່ອຍ ໆ ກ້າວໄປແມ່ນມີປະສິດທິຜົນທີ່ສຸດສໍາລັບກະຕຸກຊຸກຍູ້ເສດຖະກິດເຕີບໂຕດ້ວຍບາດກ້າວໝັກແໜ້ນແລະຍືນຍົງ.ບົດລາຍງານຍັງໝັ້ນໃຈຕໍ່ການຊ່ວຍເຫຼືອພັດທະນາທາງການມີຄວາມສໍາຄັນສໍາລັບຊຸກຍູ້ເສດຖະກິດໃຫ້ພັດທະນາຂະຫຍາຍຕົວຢ່າງໝັ້ນທ່ຽງແລະເປັນໄລຍະຍາວອີກດ້ວຍ.



ທ່ານເຈຍຊິ້ງລິນປະທານສະພາປຶກສາການເມືອງຈີນພົບປະທ່ານສີສະຫວັດ ແກ້ວບຸນພັນ ປະທານແນວລາວສ້າງຊາດທີ່ຫໍສະພາປະຊາຊົນປັກກິ່ງ

中国政协主席贾庆林在北京人民大会堂会见了老挝建国战线主席西沙瓦 · 乔本潘　　新华社图

**贾庆林、李长春会见老挝建国战线主席西沙瓦・乔本潘**

中国政协主席贾庆林、中共中央政治局常委李长春分别在北京人民大会堂会见了老挝建国战线主席西沙瓦・乔本潘。

# ທ່ານເຈຍຊິ້ງລິນແລະລີສາງຊຸນພົບປະທ່ານສີສະຫວາດ ແກ້ວບຸນພັນ ປະທານແນວລາວສ້າງຊາດ

ທ່ານເຈຍຊິ້ງລິນ ປະທານສະພາປຶກສາການເມືອງທົ່ວປະເທດຈີນກ່າວວ່າ:ຈີນ--ລາວສອງຊາດເປັນເພື່ອນບ້ານໃກ້ຄຽງທີ່ດີ,ມິດທີ່ດີ,ສະຫາຍທີ່ດີແລະຄູ່ທີ່ດີດ້ວຍກັນ.ການໄປມາຢ້ຽມຫາກັນຂັ້ນສູງລະຫວ່າງສອງຝ່າຍລຽນຕິດບໍ່ຂາດ,ຄວາມໄວ້ເນື້ອເຊື່ອໃຈຕໍ່ກັນທາງການເມືອງແລະການຮ່ວມມືທາງເສດຖະກິດການຄ້າກໍ່ມີໝາກຜົນພົ້ນເດັ່ນ,ສາຍພົວພັນລະຫວ່າງສອງຊາດນັບວ່າເປັນແບບຢ່າງໄມຕີຈິດຖານບ້ານໃກ້ເຮືອນຄຽງທີ່ປອງດອງກັນແລະເຄົາລົບເຊິ່ງກັນແລະກັນ.ຝ່າຍຈີນສັນລະເສີນຊົມເຊີຍພັກແລະລັດຖະບານລາວຊຶ່ງມີຄວາມເຂົ້າໃຈແລະສະໜັບສະໜູນໂດຍຕະຫຼອດຕໍ່ບັນຫາໃຫຍ່ ໆກ່ຽວກັບໄຕ້ຫວັນ,ຕີເບດແລະສິດທິມະນຸດ,ແລະຈະສືບຕໍ່ທິດທາງການຕ່າງປະເທດຕາມຈິດໃຈ "ຖືເພື່ອນບ້ານໃກ້ຄຽງເປັນເພື່ອນໄມຕີແລະຖືເພື່ອນບ້ານໃກ້ຄຽງເປັນໝູ່ຄູ່",ຊຸກຍູ້ສາຍພົວພັນຮ່ວມມືຮອບດ້ານລະຫວ່າງຈີນ--ລາວທີ່ມີຄວາມໝັ້ນຄົງຍາວນານ,ຖານບ້ານໃກ້ເຮືອນຄຽງທີ່ປອງດອງກັນສັນມິດແລະຕ່າງໄວ້ເນື້ອເຊື່ອໃຈກັນໃຫ້ພັນຂະຫຍາຍໄປສູ່ລະດັບສູງກວ່າເກົ່າແລະເລິກເຊິ່ງກວ່າ



ທ່ານລີສາງຊຸນ ກຳມະການປະຈຳກົມການເມືອງສູນກາງພັກກອມມູນິດຈີນພົບປະ ສີສະຫວັດ ແກ້ວບຸນພັນປະທານແນວລາວສ້າງຊາດ

中共中央政治局常委李长春在北京人民大会堂会见了老挝建国战线主席西沙瓦 · 乔本潘　　新华社图

ເກົ່າ. ສະພາປຶກສາການເມືອງທົ່ວປະເທດຈີນຍິນດີພ້ອມກັນກັບແນວລາວສ້າງຊາດ ຊຸກຍູ້ສົ່ງເສີມການໄປມາຫາສູ່ກັນດ້ວຍສັນຖະອະໄມຕີລະຫວ່າງສອງອົງການຈັດຕັ້ງຢ່າງບໍ່ຢຸດຢັ້ງ, ເພີ່ມທະວີການແລກປ່ຽນແລະຮ່ຳຮຽນຢູ່ໃນແຕ່ລະຂັ້ນ, ປະກອບສ່ວນອັນໃໝ່ເພື່ອການພັດທະນາສາຍພົວພັນລະຫວ່າງຈີນ--ລາວແລະມິດຕະພາບຂອງປະຊາຊົນສອງຊາດຕື່ມອີກເປັນແຕ່ລະກ້າວ.

ທ່ານສີສະຫວາດ ແກ້ວບຸນພັນກ່າວວ່າ: ໄລຍະຢ້ຽມຢາມປະເທດຈີນເທື່ອນີ້ໄດ້ແລກປ່ຽນຄຳຄິດຄຳເຫັນກ່ຽວກັບເລື່ອງຮ່ວມມືກັບສະພາປຶກສາການເມືອງທົ່ວປະເທດຈີນ, ເຊື່ອແນ່ວ່າ ການແລກປ່ຽນແລະຮ່ວມມືລະຫວ່າງແນວລາວສ້າງຊາດກັບສະພາປຶກສາການເມືອງທົ່ວປະເທດຈີນຈະມີການເພີ່ມທະວີຂຶ້ນຕື່ມອີກ.

ທ່ານລີສາງຊຸນກຳມະການປະຈຳກົມການເມືອງສູນກາງພັກກອມມູນິດຈີນກ່າວວ່າ: ຈີນ--ລາວສອງຊາດມີພູຜາແມ່ນ້ຳຕິດຈອດກັນ, ລະຫວ່າງປະຊາຊົນສອງຊາດມີມິດຕະພາບມູນເຊື້ອອັນເລິກເຊິ່ງ. ນັບຕັ້ງແຕ່ສ້າງສາຍພົວພັນທາງການທູດ 45 ປີເປັນຕົ້ນມາ, ສາຍພົວພັນລະຫວ່າງສອງຊາດແລະສອງພັກໄດ້ຂະຫຍາຍຕົວຢ່າງຮອບດ້ານ, ການຮ່ວມມືໃນຂົງເຂດຕ່າງ ໆໄດ້ລົງເລິກຢ່າງບໍ່ຢຸດຢັ້ງ. ການໄວ້ເນື້ອເຊື່ອໃຈກັນ, ສະເໝີພາບຕໍ່ກັນ, ສະໜັບສະໜູນເຊິ່ງກັນແລະກັນແລະຮ່ວມມືຢ່າງຈິງໃຈເປັນຈຸດພົ້ນເດັ່ນຂອງສາຍພົວພັນລະຫວ່າງຈີນ--ລາວ. ຊຸມປີມໍ່ ໆມານີ້, ການຄົບຫາກັນລະຫວ່າງສອງພັກຈີນແລະລາວມີທ່ວງທ່າເປັນຢ່າງດີ, ຜູ້ນຳຂອງສອງພັກໄປມາຢ້ຽມຢາມຕໍ່ກັນຢ່າງລຽນຕິດ, ໄດ້ເສີມຊີວະພະລັງອັນໃໝ່ໃຫ້ແກ່ການປັບປຸງແລະພັດທະນາມິດຕະພາບມູນເຊື້ອຈີນ--ລາວຕື່ມອີກ. ຈີນ--ລາວສອງຊາດກໍ່ຢຶດໝັ້ນເສັ້ນທາງສັງຄົມນິຍົມ, ກໍ່ພວມຊຸກຍູ້ພາລະກຳປະຕິຮູບເປີດກວ້າງ, ກໍ່ປະເຊີນໜ້າກັບພາລະໜ້າທີ່ພັດທະນາເສດຖະກິດ, ເສີມພະລັງປະເທດໃຫ້ເຂັ້ມແຂງແລະປົວແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ເພີ່ມທະວີການຮ່ວມມືຖານເພື່ອນບ້ານທີ່ປອງດອງກັນສັນນິດບໍ່ພຽງແຕ່ສອດຄ່ອງກັບຜົນປະໂຫຍດຕົ້ນຕໍຂອງປະຊາຊົນສອງຊາດເທົ່ານັ້ນ ຫາກຍັງມີຜົນດີຕໍ່ການປັບປຸງແລະພັດທະນາພາລະກິດສັງຄົມນິຍົມອີກ. ທ່ານລີສາງຊຸນໃຫ້ທັດສະນະວ່າ: ພັກກອມມູນິດຈີນຍິນດີສືບຕໍ່ການຮ່ວມມືໄມຕີຈິດກັບພັກປະຊາຊົນປະຕິວັດລາວບົນພື້ນຖານຫຼັກການ 4 ປະການ: "ເອກະລາດເປັນເຈົ້າຕົນເອງ, ສະເໝີພາບຢ່າງສົມບູນ, ເຄົາລົບຕໍ່ກັນແລະບໍ່ແຊກແຊງກິດຈະການພາຍໃນຂອງກັນ", ພ້ອມກັນຊຸກຍູ້ສາຍພົວພັນຮ່ວມມືຮອບດ້ານລະຫວ່າງຈີນ--ລາວຂະຫຍາຍຕົວຄືບກ້າວຢ່າງບໍ່ຢຸດຢັ້ງ.

ທ່ານສີສະຫວາດ ແກ້ວບຸນພັນໄດ້ເຫັນພ້ອມນຳການປະເມີນຜົນອັນຕັ້ງໜ້າທີ່ມີຕໍ່ສາຍພົວພັນສອງພັກແລະສອງລັດຂອງທ່ານລີສາງຊຸນ. ທ່ານໄດ້ອວຍພອນຕໍ່ຜົນສຳເລັດທີ່ຍາດມາໄດ້ໃນພາລະກິດສ້າງສາສັງຄົມນິຍົມຈີນ, ແລະຂອບໃຈພັກ ລັດແລະປະຊາຊົນຈີນທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອເປັນເວລາຍາວນານຕະຫຼອດມາ, ທ່ານເຊື່ອໃຈວ່າ, ພາຍໃຕ້ຄວາມພະຍາຍາມຮ່ວມກັນຂອງສອງກ້ຳສອງຝ່າຍ, ມິດຕະພາບລາວ--ຈີນຍ່ອມຈະຍືນຍົງຕະຫຼອດການະນານ.

# ສປຈີນຊ່ວຍສປປລາວຝຶກອົບຮົມໄອຍະການ 25 ຄົນຄັ້ງແຣກ

## 中国首次为老挝培训 25 名检察官

25名来自老挝北部南塔省、乌多姆塞省、丰沙里省的检察官，在云南接受了为期10天的检察官培训、考察后，云南省人民检察院为他们颁发了云南省检查部门的结业证书。这是中国首次为老挝培训检察官。

ໄອຍະການ 25 ຄົນທີ່ມາຈາກແຂວງຫຼວງນ້ຳທາ ແຂວງອຸດົມໄຊ ແຂວງຜົ້ງສາລີໃນພາກເໜືອລາວ,ພາຍຫຼັງໄດ້ຮັບການເຝິກອົບຮົມແລະສຳຫຼວດເປັນເວລາ 10 ວັນທີ່ຢູນນານແລ້ວ, ສານໄອຍະການແຂວງຢູນນານໄດ້ມອບໃບຢັ້ງຢືນຈົບພາກຮຽນຂອງອົງການໄອຍະການແຂວງຢູນນານໃຫ້ແກ່ເຂົາເຈົ້າ.ນີ້ແມ່ນປະເທດຈີນຊ່ວຍສປປລາວເຝິກອົບຮົມໄອຍະການເປັນຄັ້ງແຣກ.

ເນື້ອໃນເຝິກອົບຮົມເທື່ອນີ້ລວມທັງລະບຽບໄອຍະການ,ການສືບສວນຄະດີກະທຳຜິດທາງຕຳແໜ່ງ ການຕິດຕາມສືບສວນແລະວິຊາສະເພາະກວດກາການຟ້ອງຮ້ອງ,ວິຊາສະເພາະກວດກາຄ້າຍຈຳຄຸກ, ການຄຸ້ມຄອງໄອຍະການຂອງຈີນ.ບັນດາໄອຍະການລາວໄດ້ຢ້ຽມຊົມສານໄອຍະການຂົນສົ່ງທາງລົດໄຟຄຸນໝິງ,ແລະໄປສຳຫຼວດຢູ່ເມືອງຕ້າລີແລະເມືອງລີ້ຈຽງອີກ.

ທ່ານລີຊຸນຫຼີນຫົວໜ້າສານໄອຍະການແຂວງຢູນນານສະແດງວ່າ,ຈີນກັບລາວມີພູຜາແມ່ນ້ຳຕິດຈອດກັນ,ເປັນປະເທດຖານບ້ານໃກ້ເຮືອນຄຽງສັນນິດ,ມິດຕະພາບມູນເຊື້ອລະຫວ່າງປະຊາຊົນສອງຊາດມີປະຫວັດມາຍາວນານ.ແຂວງຢູນນານມີຊາຍແດນຕິດກັບຊາຍແດນລາວ,ມີຫຼາຍຊົນເຜົ່າໄດ້ຂ້າມຊາຍແດນໄປຕັ້ງພູມລຳເນົາຢູ່ອາໄສ.ອົງການໄອຍະການຂອງຈີນແລະລາວໄດ້ຮັກສາສາຍພົວພັນຮ່ວມມືມິດຕະພາບມາດົນນານ,ໄດ້ຕັ້ງສະຖານີພົບປະເຈລະຈາແຕ່ໃດ ໆມາ,ໄດ້ສ້າງກົນໄກພົບປະເຈລະຈາຕາມຊາຍແດນ,ແຈ້ງສະພາບການດຳເນີນຄະດີອາຍາທີ່ເກີດຂຶ້ນຕາມຊາຍແດນສອງຊາດເປັນປະຈຳ, ແຕ່ໃດ ໆມາກໍ່ໄດ້ທຳການແລກປ່ຽນວຽກງານທາງດ້ານຕໍ່ຕ້ານອາດຊະຍາກຳຂ້າມຊາດຕາມຊາຍແດນແລະການຮ່ວມມືດ້ານຕຸລາການ.

ຫົວໜ້າຄະນະຜູ້ແທນໄອຍະການສາມແຂວງພາກເໜືອລາວກ່າວວ່າ,ການເຝິກອົບຮົມເທື່ອນີ້ໄດ້ຮັບຮູ້ເຂົ້າໃຈລະບອບຍຸດຕິທຳແລະໄອຍະການຂອງຈີນຕື່ມອີກ. "ຫວັງວ່າສອງຝ່າຍຈະຮ່ວມໄມ້ຮ່ວມມືພ້ອມກັນຕໍ່ຕ້ານອາດຊະຍາກຳສາກົນ."

# ທ່ານຊູເຈີ້ງກົວ ຮອງປະທານສະພາປຶກສາການເມືອງ ປະທານສະພາການຄ້າແລະອຸດສາຫະກຳແຂວງຢູນນານນຳພາຄະນະຜູ້ແທນໄປສຳຫຼວດຢູ່ເມືອງລາວ

## 云南省政协副主席、云南省工商联会长苏正国率团赴老挝考察

云南省政协副主席、云南省工商联会长苏正国率云南省代表团一行对老挝进行了考察。

ທ່ານຊູເຈີ້ງກົ່ວ ຮອງປະທານສະພາປຶກສາການເມືອງ ປະທານສະພາການຄ້າແລະອຸດສາຫະກຳແຂວງຢູນນານໄດ້ນຳພາຄະນະຜູ້ແທນແຂວງຢູນນານໄປທຳການສຳຫຼວດຢູ່ເມືອງລາວ.

ຄະນະຜູ້ແທນດັ່ງກ່າວໄດ້ເຂົ້າຮ່ວມ "ກອງປະຊຸມໂອກາດທຸລະກິດບໍ່ແຮ່ອະນຸພາກພື້ນແມ່ນ້ຳຂອງ "ທີ່ຈັດຂຶ້ນໂດຍເອທີປາຖະກະຖາການຄ້າອະນຸພາກພື້ນແມ່ນ້ຳຂອງແລະສະພາການຄ້າແຫ່ງຊາດລາວ,ແລະໄດ້ກ່າວຄຳປາໄສ《ການທອນຄືນໂຄງການຮ່ວມມືເສດຖະກິດເຕັກນິກໃນອະນຸພາກພື້ນແມ່ນ້ຳຂອງຂອງແຂວງຢູນນານ》,ໄດ້ແນະນຳພາບອະນາຄົດຮ່ວມມືໃນທາງດ້ານທຸລະກິດບໍ່ແຮ່ຂອງແຂວງຢູນນານຢ່າງເປັນລະບົບ,ໄດ້ສະເໜີຂໍ້ສະເໜີແລະບັນຫາຕົ້ນຕໍທີ່ຄົງຄ້າງຢູ່ໃນການຮ່ວມມືທຸລະກິດບໍ່ແຮ່.ຄະນະຜູ້ແທນໄດ້ກ່າວຄຳປາໄສທີ່ມີຫົວຂໍ້ສະເພາະກ່ຽວກັບ《ນະໂຍບາຍເປີດກວ້າງຕໍ່ພາຍນອກແລະສະພາບແວດລ້ອມທາງກົດໝາຍໃນຂົງເຂດທຸລະກິດບໍ່ແຮ່ຈີນ》ແລະ《ວິທີຄົ້ນຊອກແຮ່ທາດແລະຄົ້ນພົບແຮ່ທາດຂອງແຂວງຢູນນານ》.

ໃນເວລາຢູ່ເມືອງລາວ,ຄະນະຜູ້ແທນຍັງໄປສຳຫຼວດສະຖານທີ່ໂຄງການບໍ່ເກືອກາລີທີ່ແຂວງຢູນນານລົງທຶນບຸກເບີກພ້ອມດ້ວຍຕະຫຼາດຂອງມັນແລະສະພາບແວດລ້ອມລົງທຶນເປັນຕົ້ນ.


東北美食城
——良心品质　货真价实
东北酒楼主要经营正宗东北特色菜及川菜、粤菜。主要有东北乱炖、北京烤鸭、红烧土鸡煲、烤羊腿、甲鱼煲等等……
延续一种味道，传递一份美爱，您的满意是我们的目标，欢迎各界朋友光临。另，如持有本店广告的顾客可享受15%优惠！
东北美食城
DONG BEI CHINA RESTAURANT
地址：萬象市朗古拉邦路,喔嗒太酒店北走600米左右
電話：020 5668772
N.K·工作室


老挝 偶遇的 风情美食
洪
盛
酒
樓
优雅舒适
遐思无限
酒楼大厅设有6个台位，分有6个豪华包间，可同时容纳200多人，环境优雅华丽，尊贵典雅，宾至如归的感觉油然而生，宽敞的大厅令人耳目一新；包间的沙发柔软而富有弹性，结合暖色的灯光，让人感到无比温馨，整体的配置豪华而不落俗，古朴的纹风结合现代的经典，给人一种无上的尊贵气息、至高的享受，尊典的环境配上富有内涵的菜肴，那真是人间的天堂，难怪连上帝也想来做客！
洪盛酒楼
详细地址：万象市南13号公路塞他尼县坡帕闹村
订座电话：021-720288
N.K·工作室

文：蔡耀明 图：苏雯雯

# ຊາວລາວທີ່ສະໜຸກສຳລານ

## 悠闲自在老挝人

走进老挝，人们会陶醉于原始而美丽的热带自然风光，迷恋上淳朴独特的民族风情。然而，当你真正走进老挝人的生活时，他们自得其乐，悠闲自在的生活态度则会让你羡慕不已。

ເມື່ອຍ່າງກ້າວສູ່ດິນຈຳປາເມືອງລາວ, ຄົນທັງຫຼາຍອາດຊະໂລມຢູ່ພາບວິວທິວທັດທຳມະຊາດເຂດຮ້ອນທີ່ປະຖົມປະຖານແລະສວຍສົດງົດງາມ, ຕິດໃຈນຳຮີດຄອງພື້ນແຜ່ນຊົນຊາດຊົນເຜົ່າທີ່ເປັນເອກະລັກນິມິດໄສໃຈຄໍຊື່ກົງລຽບ ໆ. ແຕ່ເມື່ອເຈົ້າຫາກໃກ້ຊິດຕິດແທດກັບຊີວິດຂອງຊາວລາວຢ່າງແທ້ຈິງແລ້ວ, ທ່າທີວາດຢູ່ກິນອັນສະໜຸກສຳລານຊື່ນໃຈຂອງຂະເຈົ້າພາໃຫ້ເຈົ້າແສນອິດສາຢູ່ແທ້ດາຍ.




ຊຸມຊົນດື່ມເຫຼົ້າເບຍແກມອາຫານລາວທີ່ແຊບຊ້ອຍຢ່າງສະໜຸກຕາມແຄມຂອງ 在湄公河畔，悠闲地喝啤酒石酸，吃着美味老挝菜的人们




ຊາວລາວສົ່ງເສີມຊີວິດການເປັນຢູ່ແບບງ່າຍດາຍແລະຄວາມສະໜຸກສະບາຍ. ທຳອິດໄປເຖິງນະຄອນຫຼວງວຽງຈັນ, ກໍ່ຮູ້ສຶກວ່າມັນບໍ່ໄດ້ມີພາບຂຸ້ນຂ້ຽວບົນແຂວຄືໂຕເມືອງໃຫຍ່ ໆ, ທຸກສິ່ງທຸກຢ່າງກໍ່ປະກົດວ່າງຽບສະຫງົບແລະສະໜຸກສຸກສະບາຍ, ຈົນວ່າວາດຍ່າງຂອງຜູ້ຄົນກໍ່ຄືຈັ່ງວ່າເສື່ອຍຊ້າເອົາແທ້. ເມື່ອຂ້າພະເຈົ້າໄປເລາະຕະຫຼາດແລງທຸກເທື່ອ ກໍ່ເຮັດໃຫ້ຂ້າພະເຈົ້າສະຫງົບສົນເທ່ວ່າອາກາດເມືອງລາວຮ້ອນເອົ້າ, ກາງຄືນອາກາດຂ້ອນຂ້າງເຢືອກເຢັນດີ, ແທນທີ່ເປັນໂອກາດອັນດີທີ່ທຳມາຄ້າຂາຍແຕ່ຊາວລາວສ່ວນຫຼາຍພັດອັດປະຕູປຸດພັກ, ຕາມມາເມື່ອໂອ້ລົມສົນທະນາກັບເພື່ອນຄົນລາວຈຶ່ງຮູ້ວ່າ, ເຂົາເຈົ້າຊາວລາວເຫັນວ່າ ເງິນຄຳນີ້ຈະຫາໃຫ້ໝົດບໍ່ມີວັນສິ້ນສຸດເລີຍ, ຮອດຍາມແລງອັດປະຕູກໍ່ມີເວລາຫຼາຍເພື່ອພັກຜ່ອນຢ່ອນກາຍວ່າຊັ້ນ. ສ່ວນດ້ານການກິນນັ້ນ, ເຂົາເຈົ້າຄືວ່າບໍ່ໄດ້ພິຖີພິຖັນນຳຫຼາຍ. ອາຫານຂອງຊາວລາວເປັນແບບງ່າຍດາຍ, ອາຫານຫຼັກແມ່ນເຂົ້າໜຽວ, ມັກກິນຜັກກາດດິບແລະປາ, ສະເພາະແມ່ນປາປີ້ງ. ກິນມື້ລະສາມຄາບມີປາປີ້ງ, ຕຳສົ້ມໝາກຫຸ່ງກັບເຂົ້າໜຽວກໍ່ຖືວ່າເປັນທີ່ແຊບຊ້ອຍກັນແລ້ວ. ຕາມເຂົາເຈົ້າສັງເກດເຫັນວ່າ ແຕ່ລະມື້ຫາກມີຊີວິດອັນສະໜຸກສຳລານຕາມສະບາຍກໍ່ພໍໃຈແລ້ວ.

ມີຄົນເວົ້າວ່າ:ຊາດລາວເປັນຊົນຊາດທີ່ຮູ້ຈັກຊົມໃຊ້ແລະສະເຫວີຍຊີວິດການກິນຢູ່, ມັນກໍ່ມີເຫດມີຜົນແທ້. ເຫຼົ້າ, ດົນຕີແລະແອ່ນອ່ອນຟ້ອນລຳເປັນສາມຢ່າງທີ່ຂາດບໍ່ໄດ້ໃນຊີວິດຂອງຊາວລາວ. ບໍ່ວ່າຢູ່ຕົວເມືອງຫຼືຊົນນະບົດ ກໍ່ຈະເຫັນຊາວລາວຈຸສາມຈຸຫ້ານັ່ງຢູ່ເຮືອນເຊຍຫຼືນັ່ງພັບແພບຢູ່ກ້ອງຮົ່ມໄມ້ດື່ມເຫຼົ້າເບຍແລະຟັງສຽງດົນຕີຢ່າງສະໜຸກສຳລານໃຈ. ບາງຄັ້ງກໍ່ຍົກຈອກເຫຼົ້າທັງດື່ມທັງຂັບຮ້ອງທັງຟ້ອນໄປພ້ອມ. ຄັນພົບແຂກຄົນຜູ້ແປກໜ້າຂະເຈົ້າກໍ່ເຊີນເຂົ້າຮ່ວມພາຊົມຊື່ນຢ່າງອົບອຸ່ນ, ເອົາເຫຼົ້າສູ່ແຂກຈອກໜຶ່ງແລ້ວກໍ່ເຊີນຊວນລຳວົງຮອບໜຶ່ງ. ຊາດລາວເປັນຊົນຊາດທີ່ຊ່າງຟ້ອນລຳທຳເພງ, ເມື່ອທ່ານໄປເປັນແຂກຢູ່ເຮືອນຊາວລາວ, ການຟ້ອນລຳທຳເພງເປັນເນື້ອໃນປະການໜຶ່ງທີ່ຂາດບໍ່ໄດ້. ຢູ່ດອມກັນກັບເຂົາເຈົ້າ, ທ່ານຈະຮູ້ສຶກອົບອຸ່ນ, ປາສະຈາກຄວາມມືດໝອງ, ມີຄວາມເບີກບານສຳລານໃຈຕະຫຼອດເວລາ.

ວັນອາທິດຫຼືມື້ພັກວັນບຸນ, ຊາວລາວມັກເຊີນຊວນໝູ່ເພື່ອນໄປຫຼິ້ນຢູ່ນອກຊານເມືອງ, ພາກັນຫຼິ້ນໄພ້, ດື່ມເຫຼົ້າ, ຟັງສຽງດົນຕີ, ຕີກເບັດແລະຮ້ອງເພງ, ຍູທ່າງຊົມໃຊ້ຊີວິດອັນສະໜຸກສຳລານຕາມພູຜາແມ່ນ້ຳທຳມະຊາດທີ່ສົດສວຍງາມຕາ, ຈັ່ງແມ່ນອອນຊອນວອນໃຈເອົາແທ້.

## 风格独特的壮族农民版画

位于中国西南边陲的阿峨新寨是云南省文山州马关县仁和镇所属的一个自然村，是典型的壮族世居的寨子。这里的壮族同胞把生产生活、体育竞技、科普等方面的内容，真实而深动地用木板刻录下来，形成了今天的壮族农民版画。



# ຮູບພິມຂອງຊາວນາ

ບ້ານໃໝ່ອາເອີ່ຕັ້ງຢູ່ຊາຍແດນທໍລະດີຈີນ,ເປັນໝູ່ບ້ານທຳມະຊາດທີ່ຂຶ້ນກັບຕາແສງເຢນເຫີເມືອງມາກວານ,ເປັນຖິ່ນຖານບ້ານຢູ່ຕົວແບບຂອງເຜົ່າຈວງ.ພີ່ນ້ອງເຜົ່າຈວງແຫ່ງນີ້ໄດ້ນຳເອົາເນື້ອໃນທາງດ້ານຊີວິດການຜະລິດ,ການແຂ່ງຂັນກິລາກາຍະກຳແລະການເຜີຍແຜ່ວິທະຍາສາດແກະສະຫຼັກຈາລຶກໄວ້ແຜ່ນໄມ້ຢ່າງມີຊີວິດຊີວາແທດຈິງ,ຊຶ່ງໄດ້ກາຍເປັນຮູບພິມຂອງຊາວນາເຜົ່າຈວງໃນປະຈຸບັນ,ຮູບພິມເຫຼົ່ານີ້ມີຫົວຂໍ້ຈະແຈ້ງ,ລີລາເອກະລັກຈຳເພາະ,ລົດຊາດບໍລິສຸດຜຸດຜ່ອງ,ອັດຖະນິຍົມເຂັ້ມຂຸ້ນ,ສີມືຄວັດແກະຫຍາບ ໆ ແລບ ໆ,ໄດ້ສະທ້ອນພາບຊີວິດອັນສົດໃສຢ່າງເຖິງຖອງ.ໃນທາງລີລາສິລະປະນັ້ນ ທັງຮັກສາສີສັນຈຳເພາະຂອງເຜົ່າຈວງທັງສະແດງເຖິງວັດທະນະທຳຈີນ ມີຜົນສະທ້ອນແລະແຊກຊຶມເຂົ້າຊີວິດການເປັນຢູ່ຂອງເຂົາເຈົ້າ,ມັນຕັ້ງແມ່ນສິລະປະການແຕ້ມຮູບ(ຈິດຕະກຳ)ທີ່ເກົ່າແກ່ບ້ານຈວງປະສານກົມກືນກັບສິລະປະວັດທະນະທຳຈີນຢ່າງຄືນຄາຍ.

ນັບແຕ່ຊຸມປີ 70 ສະຕະວັດທີ 20 ຊາວບ້ານເລີ່ມຜະລິດຮູບພິມຂອງເຜົ່າຈວງເປັນຕົ້ນມາ,ບ້ານໃໝ່ໄດ້ຜະລິດຮູບພິມພັນກວ່າຮູບຕາມລຳດັບ,ປີ 1985,ມີຮູບພິມ 22 ຮູບຖືກນຳໄປວາງສະແດງຢູ່ຍີ່ປຸ່ນຕາມຄຳເຊີນ,ຍັງມີ 25 ຮູບເຂົ້າຮ່ວມການປະກວດຮູບແຕ້ມຈິດຕະກຳຊາວນາຈີນ.ຮູບພິມບ້ານໃໝ່ຍັງໄດ້ດູດດຶງເອົາແຟນຈາກປະເທດແລະເຂດແຄວ້ນອົດສະຕຣາລີ,ອີຕາລີມາຫາຊື້ອີກ.ປີ 2005,ຮູບພິມອາເອີ່ໄດ້ຜະລິດເປັນຮູບພິມຊ້ອນສີ 20 ຮູບເປັນຄັ້ງແຮກ,ເຮັດໃຫ້ຮູບພິມທີ່ມີສີຂາວ--ດຳແຕ່ຢ່າງດຽວນັ້ນ ຂະຫຍາຍຕົວເປັນຫຼາຍສີ.ເນື່ອງຈາກວ່າຮູບພິມຊ້ອນສີນີ້ ແກະຊັ້ນໜຶ່ງພິມສີຢ່າງໜຶ່ງ,ມີຫຼາຍສີກໍ່ຕ້ອງແກະຫຼາຍຊັ້ນມັນຕ່າງກັບຮູບພິມຂາວ--ດຳ,ບໍ່ສາມາດຈະລອກແບບໄດ້,ມັນຍັງຍົກສູງຄຸນຄ່າຮູບພິມຊ້ອນສີຂຶ້ນອີກດ້ວຍ.



# ເຜົ່າຈວງທີ່ມີລີລາເອກະລັກຈຳເພາະ

文：旭辉

### 文化名城——云南会泽

云南会泽县城的座座会馆、庙宇，是祖先留下的一笔宝贵的文化财富。当人们徘徊其间时，会情不自禁地为它们的气势、规模、风格、工艺、雕凿、彩绘、设计而赞叹，被古代工匠们的技艺折服。

ເມືອງຮຸຍເຈີຕັ້ງຢູ່ຍ່ານຈອມພູອູມົງພາກອີສານຢູນນານປະເທດຈີນ,ມີເນື້ອທີ່ພຽງ 3.6 ກິໂລແມັດມົນທົນ,ແຕ່ໃນສະໄໝລາຊະວົງໝິງແລະຊິງພັດໄດ້ປຸກສ້າງຫໍສະມາຄົມແລະວັດວາອາຮາມ 108 ຫຼັງ.ຄາວນັ້ນເມືອງຮຸຍເຈີເປັນສະຖານທີ່ຕັ້ງອໍານາດການປົກຄອງແຂວງຕົງຊວນແລະເມືອງຮຸຍເຈີ.ຮຸຍເຈີມີປະຫວັດສາດການຂຸດຄົ້ນແຮ່ທອງແລະຊືນ,ວິຊາຫຼໍ່ຫຼອມແລະການລໍາລຽງຂົນສົ່ງທໍາມາຄ້າຂາຍ 3000 ປີມາແລ້ວ.ເສດຖະກິດການຄ້າທອງເຫຼືອງທີ່ຈະເລີນໄດ້ຊຸກຍູ້ການພັດທະນາການເມືອງແລະສິລະປະວັດທະນະທໍາຢ່າງເປັນປະຫວັດການ,ເຮັດ



# ເມືອງຮຸຍເຈີຢູນນານ
# --ເມືອງລືນາມແຫ່ງວັດທະນະທໍາ

ໃຫ້ຣຸຍເຈີມີຊື່ງາມນາມຄ່ອງວ່າ "ເມືອງແຫ່ງທໍສະມາຄົມ""ເມືອງເອກແຫ່ງວັດວາອາຣາມ".ຮ່ອງຮອຍທີ່ຈະເລີນຮຸ່ງເຮືອງຂອງເມືອງເອກທອງເຫຼືອງໃນປາງນັ້ນ ຍັງຕົກຄ້າງມາໄດ້ເຫັນພົມັບມຽງຈົນເທົ້າທຸກວັນນີ້;ທໍສະມາຄົມນ້ອຍໃຫຍ່ຟັງຢາຍເດຍລະດາດ,ຕະຫຼາດນັດໃນວັດວິຊາອາຊີບຕ່າງ ໆ,ວັດວາອາຣາມສາສະໜາຫຼາຍຮູບຫຼາຍແບບຕະຫຼອດຮອດເຮືອນຊານບ້ານຢູ່ຂອງປະຊາຊົນທີ່ຮຽງລາຍກັນໜາແໜ້ນຍັງຄົງສ່ອງແສງຄວາມຮຸ່ງເຮືອງໃນສະໄໝນັ້ນຂອງອົງການປົກຄອງແຂວງຕົງຊວນ...

ການຂຸດຄົ້ນແລະຫຼອມໂລຫະທອງໃນເມືອງຣຸຍເຈີເລີ່ມແຕ່ສະໄໝສາ-ຊາງ(ປະມານກ່ອນສະຕະວັດທີ 11),ແລ້ວສືບຕໍ່ຂະຫຍາຍຕົວຈົນຮອດປະຈຸບັນ.ຄາວນັ້ນ ຜະລິດຕະພາບແຕ່ລະປີສູງສຸດເຖິງ 10 ລ້ານປາຍຊັ່ງ(ທຽບເທົ່າ 5 ລ້ານປາຍກິໂລກຼາມ),ກວມ 85% ຂອງຜະລິດຕະພາບທົ່ວແຂວງຢູນນານ,64% ຂອງທົ່ວປະເທດ.ການພັດທະນາໂລຫະທອງທີ່ເປັນຂະໜາດປະຫວັດການ,ມັນໄດ້ດຶງດູດເອົາພໍ່ຄ້າຊາວຂາຍເຈົ້ານາຍ,ພໍ່ຄ້າເສດຖີ,ຊ່າງສີມືແລະປະຊາຊົນສາມັນໃນແຫ່ງຕ່າງ ໆທົ່ວປະເທດພາກັນຫຼັ່ງໄຫຼເຂົ້າສູ່ແຂວງຕົງຊວນ.ຊ້າບໍ່ນານ,ແຂວງຕົງຊວນນ້ອຍ ໆໃນສະໄໝນັ້ນມີປະຊາກອນເພີ່ມຂຶ້ນຢ່າງໄວວາ.ເພື່ອ












ຄວາມປອດໄພແລະຜົນປະໂຫຍດທາງເສດຖະກິດຂອງຕົນ,ແຂກຕ່າງຖິ່ນຄົນຕ່າງແດນເຫຼົ່ານີ້ທະຍອຍກັນຜູກ "ພັກພວກໄທບ້ານດຽວກັນ",ຕັ້ງຫໍສະມາຄົມໄທບ້ານດຽວກັນ, "ຜູກສະມາຄົມວິຊາອາຊີບນຳກັນ", "ຜູກສຳພັນສາສະໜາຮ່ວມກັນ"ແລະສ້າງຕັ້ງວັດວາອາຮາມທາງສາສະໜາ.

ດຽວນີ້ ພາຍໃນເມືອງຮຸຍເຈີຍັງຮັກສາຫໍສະມາຄົມລະດັບແຂວງແປດແຫ່ງຊຶ່ງສ້າງຂຶ້ນໃນສະໄໝລາຊະວົງໝິງແລະຊິງໄດ້ແກ່ຫໍສະມາຄົມຫູກວາງ(ຫູນານຫູເປ),ຈຽງຊີ,ຊູສຽນ,ຈຽງນານ,ຢູນນານ,ຝູ້ຈຽນ,ເສຊວນແລະສິນຈິນ.ຍັງມີຫໍສະມາຄົມແລະອົງການປົກຄອງເມືອງແລະເຂດແຂວງປາວສິງ,ໂຢເຈົາ,ຊາງຊາ,ເຫີງເຈົາ,ຢີຈາງ,ລິນຈຽງແລະຊິງຈຽງເປັນຕົ້ນ.

ຫໍສະມາຄົມຈຽງຊີແລະກໍ່ຮຽກວ່າ ວັງຫວານເສົ້າ,ຮູບຊົງກໍ່ສ້າງສະຫງ່າຜ່າເຜີຍ.ໂດຍສະເພາະຢ່າງຍິ່ງແມ່ນເວທີລະຄອນບູຮານ ເປັນສິ່ງຍອດຍິ່ງ,ມັນເປັນສະຖາປັດຕະຍະກຳບູຮານຢູນນານ.ຖັດຈາກນັ້ນພາຍໃນຫໍສະມາຄົມຍັງມີລວດລາຍຄວັດແກະດ້ວຍໄມ້ ດ້ວຍຫີນແລະດິນຈີ່ອັນເປັນສີມືສະຖາປັດຕະຍະກຳຍອດຢ້ຽມ.ທົ່ວຫໍສະມາຄົມເປັນຕົວແບບສະຖາປັດຕະຍະກຳຂອງຫໍໂຮງວັດວາອາຮາມພາຍໃນເມືອງຮຸຍເຈີ.

ການຂຸດຄົ້ນໂລຫະທອງ,ໄດ້ຊຸກຍູ້ການພັດທະນາການຄ້າ.ໃນສະໄໝນັ້ນພາຍໃນແຂວງຕົງຊວນເຕັມໄປແຕ່ໂຮງແຮມໝູ່ມ້າ,ຮ້ານຂາຍເຂົ້າ,ຮ້ານເງິນຮ້ານຄຳ,ຫ້າງຂາຍຢາ,ຮ້ານ




ແຜ່ນແພ,ຮ້ານແພໄໝ,ຮ້ານຊວດຈຳ,ຮ້ານອານມ້າ,ຮ້ານໝາກທົ່ວ,ຮ້ານຂາຍນ້ຳຕານ,ຮ້ານການເງິນ(ເອກະຊົນ),ຮ້ານທອງ,ຮ້ານນ້ຳຊາ,ຄະນະລະຄອນແລະວິຊາອາຊີບຕ່າງ ໆ. ເພື່ອປົກປ້ອງຜົນປະໂຫຍດວິຊາອາຊີບ,ເຮັດໃຫ້ພຶດຕິກຳອາຊີບຮ່ວມກັນເປັນແບບແຜນ,ຕະຫຼາດນັດວິຊາອາຊີບໄດ້ທະຍອຍກັນຈັດຂຶ້ນຢ່າງຫຼວງຫຼາຍພາຍມາກ. ສຳຄັນມີ:ຕະຫຼາດນັດລາຊາບໍ່ແຮ່(ຕະຫຼາດນັດການຂຸດຄົ້ນແຮ່ທາດ),ຕະຫຼາດນັດເຈົ້າໄຟ(ຕະຫຼາດນັດການຫຼໍ່ຫຼອມ),ຕະຫຼາດນັດພະຍາມ້າ(ຕະຫຼາດນັດໝູ່ມ້າຕ່າງແລະທຸລະກິດໂຮງແຮມໝູ່ມ້າ),ວັງຈາງເສັນ(ຕະຫຼາດນັດທຸລະກິດລູກຂຽງ),ຕະຫຼາດນັດລູປ້ານ(ຕະຫຼາດນັດການກໍ່ສ້າງ)ແລະຕະຫຼາດນັດເຈົ້ານ້ຳ(ຕະຫຼາດນັດໂຮງສີດ້ວຍພະລັງນ້ຳ).

ວັດວາອາຮາມສາສະໜາໃນຕົງຊວນກໍ່ຫຼາຍແບບລຶງລາຍ,ໃນນັ້ນມີລັດທິຂົງຈື້,ສາສະໜາພຸດ,ສາສະໜາເຕົ໋າ,ສາສະໜາອິດສະລາມ,ສາສະໜາກາໂຕລິກ,ສາສະໜາເຢຊູແລະເຈົ້າທໍລະນີ ກໍ່ລ້ວນແຕ່ມີວັດວາໂບດສົມຂອງໃຜມັນ,ຜູ້ເຊື່ອຖືສາສະໜາຕ່າງ ໆກໍ່ບຽດເຂົ້າຕົວເມືອງເກົ່ານ້ອຍ ໆ ນີ້. ມາຮອດປະຈຸບັນ ຍັງຮັກສາວັດຂົງຈື້,ວັດກວນຢີ,ວັດພະພຸດທະເຈົ້າ,ວັດຊີລາຍ,ຫໍໄຕປີດົກ,ວັດເຈົ້າພູມີ(ເຜົ່າຢີ່),ວັດຜີເມືອງ,ວັດທໍລະນີ,ໂບດກາໂຕລິກແລະພະເຢຊູແລະຫໍບັນພະບູລຸດຕ່າງ ໆ.

ໃນສະໄໝນັ້ນ ມີວັດວາໂບດສົມຮອດຮ້ອຍຫຼັງ,ຕ່າງຄົນຕ່າງເຊື່ອຖືນົບໄຫວ້ຜີຟ້າຜີແຖນແລະເຜີຍແຜ່ສາສະໜາຂອງໃຜລາວ,ປະກົດວ່າ ແຂວງຕົງຊວນກາຍເປັນຕົວເມືອງແຫ່ງວັດວາອາຮາມ,ຢູ່ໃຕ້ລຸ່ມຟ້າຂອງເທພະເຈົ້າ. ເມື່ອທ່ານທາກຍ່າງວົກວຽນຕາມສະຖານທີ່ດັ່ງກ່າວຈະຫຼິງເຫັນຮູບຊົງອອກແບບ,ສີໄມ້ລາຍມີແກະສະຫຼັກ,ພາບແຕ້ມອັນວິຈິດຕະການຂອງຊ່າງຝີມືສະໄໝບູຮານ,ມັນເປັນມູນມັງວັດທະນະທຳທີ່ລ້ຳຄ່າຊຶ່ງບັນພະບູລຸດໄດ້ຕົກທອດມາໃຫ້ແກ່ຄົນຮຸ່ນຫລັງ.





# ພູສິງໂຕອູ່ຕິງ-- "ພູເຂົາລຳດັບ 1 ໃນພາກທ່ລະດີ"



## “西南第一山”
## ——武定狮子山

素有“西南第一山”之称的狮子山，是云南省著名的风景名胜区之一，也是云南省级重点文物保护单位。





ພູສີງໂຕອູ່ຕິ່ງຫ່າງຈາກຄຸນໝີງ 88 ກິໂລແມັດ, ຈອມຫຼັກຂອງລະດັບນ້ຳທະເລສູງ 2419.8 ແມັດ, ລະດູໜາວປາສະຈາກຄວາມໜາວຈັດ, ລະດູຮ້ອນກໍ່ບໍ່ສູ້ຮ້ອນເອົ້າ, ປະກອບໄປດ້ວຍພູໜ່ອຍໜຶ່ງ ໜອງນ້ຳແຫ່ງໜຶ່ງແລະວັດຫຼັງໜຶ່ງ, ມີພາບທິວທັດພູຜາແມ່ນ້ຳ, ບູຮານສະຖານແລະວັດຖຸ, ທໍາລະນີມະນຸດຊາດແລະຮີດຄອງພື້ນແຜ່ນຊົນເຜົ່າບວກເຂົ້າເປັນເອກະພົບດຽວ, ເປັນໜຶ່ງໃນເຂດບູຮານສະຖານທິວທັດສວຍງາມຂອງແຂວງຢູນນານ, ແລະກໍ່ເປັນຫົວໜ່ວຍຄຸ້ມຄອງວັດຖຸບູຮານທີ່ເປັນຈຸດສຸມລະດັບແຂວງຂອງຢູນນານ.

ພູສີງໂຕອູ່ຕິ່ງຖືກຕັ້ງຊື່ວ່າ "ພູເຂົາລໍາດັບ 1 ໃນພາກທໍາລະດີ", ພູສູງຊັນກັນດານ, ມັນຕັ້ງຕະຫງ່ານຢູ່ເທິງໂຄກເຍີ້ນ ປຽບຄືໂຕສີງນັ່ງແນມເບິ່ງ, ເຫດນີ້ຈຶ່ງໄດ້ຊື່ວ່າພູສີງໂຕ. ປະລິມານນ້ຳຝົນໃນພູສີງໂຕສະເລ່ຍຮອບປີ 1,159.7 ມິລິແມັດ, ບໍລິມາດນ້ຳຝົນມາກຫຼາຍບວກກັບພົມພຶດທີ່ດົກໜາ, ເຮັດໃຫ້ບໍລິມາດສະສົມນ້ຳໃຕ້ດິນອຸດົມສົມບູນ. ລຽບຕາມບໍລິເວນໜ່ອຍພູຄວາມສູງລະດັບນ້ຳທະເລລະຫວ່າງ 2000 ຫາ 2300 ແມັດ, ມີນ້ຳພຸໄຫຼໃສເຢັນຫຼາຍບ່ອນ, ກະແສນ້ຳພຸໄຫຼບໍ່ແຮງ ແຕ່ໄຫຼລິນບໍ່ເຫືອດແຫ້ງຕະຫຼອດປີ. ຄາວກ່ອນ, ນ້ຳພຸເຫຼົ່ານີ້ເຄີຍເປັນບ່ອນຮັບຕ້ອນແຂກຄົນທີ່ທ່ຽວຊົມຫຼືພັກເຊົາເອົາແຮງ. ນັກກະວີບູຮານກໍ່ເຄີຍມາແວ່ຊົມລົດຊາດນ້ຳພຸບ່ອນນີ້ຊຶ່ງໄດ້ແຕ່ງກາບກອນຈາລຶກໄວ້ນັບເປັນຮ້ອຍບົດ.

ຫວ່າງພູເຂົາມີຮ່ອມຫ້ວຍເຫວເລິກ, ປ່າໄມ້ຂຽວສົດງົດງາມ, ມີສັກກຸນາສັດປ່າແປກປະຫຼາດຫຼາຍຊະນິດດໍາລົງຊີບຢູ່ຢ່າງສະບາຍ. ລຽບຂຶ້ນພູມີເສັ້ນທາງໂງເງປູດ້ວຍຫີນເປັນພັກ, ຕາມທາງມີຈຸດຊົມວິວຫຼາຍແຫ່ງ, ມີຕົ້ນສົນຮັບແຂກ, ມີສາລາດູດວງອາທິດທີ່ສູງຊັນໜ້າຕື່ນເຕັ້ນ, ມີໂງ່ນຫີນຫົວງູແລະຍອດໝໍ່ຄູ່, ຍັງມີຖ້ຳກວນອິມທີ່ເລິກລັບຈູງໃຈຕະຫຼອດເຖິງຫໍລີເຕົາ ໜອງຊີກເຕືອນຊຶ່ງຄົນຄວັດແກະສ້າງຂຶ້ນ ມີສະພາບແວດລ້ອມສົດສວຍງາມຕາ. ຈຸດຊົມວິວດັ່ງກ່າວໄດ້ດຶງດູດຈູງໃຈ ຜູ້ຄົນທ່ຽວຊົມໄປສູ່ໂລກອັນອັດສະຈັນ. ເມື່ອເຖິງຍາມທ້ອງຟ້າປອດໂປ່ງສົດໃສ, ມັກມີແຂກທ່ອງທ່ຽວມາກໜ້າຫຼາຍຕາມານັ່ງເຝົ້າຢູ່ສາລາດູດວງອາທິດ, ຄອຍຖ້າຊົມເບິ່ງດວງອາທິດພົ້ນຈາກຂອບຟ້າທີ່ພູສີງໂຕ.

ພູສີງໂຕສົມນາມວ່າ ເປັນພູມພາບທີ່ປະກອບໄປດ້ວຍຖ້ຳພູຊູຫາ, ຕົ້ນໄມ້ໃບຫຍ້ານາລາດອກໄມ້, ຮ່ອມຫ້ວຍບໍ່ນ້ຳພຸ, ມີສັດປ່ານາ ໆຊະນິດ, ມີວັດວາອາຮາມເກົ່າແກ່, ມີເມກໝອກຫິມະຝົນຕົກແລະໝອກເຝື້ອຍາມເຊົ້າກ່ອນດວງຕາເວັນພົ້ນຈາກຂອບຟ້າພຸ່ງແສງປະກາຍເຮືອງຮຸ່ງ.



文: 源 沅 图: 蓝 天



## 在青海湖边吟唱古老民歌

青海省位于青藏高原东北部，80%以上的地区在海拔3000米以上，和西藏共同形成了地球“第三极”独特的自然景观。西宁市为青海省省会，已有2100多年的历史，市内海拔2275米。西宁的夏季凉爽宜人，平均气温27℃，是理想的消夏避暑旅游之地。

# ຂັບຮ້ອງເພງພື້ນເມືອງເກົ່າແກ່ຕາມແຄມໜອງຊິງໄຮ

ໜອງຊິງໄຮ 青海湖

ແຂວງຊິງໄຮຕັ້ງຢູ່ພາກອີສານຂອງພູພຽງຊິງໄຮ--ຕີເບດ, ມີເຂດແຄວ້ນ 80% ຂຶ້ນເມືອຢູ່ໃນຄວາມສູງລະດັບນ້ຳທະເລ 3000 ແມັດປາຍ,ຄຽງຄູ່ກັບຕີເບດກາຍເປັນພູມພາບທຳມະຊາດເອກະລັກ "ຂົ້ວທີສາມ" ຂອງໜ່ວຍໂລກ.ນະຄອນຊີໜິງເປັນເມືອງເອກຂອງແຂວງຊິງໄຮ,ມັນໄດ້ມີປະຫວັດສາດ 2100 ກວ່າປີມາແລ້ວ,ພາຍໃນນະຄອນມີຄວາມສູງລະດັບນ້ຳທະເລ 2275 ແມັດ.ຍາມລະດູຮ້ອນໃນຊີໜິງເຢືອກເຢັນສະບາຍດີ,ອຸນະພູມສະເລ່ຍ 27 ອົງສາ C,ເປັນສະຖານທີ່ທ່ອງທ່ຽວພັກຮ້ອນຕາກອາກາດດີທີ່ສຸດ.

ໜອງຊິງໄຮແມ່ນໜອງນ້ຳເຄັມເລິກເຂົ້າໄປໃນຜືນແຜ່ນດິນໃຫຍ່ກວ່າໝູ່ໃນເມືອງຈີນ.ຫ່າງຈາກຕົວເມືອງຊີໜິງ 151 ກິໂລແມັດ.ທິດຕາເວັນອອກຫາທິດຕາເວັນຕົກມີລວງຍາວ 106 ກິໂລແມັດ,ທິດໃຕ້ຫາທິດເໜືອມີລວງກວ້າງ 63 ກິໂລແມັດ,ອ້ອມຮອບໜອງຍາວ360 ປາຍກິໂລແມັດ,ເນື້ອທີ່ໜອງນ້ຳ 4500 ກວ່າກິໂລແມັດມົນທົນ.ທ້ອງຟ້າຊິງໄຮສີຄາມສົດໃສ,ແຕ່ໜອງຊິງໄຮພັດສະຫຼັບປັບປ່ຽນສີຄາມເລື້ອຍ ໆ.ໜອງຊິງໄຮວຽບສະຫງັດປາສະຈາກກະແສຟອງ,ມັນໄດ້ສະທ້ອນພາບທີ່ມະຂາວຈ່ານພ່ານທີ່ຈອມພູຢູ່ໄກ ອັນໄດ້ປະກອບເປັນພາບວິວທິວທັດທີ່ສວຍສົດງົດງາມແລະອັດສະຈັນດູດດື່ມ.ສິ່ງທີ່ໜ້າອອນຊອນທີ່ສຸດນັ້ນແມ່ນດອນນົກທີ່ຕັ້ງຢູ່ແຈກ້ຳຕາເວັນຕົກສຽງເໜືອຂອງໜອງຊິງໄຮ,ເດືອນ 4 ທຸກປີມີນົກອົບພະຍົບປະມານ 10 ພັນໂຕບິນມາຈາກພາກໃຕ້ມາພັກພິງເຮັດຮັງຢູ່ກາງດອນ,ເປັນໜ້າອອນຊອນຊົມຊື່ນແລະພາບສະຫງ່າງາມ,ມັນເປັນພູມພາບມະຫັດສະຈັນບົນໜອງຊິງໄຮແທ້ດາຍ.

ມີບົດເພງຊື່ 《ຢູ່ຖິ່ນຖານທີ່ໄກແສນໄກ》 ແຕ່ງໂດຍທ່ານຫວັງໂລປິນ,ໄດ້ພັນລະນາທິວທັດທົ່ງຫຍ້າພາກຕາເວັນຕົກເມືອງຈີນຢ່າງຕິດອົກຕ້ອງໃຈທີ່ສຸດ,ມັນໄດ້ເຮັດໃຫ້ຖິ່ນຖານທົ່ງຫຍ້າທີ່ເອີ້ນຫາດເງິນຫາດຄຳຊື່ງຢູ່ແຄມໜອງຊິງໄຮລືຊາເຊັ່ງຊ່າ.ຫາດເງິນຄຳແບ່ງເປັນຫາດເງິນແລະຫາດຄຳ,ມີຫ້ວຍລຳໜຶ່ງໄຫຼຜ່ານລະຫວ່າງກາງ,ຫາດເງິນຄຳຕັ້ງຢູ່ບໍລິເວນຕາແສງຊີໄຮຄະນະປົກຄອງໄຮເປເຈົາ,ໃນເວລາໄປຢ້ຽມຢາມເມືອງປະລະມານູທີ່ເມືອງເກົ່າຊີໄຮຈຸນ,ອາດຈະຊົມພາບວິວບ່ອນນີ້ກໍ່ໄດ້,ຫຼື

ຊົມລົດຊາດອາຫານຕີເບດທີ່ເປັນຕົ້ນຕຳລາເອກະລັກສະເພາະ, ຍັງມີລາຍການຕ່າງ ໆເຊັ່ນ:ຂີ່ມ້າຍິງທະນູແລະຟ້ອນລະບຳທຳເພງຊົນເຜົ່າ, ຫຼືວ່າຈະພັກແຮມຢູ່ຕູບຜ້າເຕັນນົງໂກນຄືນໜຶ່ງກໍ່ໄດ້.

ເຜົ່າທູເປັນຊົນເຜົ່າເກົ່າແກ່ສະເພາະທີ່ພູພຽງຊິງໄຮ, ເຜົ່າທູມີຄວາມດຸໝັ່ນພຽນທຳ, ຊື່ສັດແບບລຽບງ່າຍແລະມີຄວາມອົບອຸ່ນຮັກແຂກແພງຄົນທັງຊ່າງຟ້ອນລຳທຳເພງ. ເສື້ອຜ້າອາພອນຂອງແມ່ຍິງເຜົ່າທູມີລັກສະນະພິເສດ, ແຂນເສື້ອປະກອບໄປດ້ວຍແພສີສັນຫ້າສີ:ແດງ, ຂຽວ, ເຫຼືອງ, ອິດແລະມຸ່ຍ, ຈັ່ງແມ່ນສົດໃສສວຍງາມ, ເພິ່ນຈຶ່ງຕັ້ງຊື່ວ່າເປັນ "ຖິ່ນຖານບ້ານສາຍຮຸ້ງ". ສິລະປະວັດທະນະທຳຊົນເຜົ່າທູອຸດົມສົມບູນ, ສ່ວນຫຼາຍແມ່ນສືບຕໍ່ປາກກັນມາຫຼາຍເຊັ່ນຄົນ.

ຊິງໄຮເປັນເຂດແຄວ້ນທີ່ມີຫຼາຍຊົນເຜົ່າຢູ່ຊຸມລຸມປະສົມກັນ, ອາຫານກິນດື່ມກໍ່ມີສີສັນພິເສດ. ຊາວຊິງໄຮມັກດື່ມເຫຼົ້າ, ບັນດາແຂກທ່ອງທ່ຽວກໍ່ບໍ່ອາດຫຼີກລ່ຽງຈາກເພງກອກເຫຼົ້າຂອງເຂົາເຈົ້າໄດ້, ເຫຼົ້າເຂົ້າເປູພູພຽງຈັ່ງແມ່ນປຸກອີ່ຫຼີ. ໂຕແກະທີ່ຜະລິດຈາກຊິງໄຮກໍ່ຊ່າລືເພາະມີຄ່າທາງໂພຊະນາຫານ. ແສງຕາເວັນໃນຊິງໄຮແຜ່ແສງເປັນເວລາຍືດຍາວ, ເຫດນີ້ພືດຜັກໝາກໄມ້ກໍ່ມີລົດຊາດແຊບນົວດີ.



ງານມະຫະກຳຖ່າຍຮູບສາກົນແຫຼ່ງສາມແມ່ນ້ຳຈີນທີ່ຈັດຂຶ້ນຢູ່ເມືອງຊີໜິງຊິງໄຮ
在青海西宁市举行的中国三江源国际摄影节












ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່ ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ.



主要有：
首都万象市
世界文化遗产——
琅勃拉邦
占芭色瓦普寺
查尔平原（石缸平原）
宽帕盆大瀑布
里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*



## 云南旅游小镇建设成为品牌

云南省以城镇体系规划为指导，依托交通设施建设，合理安排重点旅游线路沿线小城镇的空间布局，把发展旅游与发展小城镇结合起来，不断推进旅游小镇建设。

# ສ້າງສາເມືອງນ້ອຍທ່ອງທ່ຽວຢູນນານກາຍເປັນຍີ່ຫໍ້

ແຂວງຢູນນານເອົາໂຄງການລະບົບຕົວເມືອງແລະເມືອງນ້ອຍເປັນສິ່ງຊີ້ນຳ, ແລະເອົາການສ້າງພື້ນຖານໂຄງລ່າງຄົມນາຄົມເປັນບ່ອນອີງ, ຈັດວາງອົງເຂດສາຍທາງທ່ອງທ່ຽວທີ່ເປັນຈຸດສຸມລຽບຕາມເມືອງນ້ອຍຢ່າງສົມເຫດສົມຜົນ, ເອົາການພັດທະນາການທ່ອງທ່ຽວສົມທົບກັບການພັດທະນາເມືອງນ້ອຍ, ຊຸກຍູ້ການສ້າງສັນເມືອງນ້ອຍທ່ອງທ່ຽວຢ່າງບໍ່ຢຸດຢັ້ງ.



ຢູນນານມີຊົນເຜົ່າສ່ວນໜ້ອຍ 25 ເຜົ່າ, ມີວັດທະນະທຳຊົນຊາດຊົນເຜົ່າທີ່ເອກະລັກແລະສະຫງ່າລາສີ, ໃນທ່າມກາງສ້າງສັນເມືອງນ້ອຍທ່ອງທ່ຽວນັ້ນ, ແຂວງຢູນນານໄດ້ເອົາໃຈໃສ່ເປັນພິເສດຕໍ່ການຂຸດຄົ້ນແລະປົກປັກຮັກສາວັດທະນະທຳຊົນຊາດຊົນເຜົ່າ, ສ້າງສັນເອກະລັກແລະຄວາມສະເໜ່ຂອງວັດທະນະທຳຊົນເຜົ່າໃຫ້ພົ້ນເດັ່ນ. ຕັ້ງໜ້າສະແດງເຖິງວິຈິດສິນກໍ່ສ້າງ, ວາດຟ້ອນທຳນອງເສບແລະຮີດຄອງພື້ນແຜ່ນຂອງບັນດາເຜົ່າ, ເຮັດໃຫ້ແຂກທ່ອງທ່ຽວມີຄວາມຮັບຮູ້ເຂົ້າໃຈຕໍ່ຮີດຄອງພື້ນແຜ່ນຂອງບັນດາຊົນເຜົ່າຢ່າງກວ້າງຂວາງ, ເພີ່ມຄວາມດຶງດູດແຂກທ່ອງທ່ຽວຂອງເມືອງນ້ອຍທ່ອງທ່ຽວ, ສ້າງເມືອງນ້ອຍທ່ອງທ່ຽວໃຫ້ກາຍເປັນປ່ອງຢ້ຽມເສີມຂະຫຍາຍວັດທະນະທຳຊົນເຜົ່າແລະພື້ນຖານສືບທອດວັດທະນະທຳຊົນເຜົ່າ.

ແຂວງຢູນນານມີຕົວເມືອງລືຊື່ວັດທະນະທຳປະຫວັດສາດລະ

ດັບຊາດ 5 ແຫ່ງ,ເມືອງນ້ອຍລືຊື່ວັດທະນະທຳປະຫວັດສາດລະດັບຊາດ 1 ແຫ່ງ,ບ້ານລືຊື່ວັດທະນະທຳປະຫວັດສາດລະດັບຊາດ 1 ແຫ່ງ,ຕົວເມືອງລືຊື່ວັດທະນະທຳປະຫວັດສາດລະດັບແຂວງ 11 ແຫ່ງແລະເມືອງນ້ອຍລືຊື່ວັດທະນະທຳປະຫວັດສາດລະດັບແຂວງ 16 ແຫ່ງ.ຍັງມີເມືອງນ້ອຍທີ່ອຸດົມໄປດ້ວຍບູຮານຄະດີປະຫວັດສາດຈຳນວນໜຶ່ງອີກ.ໃນທ່າມກາງສ້າງສາພັດທະນາເມືອງນ້ອຍທ່ອງທ່ຽວນັ້ນ,ຢູນນານໄດ້ຍຶດຖືຫຼັກການ "ທັງພັດທະນາທັງປົກປັກຮັກສາ,ທັງປົກປັກຮັກສາທັງພັດທະນາພ້ອມ",ເຮັດໃຫ້ເມືອງນ້ອຍປ່ຽມລົ້ນໄປດ້ວຍເອກະລັກຈຳເພາະ,ມີອິດທິລິດແລະພະລັງດຶງດູດຈູງໃຈ.ຢູນນານມີຫຼາຍຕົວເມືອງນ້ອຍໄດ້ພັດທະນາຢ່າງວ່ອງໄວ ໂດຍອາໄສຊັບພະຍາກອນທິວທັດທ່ອງທ່ຽວທີ່ມີເອກະລັກສະເພາະຂອງທ້ອງຖິ່ນ.ກໍ່ສ້າງສະພາບແວດລ້ອມນິເວດວິທະຍາໃຫ້ມັນພົ້ນເດັ່ນ.ເອົາການສ້າງສາເມືອງນ້ອຍທ່ອງທ່ຽວສົມທົບກັບຊັບພະຍາກອນທິວທັດທ່ອງທ່ຽວ,ແລະເອົາເມືອງນ້ອຍຢູ່ບໍລິເວນເຂດທິວທັດເປັນບ່ອນອີງ,ພັດທະນາຊັບສິນການທ່ອງທ່ຽວແລະຊັບສິນທີ່ມີສ່ວນກ່ຽວຂ້ອງ,ຍົກຍ້າຍປະຊາຊົນທີ່ອາໄສຢູ່ໃຈກາງເຂດທິວທັດໄປບ່ອນອື່ນ,ບູລະນະພື້ນຖານໂຄງລ່າງເທສະບານຕົວເມືອງນ້ອຍທີ່ມີຢູ່ນັ້ນໃຫ້ຄົບຖ້ວນ,ກໍ່ສ້າງພັດທະນາເມືອງນ້ອຍທ່ອງທ່ຽວໃຫ້ຂະຫຍາຍຕົວເຕີບໃຫຍ່.ສຳລັບເມືອງນ້ອຍທ່ອງທ່ຽວທີ່ມີເສດຖະກິດພິເສດນັ້ນເວລາສ້າງສັນຖືຫຼັກການ "ກໍ່ສ້າງຊັບສິນຊຸກຍູ້ການພັດທະນາ,ແລະສ້າງສາພັດທະນາຊຸກຍູ້ການກໍ່ສ້າງຊັບສິນ",ດຳເນີນການກໍ່ສ້າງເສດຖະກິດພິເສດໃຫ້ພົ້ນເດັ່ນ.ໄປຄຽງຄູ່ກັນນັ້ນເນັ້ນໜັກການນຳໃຊ້ທາດມູນຂອງຊົນເຜົ່າ,ປະຫວັດສາດ,ນິເວດວິທະຍາແລະຊັບສິນວັດທະນະທຳທີ່ອຸດົມສົມບູນ,ສືບຕໍ່ພັດທະນາແລະປະດິດຄິດສ້າງອັນໃໝ່ຢ່າງບໍ່ຢຸດບໍ່ຢັ້ງ, ໂດຍຜ່ານ "ການສ້າງສັນວັດທະນະທຳຊົນຊາດຊົນເຜົ່າ,ການປົກປັກຮັກສາບູຮານຄະດີປະຫວັດສາດທີ່ຕົກຄ້າງ,ການກໍ່ສ້າງສະພາບແວດລ້ອມທີ່ສົດສວຍງາມຕາແລະການກໍ່ສ້າງເສດຖະກິດພິເສດ" ເພື່ອສ້າງສາພັດທະນາເມືອງນ້ອຍທ່ອງທ່ຽວ "ແບບປະສົມ".

ໃນໄລຍະການພັດທະນານັ້ນ,ສຳລັບຕົວເມືອງນ້ອຍທ່ອງທ່ຽວທີ່ໄດ້ມີຂະໜາດອັນແນ່ນອນແລ້ວນັ້ນ ຕ້ອງບູລະນະສ້າງສາພື້ນຖານໂຄງລ່າງທາງຄົມນາຄົມ,ການສື່ສານແລະເທສະບານໃຫ້ສົມບູນຕື່ມອີກ,ປັບປຸງສະພາບແວດລ້ອມໃຫ້ຮຽບຮ້ອຍດີ,ປົວແປງເງື່ອນໄຂທີ່ລ່ວງຫາກັນແລະເງື່ອນໄຂສິ່ງແວດລ້ອມ;ສ່ວນເມືອງນ້ອຍທີ່ມີເງື່ອນໄຂພັດທະນາແລ້ວນັ້ນ ຕ້ອງຈັບກາລະໂອກາດໄວ້,ຕັ້ງໜ້າດຶງດູດນັກທຸລະກິດມາລົງທຶນ,ເອົາການພັດທະນາການທ່ອງທ່ຽວຂອງເມືອງນ້ອຍບວກກັບການສ້າງສາຕົວເມືອງນ້ອຍເປັນເອກະພົບດຽວ,ເອົາແຜນສ້າງສາພັດທະນາເມືອງນ້ອຍເປັນໂຄງການເພື່ອຊຸກຍູ້ການສ້າງສາພັດທະນາເມືອງນ້ອຍທ່ອງທ່ຽວ;ສຳລັບໝູ່ບ້ານແມ່ນວ່າມີຊັບພະຍາກອນທ່ອງທ່ຽວແລະວັດທະນະທຳມັ່ງມູນຫຼືມີກຳລັງພັດທະນາບົ່ມຊ້ອນຢ່າງຊັດເຈນ ແຕ່ວ່າ ປະຈຸບັນ ຍັງບໍ່ມີເງື່ອນໄຂພັດທະນານັ້ນ ກໍ່ຕັ້ງໜ້າດຳເນີນການປົກປ້ອງແຜນພັດທະນາເມືອງນ້ອຍທ່ອງທ່ຽວ,ເຮັດວຽກງານຫ້າງຫາກະກຽມບົດວິພາກໂຄງການໄວ້ລ່ວງໜ້າຢ່າງຮຽບຮ້ອຍ,ສ້າງເງື່ອນໄຂ ຕາບໃດໂອກາດສຸກງອມແລ້ວກໍ່ລົງມືສ້າງສາພັດທະນາ.

ຜ່ານການພະຍາຍາມມາ,ການສ້າງສັນເມືອງນ້ອຍທ່ອງທ່ຽວຂອງແຂວງຢູນນານໄດ້ກາຍເປັນຍີ່ຫໍ້ພັດທະນາທຸລະກິດທ່ອງທ່ຽວຂອງຢູນນານ,ມັນໄດ້ເສີມຂະຫຍາຍບົດບາດອັນສຳຄັນຍິ່ງຕໍ່ການຊຸກຍູ້ການພັດທະນາເສດຖະກິດ,ປົກປັກຮັກສາຊັບພະຍາກອນ,ສ້າງຮັ່ງຄູນມີແກ່ຊາວກະສິກອນ,ສ້າງຄວາມສາມັກຄີຊົນເຜົ່າແລະຄວາມສະຖຽນລະພາບຂອງເຂດແຄວ້ນອີກດ້ວຍ.



## 云南首个国家园林城市——安宁

一波碧水，杨柳依依、绿草如茵。整座城市呈现出青竹、翠柳、绿草、河流交相辉映的景象。这就是走进安宁市首先映入人们眼帘的景象。

# ອານໜິງ--ຕົວເມືອງອຸດທິຍານແຫ່ງຊາດທຳອິດຂອງຢູນນານ



ເມື່ອທ່ານເລາະທ່ຽວເຂົ້າສູ່ເມືອງອານໜິງ,ພາບສະດຸດຕານັ້ນມັນແມ່ນໜອງນ້ຳທີ່ຂຽວສ່ອງໃສ,ລຽບຕາມບໍລິເວນແຄມໜອງມີຕົ້ນໂສນເຟືອຍແລະພົມຫຍ້າຂຽວອຸ່ມທຸ່ມ,ທົ່ວເມືອງປະກົດພາບຕົ້ນໄມ້ໃບຫຍ້າແລະແມ່ນ້ຳລຳທານສົດສວຍຂຽວງາມສະຫຼັບກັນ.



ເມືອງອານໜິງແຂວງຢູນນານເປັນ "ຕົວເມືອງອຸດທິຍານແຫ່ງຊາດ "ທີ່ກະຊວງສ້າງສາແຫ່ງຊາດຂອງຈີນຕັ້ງຊື່ໃຫ້ເປັນທາງການ,ແລະກໍ່ເປັນຕົວເມືອງອຸດທິຍານແຫ່ງຊາດແຫ່ງທຳອິດຂອງແຂວງຢູນນານ.ສຳລັບເມືອງອານໜິງຢູ່ພາຍໃນແຂວງຢູນນານພັດເປັນຕົວເມືອງຊ່ຳລືທາງອຸດສາຫະກຳອີກ,ພາຍໃນ



ຂຽວ "ຢ່າງທົ່ວເຖິງ, ໂສມໜ້າຕົວເມືອງໄດ້ມີການປ່ຽນແປງໃຫ້ດີຂຶ້ນນໍາຂູ່ປີ, ຄຸນະພາບສິ່ງແວດລ້ອມນັບມື້ນັບຍົກສູງຂຶ້ນ, ບັນດາລະດັບຄາດໝາຍປູກພົມພືດລ້ວນແຕ່ບັນລຸຂໍ້ມາດຖານຕົວເມືອງອຸດທິຍານແຫ່ງຊາດ.

ເມືອງອານໜິງ, ໄດ້ຕັ້ງຂະແໜງການປູກພົມພືດອຸດທິຍານຕ່າງຫາກ, ຮັບຜິດຊອບຄຸ້ມຄອງດິນສີຂຽວສ່ວນລວມ, ດິນສີຂຽວການຜະລິດ, ດິນສີຂຽວປ້ອງກັນແລະດິນສີຂຽວຖະໜົນຫົນທາງເປັນຕົ້ນພາຍໃນຂອບເຂດໂຄງການທົ່ວເມືອງ, ຊີ້ນໍາການຜະລິດແນວພັນເບ້ຍໄມ້ແລະດອກໄມ້ນາ ໆ ພັນໃນສວນອາດອຸດທິຍານ



ເຂດອຸດົມໄປດ້ວຍຊັບພະຍາກອນແຮ່ທາດ, ສໍາຄັນແມ່ນເອົາການຫຼອມໂລຫະແລະອຸດສາຫະກໍາເຄມີ ເກືອແລະຟົດຟໍເປັນຕົ້ນຕໍ, ກຸ່ມເຫຼັກກ້າຄຸນໝິງກໍ່ຕັ້ງຢູ່ໃນເມືອງອານໜິງ.

ຊຸມປີມໍ່ ໆມານີ້, ເມືອງອານໜິງໄດ້ເພັ່ງເລັງເອົາການກໍ່ສ້າງ "ຕົວເມືອງອຸດສາຫະກໍາສີຂຽວປົ່ນອ້ອມວົງເສດຖະກິດໜອງຕ້ຽນສື" ເປັນເປົ້າໝາຍ, ໄປພ້ອມ ໆກັບການເລັ່ງລັດຊຸກຍູ້ການພັດທະນາເສດຖະກິດ, ເພີ່ມທ່າແຮງສ້າງສັນສະພາບແວດລ້ອມຢ່າງບໍ່ຢຸດຢັ້ງ, ເພື່ອເປັນຈຸດບືນເລີກເສີມສ້າງຕົວເມືອງອຸດທິຍານແຫ່ງຊາດ, ຕົວເມືອງອະນາໄມແຫ່ງຊາດແລະຕົວເມືອງສີວິໄລລະດັບຊາດ, ອອກແຮງດໍາເນີນແຜນການ "ອານໜິງສີຕະຫຼອດຮອດວຽກງານປູກພົມພືດອຸດທິຍານອື່ນ ໆ.

ຜັດແຕ່ປີ 1982 ເປັນຕົ້ນມາ, ອັດຕາສ່ວນດິນສີຂຽວ ເມືອງອານໜິງກວມດິນນໍາໃຊ້ໃນໂຄງການ 25% ເພີ່ມຂຶ້ນເຖິງ 40%. ເມືອງອານໜິງເພີ່ມທະວີການສ້າງສາສະພາບແວດລ້ອມ 8 ປະການຄື: "ນິເວດວິທະຍາຕົວເມືອງກັບຊົນນະບົດ, ພື້ນຖານໂຄງລ່າງແລະການສຶກສາ, ສາທາລະນະສຸກ, ລະບຽບກົດໝາຍ, ມະນຸດຊາດ, ຄວາມສັດຈະແລະນິຍົມການຄ້າ ", ພະຍາຍາມກໍ່ສ້າງເປັນຕົວເມືອງອຸດສາຫະກໍາສີຂຽວປົ່ນອ້ອມວົງເສດຖະກິດໜອງຕ້ຽນສື.

# ຕະຫຼາດເຄື່ອງໃຊ້ອຸປະກອນໂຮງແຮມໃຫຍ່ກວ່າໝູ່ໃນຢູນນານໄດ້ຕັ້ງຫຼັກປັກຖານທີ່ຄຸນໝິງ




## 云南最大酒店设备用品市场落户昆明

云南省最大的酒店设备用品市场——云南鑫东盟国际酒店设备用品市场，是昆明首个面对东南亚市场，也是东南亚最大、最先进、最具现代化、标准化、上档次的酒店用品市场。

ຕະຫຼາດເຄື່ອງໃຊ້ອຸປະກອນໂຮງແຮມສາກົນຊິນອາຊຽນຢູນນານໄດ້ເປີດບໍລິການມາແລ້ວ. ຕະຫຼາດດັ່ງກ່າວເປັນຕະຫຼາດທີ່ຫັນໜ້າສູ່ອາຊີອາຄະເນເທື່ອທຳອິດຂອງຄຸນໝິງ, ແລະກໍ່ເປັນຕະຫຼາດເຄື່ອງໃຊ້ອຸປະກອນໃນໂຮງແຮມທີ່ໃຫຍ່ສຸດ, ກ້າວໜ້າທັນສະໄໝ, ເປັນມາດຖານແລະມີລະດັບສູງໃນອາຊີອາຄະເນ. ຕະຫຼາດກວມເນື້ອທີ່ຕາດິນ 57 ມູ(3.8 ເຮັກຕາ).

ເນື້ອທີ່ກໍ່ສ້າງທີ່ສາມາດນຳໃຊ້ເປັນເຮືອນຢູ່ທາງທຸລະກິດ, ເຮັດການ, ທຸລະກິດເອເລັກໂຕຣນິກ, ເວັບໄຊແລະຕິດຕັ້ງເຄື່ອງອຸປະກອນບໍລິການມີຮອດ 40 ພັນປາຍຕາແມັດ.

ການຕັ້ງຕະຫຼາດອາຊຽນຂຶ້ນນັ້ນ ຈະຊ່ວຍໃຫ້ຢູນນານຄົ້ນຄິດວາງແຜນສ້າງຕະຫຼາດໃຫຍ່ອາຊີອາຄະເນຕື່ມອີກ. ແຕ່ລະປີບັນດາປະເທດອາຊຽນມີຄວາມຕ້ອງການເຄື່ອງໃຊ້ອຸປະກອນຕິດຕັ້ງໂຮງແຮມ ມູນຄ່າສູງຮອດ 5 ຮ້ອຍລ້ານຢວນ. ປະຈຸບັນນີ້ເຄື່ອງໃຊ້ໂຮງແຮມຂອງຢູນນານສຳຄັນແມ່ນສົ່ງອອກຂາຍຮອດປະເທດລາວ, ໄທ, ມຽນມາແລະຫວຽດນາມ, ໂດຍສະເພາະແມ່ນເຄື່ອງໃຊ້ເຮືອນຄົວອາຫານຈີນຂອງຢູນນານຈັ່ງແມ່ນຂາຍດີບຂາຍດີກວ່າໝູ່.

ຈຸດປະກົດເດັ່ນຂອງຕະຫຼາດດັ່ງກ່າວຊຶ່ງຈະນຳໃຊ້ເຄືອຂ່າຍທຸລະກິດເອເລັກໂຕຣນິກອັນເປັນທຸລະກິດໃໝ່ ໆ, ສ້າງຕະຫຼາດການຄ້າທັນສະໄໝທີ່ໂຮມການຄ້າກັບທຸລະກິດເອເລັກໂຕຣນິກເປັນເອກະພົບດຽວ, ເພື່ອບໍລິການຮັບໃຊ້ຫົວໜ່ວຍວິສາຫະກິດແລະພາລະກິດ, ໂຮງແຮມ, ຫໍຮັບແຂກໃນແຂວງຢູນນານແລະອາຊີອາຄະເນ.

ມາຮອດປະຈຸບັນ, ນັກທຸລະກິດການຄ້າທີ່ເຂົ້າສູ່ຕະຫຼາດເຄື່ອງອຸປະກອນໂຮງແຮມຊິນອາຊຽນໄດ້ມີຮອດ 150 ກວ່າຫົວໜ່ວຍ, ເຂົາເຈົ້າແມ່ນມາຈາກແຫ່ງຕ່າງ ໆ ໃນປະເທດຈີນ.

# ງານປະດັບຊ້າງເຜືອກ

圣 象 装 饰　TEL:021-214071













**ທ່ານສາມາດສັ່ງເຮັດປະຕູຢາງຫ້ອງນ້ຳແລະປ່ອງຢ້ຽມຢາງ**

**ໄດ້ທີ່ງານປະດັບຊ້າງເຜືອກ**

订做塑料钢门窗

文、图：赵芳草




"ເວທີປາຖະກະຖາຊາວໜຸ່ມຈີນ--ອາຊຽນ "ຈັດຂຶ້ນຢູ່ສູນວາງສະແດງແຄມໜອງແສງສຸລິຈຽງຊວນ　　“中国—东盟青年论坛”在江川阳光海岸会展中心举行

# ປະເທດຈີນກັບບັນດາປະເທດອາຊຽນເພີ່ມທະວີການຮ່ວມມືທ່ອງທ່ຽວຂອງຊາວໜຸ່ມ

## 中国与东盟各国加强青年旅游合作

为进一步推动中国青年与东盟各国青年间的交流与合作，中国云南抚仙湖2006“中国–东盟青年论坛”在玉溪抚仙湖畔举行。来自东盟10国的青年代表与中国各界青年欢聚一堂，共叙友谊与合作。2006“中国–东盟青年论坛”的一系列活动使中国青年与东盟各国青年之间的友好交往和进一步合作迈出了实质性的步伐。

ເພື່ອຊຸກຍູ້ການແລກປ່ຽນແລະການຮ່ວມມືລະຫວ່າງຊາວໜຸ່ມຈີນກັບຊາວໜຸ່ມບັນດາປະເທດອາຊຽນຕື່ມອີກ, "ເວທີປາຖະກະຖາຊາວໜຸ່ມຈີນ--ອາຊຽນ 2006 ວູຊຽນຢູນນານສປຈີນ" ໄດ້ຈັດຂຶ້ນທີ່ແຄມໜອງວູຊຽນຢີຊີ. ຜູ້ນຳຊາວໜຸ່ມແລະຜູ້ຕາງໜ້າທີ່ມາຈາກ 10 ປະເທດອາຊຽນກັບຊາວໜຸ່ມວົງການຕ່າງໆຂອງຈີນໄດ້ຊຸມນຸມກັນຢ່າງຊົມຊື່ນ, ພ້ອມກັນສົນທະນາພາທີມິດຕະພາບແລະການຮ່ວມມື. ຕານເຈັນຮອງເລຂາອົງຄະນະພັກແຂວງຢູນນານ, ເຫີຈຸນເຄີ ເລຂາຫ້ອງເລຂາສູນກາງຄະນະຊາວໜຸ່ມຕ່າງກໍ່ໄດ້ຕາງໜ້າໃຫ້ຄະນະພັກແຂວງຢູນນານແລະຄະນະປົກຄອງແຂວງກໍ່ຄືສະຫະພັນຊາວໜຸ່ມທົ່ວປະເທດຈີນໄດ້ສະແດງຄວາມອວຍໄຊໃຫ້ພອນການຈັດເວທີປາຖະກະຖາຢ່າງສຸດຊຶ້ງ, ແລະສະແດງການຕ້ອນຮັບຊົມເຊີຍຜູ້ແທນຊາວໜຸ່ມ

ຂອງບັນດາປະເທດອາຊຽນ.

ຄະນະຜູ້ແທນຊາວໜຸ່ມບັນດາປະເທດແລະຄະນະຜູ້ແທນຮົງກົງແລະມາກາວຈີນໄດ້ທະຍອຍກັນກ່າວຄຳປາໄສທີ່ເວທີປາຖະກະຖາ, ເຫີສີຄົງຫົວໜ້າຄະນະຜູ້ແທນຊາວໜຸ່ມຈີນໄດ້ກ່າວຄຳປາໄສທີ່ປ່ຽມລົ້ນໄປດ້ວຍນ້ຳໃຈຟົດຟື້ນດ້ວຍຫົວຂໍ້ "ການສືບທອດວັດທະນະທຳ, ປະດິດສ້າງອັນໃໝ່ແລະການສົມທະນາ, ໜ້າທີ່ລວມຂອງຊາວໜຸ່ມຈີນແລະອາຊຽນພາຍໃຕ້ພູມຫຼັງໂລກາພິວັດ".

ນາງວຽງຄຳ ພົງສຸທວັດ ຜູ້ຕາງໜ້າຄະນະຜູ້ແທນລາວໄດ້ກ່າວຄຳໄສບົນເວທີປາຖະກະຖາດ້ວຍຫົວຂໍ້ "ຊາວໜຸ່ມ, ການທ່ອງທ່ຽວແລະມະນຸດຊາດ." "ຊາວໜຸ່ມເປັນເສົາຄ້ຳແລະອະນາຄົດຂອງຊາດ. ຖ້າວ່າພວກເຮົາຢາກມອງເຫັນການພັດທະນາຂອງປະເທດຊາດທີ່ຍິ່ງໃຫຍ່, ກ່ອນອື່ນຈະຕ້ອງສົ່ງເສີມຊາວໜຸ່ມຂອງພວກເຮົາຕັ້ງໜ້າປະກອບສ່ວນເຂົ້າການພັດທະນາເສດຖະກິດສັງຄົມ. ຕ້ອງຮັກສາມູນເຊື້ອອັນດີງາມຂອງພວກເຮົາ, ຈະຕ້ອງຮັກຊາດ. ອີກດ້ານໜຶ່ງ, ພວກເຮົາຍັງຈະໄດ້ຜ່ານການເຄື່ອນໄຫວຂອງຊາວໜຸ່ມຊຸກຍູ້ທຸລະກິດການທ່ອງທ່ຽວຂອງປະເທດເຮົາ."

ປາຫວັງແທັງຈຸງ ຫົວໜ້າຄະນະຜູ້ແທນຫວຽດນາມສະແດງວ່າ: ຜ່ານການສ້າງເຄືອຂ່າຍທ່ອງທ່ຽວ, ໂດຍສະເພາະແມ່ນສະໜອງການບໍລິການທ່ອງທ່ຽວດ້ວຍລາຄາຖືກໃຫ້ແກ່ຊາວໜຸ່ມ, ຫວຽດນາມໄດ້ສົ່ງເສີມໃຫ້ຊາວໜຸ່ມທ່ອງທ່ຽວຂ້າມແດນ. ເພື່ອສົ່ງເສີມແລະຂະຫຍາຍການແລກປ່ຽນພາກພື້ນທ່ອງທ່ຽວຂອງຊາວໜຸ່ມ, ສະໜອງໂອກາດການສຶກສາຮ່ຳຮຽນແລະທ່ອງທ່ຽວໃຫ້ຊາວໜຸ່ມຫຼາຍກວ່າເກົ່າບັນດາປະເທດອາຊຽນແລະຈີນຄວນສ້າງຕັ້ງພື້ນຖານໂຄງລ່າງທ່ອງທ່ຽວຂອງຊາວໜຸ່ມແຫ່ງໜຶ່ງແລະເຄືອຂ່າຍບໍລິການ, ເພີ່ມທະວີລາຍການແລກປ່ຽນວັດທະນະທຳຂອງຊາວໜຸ່ມ, ພ້ອມທັງຊົມໃຊ້ບົດຮຽນປະສົບການວຽກງານຊາວໜຸ່ມຂອງບັນດາປະເທດນຳກັນຢ່າງທັນເວລາ.

ໃນຂະນະທີ່ສຳພາດຕໍ່ນັກຂ່າວວາລະສານ《ຈຳປາ》, ທ່ານວັນນະ ດວງພະສັກຫົວໜ້າຄະນະຜູ້ແທນລາວໄດ້ເວົ້າວ່າ: ດຽວນີ້ຢູ່ເມືອງລາວມີກະແສນິຍົມພາສາຈີນ, ທ່ານເວົ້າວ່າ: "ປະຈຸບັນການຮ່ວມມືທ່ອງທ່ຽວລະຫວ່າງລາວ--ຈີນຄຶກຄັກດີຫຼາຍ." ຢູນນານມີຊື່ວ່າ "ອານາຈັກພືກສາຊາດ" ແລະ "ອານາຈັກແຫ່ງບຸບຜາ", ຢູ່ປະເທດອາຊີອາຄະເນມີຊື່ລືນາມຫຼາຍ, ເທື່ອນີ້ມາຮອດຢີຊີ, ຮູ້ສຶກວ່າ, ວຽກງານອະນຸຮັກພົມພືດຂອງຢູນນານດີຫຼາຍ, ຮີດຄອງປະເພນີຂອງປະຊາຊົນເປັນຈຸດເດັ່ນພິເສດຂອງຢູນນານ, ລາວກັບຈີນຕິດຈອດກັນ, ມີທ່າດີທີ່ຕັ້ງ, ມີຜົນດີຕໍ່ການຮ່ວມມືນຳກັນສຳລັບພັດທະນາອາຊຽນແລະຈີນຕື່ມອີກ.



ຜູ້ແທນຄະນະຜູ້ແທນລາວຖ່າຍຮູບຮ່ວມກັບຜູ້ແທນຄະນະຜູ້ແທນໄທ
老挝代表团代表与泰国代表团代表合影



ສຳພາດຕໍ່ຫົວໜ້າຄະນະຜູ້ແທນລາວ　采访老挝代团团长



ຜູ້ແທນຄະນະຜູ້ແທນລາວປູກຕົ້ນໄມ້ໄວ້ "ປ່າອະນຸສອນຊາວໜຸ່ມຈີນ--ອາຊຽນ"
老挝代表团代在“中国—东盟青年纪念林”植树

# ກອງປະຊຸມລັດຖະມົນຕີກະຊວງສາທາລະນະສຸກສະໄໝປະຖົມມະເລີກລະຫວ່າງຈີນ--ອາຊຽນໄດ້ຈັດຂຶ້ນທີ່ມຽນມາ

## 首届中国－东盟卫生部长会议在缅甸举行

首届中国－东盟卫生部长会议在缅甸仰光举行，会议集中讨论了防控艾滋病、禽流感及新发传染病等问题。

ກອງປະຊຸມລັດຖະມົນຕີກະຊວງສາທາລະນະສຸກສະໄໝປະຖົມມະເລີກລະຫວ່າງຈີນ--ອາຊຽນໄດ້ຈັດຂຶ້ນທີ່ຢາງກຸ້ງແຫ່ງມຽນມາ,ກອງປະຊຸມໄດ້ລວມສູນປຶກສາຫາລືບັນຫາປ້ອງກັນຄວບຄຸມໂລກເອດ ໄຂ້ຫວັດສັດປີກແລະພະຍາດຕິດແປດທີ່ເກີດຂຶ້ນໃໝ່ເປັນຕົ້ນ.

ທ່ານອາງລູງເຕີ ລັດຖະມົນຕີຊ່ວຍວ່າການກະຊວງສາທາລະນະສຸກຈີນກ່າວຄຳປາໄສໃນກອງປະຊຸມວ່າ,ປະຈຸບັນ ມວນມະນຸດປະເຊີນໜ້າກັບສິ່ງທ້າທາຍຢ່າງໜັກໜ່ວງຈາກພະຍາດຕິດແປດ,ການປ້ອງກັນແລະຄວບຄຸມຢ່າງມີປະສິດທິຜົນຕໍ່ຄົນຕິດແປດໄຂ້ຫວັດສັດປີກທີ່ມີລັກສະນະພາໃຫ້ເກີດພະຍາດໃນລະດັບສູງເປັນຕົ້ນເຊິ່ງເປັນພະຍາດຕິດແປດທີ່ເກີດຂຶ້ນໃໝ່ນັ້ນໄດ້ກາຍເປັນໜ້າທີ່ລວມທີ່ປະເຊີນໜ້າຂອງນາ ໆຊາດ.ການດຳເນີນການຮ່ວມມືແລະແລກປ່ຽນອັນເລິກເຊິ່ງກວ່າເກົ່າແລະມີເນື້ອໃນທາດແທ້ກວ່າເກົ່າພາຍໃຕ້ຄວາມພະຍາຍາມພ້ອມກັນຈາກນານາຊາດ,ກໍ່ສາມາດບັນລຸການຄວບຄຸມພະຍາດໄຂ້ຫວັດສັດປີກ,ປ້ອງກັນແລະຄວບຄຸມການລະບາດຂອງພະຍາດຕິດແປດທີ່ເກີດຂຶ້ນໃໝ່ຢ່າງມີປະສິດທິຜົນ.ລັດຖະບານຈີນສຸດທີ່ເອົາໃຈໃສ່ແລະຕັ້ງໜ້າເຂົ້າຮ່ວມການຮ່ວມມືສາກົນທາງດ້ານປ້ອງກັນຄວບຄຸມການລະບາດຂອງພະຍາດຕິດແປດທີ່ເກີດຂຶ້ນໃໝ່,ແລະສະໜອງການຊ່ວຍເຫຼືອທາງດ້ານກ້ອນທຶນ ວັດຖຸແລະເຕັກນິກໃຫ້ແກ່ປະເທດທີ່ປະສົບຜົນກະທົບຈາກພະຍາດພາຍໃນຂອບເຂດຕາມຄວາມສາມາດຂອງຕົນທີ່ເຮັດໄດ້.

ອີງຕາມບົດລາຍງານສະຫລຸບຂອງກອງປະຊຸມ,ຈີນເຫັນດີຜ່ານກອງທຶນຮ່ວມມືສາທາລະນະສຸກຈີນ--ອາຊຽນ,ຕັ້ງໜ້າເພີ່ມທະວີການຮ່ວມມືກັບອາຊຽນໃນຂົງເຂດສາທາລະນະສຸກ,ເກື້ອກູນໂຄງການຮ່ວມມືສາທາລະນະສຸກພາຍໃນພື້ນທີ່ປະຈຳຂອງທັງສອງຝ່າຍ,ແລະເພີ່ມທະວີການຮ່ວມມືໃນຂົງເຂດປ້ອງກັນປິ່ນປົວໂລກເອດ ປ້ອງກັນແລະຄວບຄຸມພະຍາດໄຂ້ຫວັດສັດປີກແລະພະ ຍາດຕິດແປດທີ່ເກີດຂຶ້ນໃໝ່ກໍ່ຄືປຸກຢາດັ້ງເດີມຕື່ມອີກ.

ທ່ານບີເລຍເຄີດັດ ຮອງເລຂາທິການໃຫຍ່ອາຊຽນຕີລາຄາສູງຕໍ່ກອງປະຊຸມເທື່ອນີ້ໃນງານສຳພາດແກ່ນັກຂ່າວທີ່ຈັດຂຶ້ນພາຍຫຼັງກອງປະຊຸມດັ່ງກ່າວ,ແລະສັນລະເສີນປະເທດຈີນທີ່ໄດ້ໃຫ້ການຊ່ວຍເຫຼືອໃນທາງດ້ານໂຄງການຮ່ວມມືສາທາລະນະສຸກຄື ປ້ອງກັນປິ່ນປົວໂລກເອດ ປ້ອງກັນແລະຄວບຄຸມພະຍາດ SARS ແລະພະຍາດໄຂ້ຫວັດສັດປີກເປັນຕົ້ນໃນຊຸມປີມໍ່ ໆ ຜ່ານມາ.ທ່ານກ່າວວ່າ,ປະເທດຈີນເປັນຄູ່ສົນທະນາກັນຜູ້ໜຶ່ງສຸດທີ່ຫ້າວຫັນຂອງອາຊຽນ.

ກອງປະຊຸມເທື່ອນີ້ຍັງຕົກລົງກອງປະຊຸມລັດຖະມົນຕີກະຊວງສາທາລະນະສຸກສະໄໝທີ 2 ຈະຈັດຂຶ້ນທີ່ປະເທດຟີລິບປິນໃນປີ 2008.

## 东南亚已成为世界最具经济活力的地区之一

2006 年以来东盟经济增长势头加快，经济学家认为东南亚已成为世界上最具有经济活力的地区之一。

ໃນປີ 2006 ຜ່ານມາ,ທ່ວງທ່າເສດຖະກິດເຕີບໂຕຂອງອາຊຽນໄດ້ມີການເລັ່ງລັດໄວຂຶ້ນ,ນັກເສດຖະສາດເຫັນວ່າ: ອາຊີອາຄະເນໄດ້ກາຍເປັນໜຶ່ງໃນພາກພື້ນທີ່ມີຊີວະພະລັງທາງເສດຖະກິດທີ່ສຸດໃນໂລກ.

ຕາມສະຖິຕິ,ປີນີ້ ເສດຖະກິດໄຕມາດທີໜຶ່ງຂອງສິງກະໂປໄດ້ເພີ່ມຂຶ້ນ 5.2% ,ເມື່ອທຽບໃສ່ປີກາຍໃນເວລາດຽວກັນ.ເສດຖະກິດໄຕມາດທີໜຶ່ງຂອງມາເລເຊຍເພີ່ມຂຶ້ນ 5.3%,ລື່ນກາຍ 5.2%ໃນໄຕມາດທີ 4 ຂອງປີກາຍ.ດັດຊະນີການຜະລິດອຸດສາຫະກຳໄຕມາດທີ 1 ຂອງໄທ,ອັດຕາເພີ່ມປະຈຳປີ 8.8%,ລື່ນກາຍ 7.2%ໃນໄຕມາດທີ 4ຂອງປີກາຍ.ເດືອນ 1-5,ຫວຽດນາມໄດ້ບັນລຸຍອດມູນຄ່າອຸດສາຫະກຳ 4.41ລ້ານກີບດົ່ງ(ກີ=ຮ້ອຍລ້ານ),ເມື່ອທຽບໃສ່ອັດຕາຜ່ານມາເພີ່ມຂຶ້ນ 16.9%.ອັດຕາເສດຖະກິດເຕີບໂຕຂອງກຳປູເຈຍຍັງຄົງຮັກສາຢູ່ລະຫວ່າງ 6%.ສ່ວນອິນໂດເນເຊຍຍ້ອນຜົນກະທົບຈາກລາຄານ້ຳມັນຂອງໂລກແລະໄພແຜ່ນດິນໄຫວ,ເດືອນ 1-5 ເສດຖະກິດເຕີບໂຕ 4.6%,ອັດຕາເພີ່ມຄ່ອນຂ້າງຫລຸດລົງ.

ເສດຖະກິດອາຊຽນສືບຕໍ່ຮັກສາຄວາມເຕີບໂຕຢ່າງໝັກແໜ້ນ.ໃນທາງດ້ານການສົ່ງອອກ,ຄວາມຕ້ອງການພາຍໃນອາຊຽນໄດ້ຂະຫຍາຍກວ້າງແລະປັບປຸງໂຄງປະກອບການສົ່ງອອກ,ເຮັດໃຫ້ການສົ່ງອອກແຕ່ລະປີຂອງອາຊຽນເພີ່ມຂຶ້ນສະເລ່ຍເຖິງ 25% ຂຶ້ນໄປ.ການຄ້າຂາອອກຄ່ອງຕົວ ມັນໄດ້ກາຍເປັນປັດໄຈສຳຄັນເພື່ອກະຕຸກຊຸກຍູ້ເສດຖະກິດອາຊຽນເຕີບໂຕໄວ.

ໃນທ່າມກາງເສດຖະກິດຂອງອາຊຽນພວມເຕີບໂຕນັ້ນ ມັນໄດ້ມີຈຸດພິເສດໃໝ່ປະກົດອອກເດັ່ນຊັດຄື: ປະການໜຶ່ງແມ່ນປະເທດສະມາຊິກອາຊຽນອັນມີສິງກະໂປແລະມາເລເຊຍເປັນຕົວແທນໄດ້ດຳເນີນການດັດປັບເສດຖະກິດກະແສຫຼັກຢ່າງບໍ່ຢຸດຢັ້ງ,ຂະຫຍາຍການນຳເຂົ້າແລະລົງທຶນດ້ານວິຊາອາຊີບຄື: ຂໍ້ມູນຂ່າວສານເອເລັກໂຕຣນິກ,ຊີວະວິທະຍາ,ໂຄງການນອກຝັ່ງ,ການຄຸ້ມຄອງການເງິນແລະການພັກການທ່ອງທ່ຽວ,ຍົກສູງກຳລັງແກ້ງແຍ້ງທາງເສດຖະກິດ.ປະການສອງແມ່ນເພີ່ມທ່າແຮງດຶງດູດທຶນຕ່າງປະເທດເຂົ້າມາ.ບັນດາປະເທດອາຊຽນກໍລ້ວນແຕ່ໄດ້ໃຊ້ມາດຕາການທີ່ຕ່າງກັນເພີ່ມທ່າແຮງດຶງດູດເອົາທຶນຕ່າງປະເທດເຊັ່ນກັນ.

ທ່ວງທ່າສະພາບຈະເລີນຢ່າງສືບເນື່ອງຂອງຄວາມຕ້ອງການຊົມໃຊ້ແລະຄວາມຕ້ອງການລົງທຶນໃນພາກພື້ນອາຊຽນ,ນະໂຍບາຍເສດຖະກິດມະຫາພາກກໍມີຜົນອຳນວຍແກ່ເສດຖະກິດເຕີບໂຕ,ແນວໂນ້ມເສດຖະກິດເປັນເອກະພາບດຽວໃນພາກພື້ນກໍເພີ່ມທ່າແຮງຂຶ້ນຢ່າງບໍ່ຢຸດຢັ້ງ,ມັນອາດເປັນການສ້າງໂອກາດລົງທຶນແລະການຄ້າໃໝ່,ທຶນສາກົນທີ່ໄຫຼເຂົ້າສູ່ພາກພື້ນອາຊຽນຍັງຄົງເພີ່ມຂຶ້ນອີກ,ທັງໝົດເຫຼົ່ານີ້ລ້ວນແຕ່ຈະຊ່ວຍໃຫ້ພາກພື້ນອາຊຽນສືບຕໍ່ຮັກສາທ່ວງທ່າເສດຖະກິດເຕີບໂຕຕໍ່ໄປ.



## ອາຊີອາຄະເນໄດ້ກາຍເປັນໜຶ່ງໃນພາກພື້ນທີ່ມີຊີວະພະລັງທາງເສດຖະກິດທີ່ສຸດໃນໂລກ

文：源古

# ສົນທະນາພາທີປະເພນີເທສະການກາງ



ເຂົ້າໜົມພະຈັນ 中秋月饼



## 中秋时节话风俗

中秋节是中华民族的传统佳节。中秋节时，云稀雾少，月光皎洁，人们都会举行赏月、祭月、吃月饼等一系列活动，祈祝家人生活美满、甜蜜、平安。

ເທສະການກາງລະດູໃບໄມ້ຫຼົ່ນເປັນບຸນປະເພນີຂອງຊາດຈີນ.ອີງຕາມປະຕິທິນຈັນທະຄະຕິຂອງຈີນແມ່ນທ້ອງເດືອນ 8 ກາງລະດູໃບໄມ້ຫຼົ່ນຊຶ່ງນັບເປັນເດືອນທີ 2 ຂອງໄຕມາດທີ 3. ວັນທີ 15 ເດືອນ 8 ພໍດີຢູ່ກາງລະດູໃບໄມ້ຫຼົ່ນ,ຈຶ່ງເອີ້ນກັນວ່າ "ບຸນກາງລະດູໃບໄມ້ຫຼົ່ນ".ແຕ່ບາງແຫ່ງຮຽກກັນວ່າ"ເທສະການໄຫວ້ພະຈັນ"ຫຼື"ເທສະການຊົມຈັນ"ກໍ່ມີ.ເພາະໃນລາຕີການກາງລະດູໃບໄມ້ຫຼົ່ນນີ້ຢູ່ເຂດແຄ້ວນສ່ວນໃຫຍ່ໃນເມືອງຈີນກໍ່ມີຮີດຄອງນິຍົມກັນເຮັດເຂົ້າໜົມທີ່ມີຮູບມົນ ໆຄືດວງພະຈັນ ທາງໃນອ່ວໄສ້ນ້ຳຕານ,ໝາກວາ,ດອກກຸ້ຍແລະພືດຜັກ,ເຮັດຮູບດວງຈັນແລະຕົ້ນດອກກຸ້ຍ(Osmanthus fragrans)ແລະກະຕ່າຍໃສ່ຂ້າງນອກ.ຫຼັງຈາກເອົາໄຫວ້ພະຈັນແລ້ວ ຜູ້ໃຫຍ່ໃນຄອບຄົວກໍ່ເອົາເຂົ້າໜົມນັ້ນມາແບ່ງກັນຕາມຫົວຄົນຜູ້ລະຊິ້ກ,ຖ້າຜູ້ໃດບໍ່ຢູ່ເຮືອນກໍ່ຈຶ່ງໄວ້ໃຫ້ສ່ວນໜຶ່ງເພື່ອສະແດງຄວາມສາມັກຄີໃນຄອບຄົວ.ປະເທດຈີນກວ້າງໃຫຍ່ໄພສານ,ຮີດຄອງປະເພນີວັນບຸນກາງລະດູໃບໄມ້ຫຼົ່ນດັ່ງກ່າວໃນທ້ອງຖິ່ນຕ່າງ ໆກໍ່ແຕກຕ່າງກັນ,ແຕ່ກໍ່ເຕັມໄປດ້ວຍບັນຍາກາດວັດທະນະທຳແລະມ່ວນຊື່ນລື່ນເລີງ.

ເທສະການກາງລະດູໃບໄມ້ຫຼົ່ນນີ້ນິຍົມກັນມາແຕ່ສະໄໝລາຊະວົງສົ່ງ,ຮອດສະໄໝລາຊະວົງໝິງແລະຊິງ ກໍ່ມີຊື່ເທົ່າທຽມກັບປີໃໝ່ສາກົນ,ກາຍເປັນໜຶ່ງໃນວັນບຸນສຳຄັນຂອງຈີນ,ແລະເປັນບຸນປະເພນີທີ່ຖັດຈາກບຸນກຸດຈີນ.

ເທສະການດັ່ງກ່າວຍັງມີທີ່ຮຽກກັນຕ່າງ ໆເຊັ່ນ:"ບຸນເດືອນ 8""ບຸນເຄິ່ງເດືອນ 8",ບາງແຫ່ງກໍ່ຮຽກວ່າ:"ບຸນພະຈັນ",ເພາະເທສະການກາງລະດູໃບໄມ້ຫຼົ່ນນີ້ເປັນເດືອນເພັງພະຈັນເຕັມດວງ,ເປັນສັນຍາລັກວົງສາມັກຄີ,ດັ່ງນັ້ນພັດຮຽກກັນວ່າ"ບຸນຮ່ວມກັນສາມັກຄີ"ອີກ.

ການກິນເຂົ້າໜົມພະຈັນແລະຊົມຈັນເປັນການເຄື່ອນໄຫວທີ່ຂາດບໍ່ໄດ້ໃນເທສະການດັ່ງກ່າວ.ເດີມທີເຂົ້າໜົມພະຈັນແມ່ນ

# ລະດູໃບໄມ້ຫຼົ່ນ



ຟ້ອນລວງ 舞龙



ຊຸມຊົນທີ່ຊົມໂຄມໄຟແລະທວາຍປິດສະໜາ 赏灯、猜迷的人们

ເຮັດມາສໍາລັບໄຫວ້ພະຈັນ,ຕາມມາຄົນທັງຫຼາຍກໍ່ຄ່ອຍ ໆຖືເອົາການຊົມພະຈັນວັນເພັງແລະຊີມເຂົ້າໜົມພະຈັນໃນເທສະການເປັນສັນຍາລັກແຫ່ງຄວາມຮ່ວມສາມັກຄີກັນໃນຄອບຄົວ,ເຂົ້າໜົມພະຈັນກໍ່ຄ່ອຍ ໆກາຍເປັນຂອງຕ້ອນຂອງຝາກໃນວັນບຸນ. ເຂົ້າໜົມພະຈັນເປັນສັນຍາລັກວົງສາມັກຄີເປັນຂອງກິນຈໍາເພາະໃນເທສະການກາງລະດູໃບໄມ້ຫຼົ່ນ.ຕອນລາຕີການວັນບຸນ,ຄົນທັງຫຼາຍຍັງມັກກິນໝາກໂມແຕງຕົ່ມ,ອວຍພອນໃຫ້ບ້ານໃຫເຮືອນມີຄວາມສຸກຫວານຊື່ນແລະຢູ່ສະຫງົບຫາຍຮ້ອນທຸກປະການ.ຮີດຄອງຊົມຈັນໃນເທສະການດັ່ງກ່າວມີມາແຕ່ບູຮານະການ,ມີບົດກອນລືຊື່ຂອງຄົນບູຮານຫຼາຍທ່ານກໍ່ໄດ້ແຕ່ງກາບແຕ່ງກອນເລົ່າເຖິງດວງພະຈັນ.ມາໃນປະຈຸບັນ,ໄທເຮືອນນັ່ງອ້ອມຮອບດອມກັນຊົມພາບງົວພະຈັນວັນເພັງຍັງຄົງເປັນການເຄື່ອນໄຫວທີ່ຂາດບໍ່ໄດ້ຕະຫຼອດມາ.

ເທດສະການກາງລະດູໃບໄມ້ຫຼົ່ນ,ດວງພະຈັນໃສແຈ້ງ,ດວງດາວລະຍິບລະຍັບເກືອບດັບ,ຊຸມຊົນທັງຫຼາຍນອກຈາກຈັດການເຄື່ອນໄຫວຕ່າງ ໆອວຍພອນຄວາມສາມັກຄີຄົບໜ້າໄຄ່ຕາຊົມຈັນ,ໄຫວ້ພະຈັນແລະກິນເຂົ້າໜົມພະຈັນແລ້ວ,ມີບາງທ້ອງຖິ່ນຍັງຟ້ອນລວງຫຍ້າແລະກໍ່ພະທາດອີກ.ໃນເທສະການນີ້ນອກຈາກເຂົ້າໜົມພະຈັນແລ້ວ,ຜົນລະໄມ້ສົດ ໆ ແລະໝາກໄມ້ເຊື່ອມກໍ່ເປັນຂອງກິນແຊບທີ່ປ້ອນຕະຫຼາດລາຕີເທສະການກາງລະດູໃບໄມ້ຫຼົ່ນ.

文/图：胡小平



# ຊົນເຜົ່າຢີ່ສະຫຼອງປີໃໝ່

ຖືຊີ້ນໝູ, ຊີ້ນແຊ່ແຂງແລະໄສ້ກອກໄປຢາມຍາດພີ່ນ້ອງ　带上猪肉 香肠 冻肉走亲访友

# --ວັນບຸນຜີປາກແລງຊານ

## 凉山最盛大的节日——彝族闹新年

四川凉山彝族常年沉浸在节日的欢乐气氛之中。最盛大的节日就是每年十月的彝族年，它是凉山彝族人民传统的佳节。

ຊົນເຜົ່າຢີທີ່ແລງຊານແຂວງເສຊວນຊະໂລມຢູ່ບັນຍາກາດມ່ວນຊື່ນຂອງວັນບຸນຕະຫຼອດປີ.ວັນບຸນທີ່ຄຶກຄື້ນກວ່າໝູ່ແມ່ນປີໃໝ່ເຜົ່າຢີ.ເພາະປີໃໝ່ເຜົ່າຢີເປັນມື້ບຸນປະເພນີຂອງປະຊາຊົນເຜົ່າຢີທີ່ແລງຊານ,ຢາກທຽບເທົ່າບຸນກຸດຈີນ(ບຸນກິນຈຽງ)ຂອງຊົນເຜົ່າຮ່ານ.ການຕົກລົງປີໃໝ່ເຜົ່າຢີຕ້ອງຜ່ານໝໍໂຫນຫຼືເຖົ້າແກ່ກາງບ້ານ,ໂດຍທົ່ວໄປຈະແມ່ນເດືອນກະຕ່າຍ(ເດືອນ 10 ຕາມຈັນທະຄະຕິ)ຂອງປະຕິທິນເຜົ່າຢີ ພາຍຫຼັງການເກັບກ່ຽວແລ້ວໃນລະດູໃບໄມ້ຫຼົ່ນ.

ເມື່ອເລືອກເອົາມື້ສົມວັນຊອບຂອງປີໃໝ່ເຜົ່າຢີແລ້ວ,ໝູ່ບ້ານພູດອຍກໍ່ປະກົດພາບອັນຂຸ້ນຂ້ຽວທົ່ວ ໆໄປ,ຊຸມຊົນໃນໝູ່ບ້ານຟົດຟື້ນຊື່ນບານກະກຽມຂອງຫຼິ້ນກິນປີໃໝ່ເຊັ່ນວ່າ ຫາງຫາຟືນຫຼືໃຫ້ກຸ້ມປີ,ເຄື່ອງເທດຕ່າງ ໆ ສໍາລັບໃຊ້ປຸງແຕ່ງ,ຍັງຈະຕັດຊຸດເສື້ອໃໝ່ໃຫ້ທຸກຄົນໃນຄອບຄົວ,ຈັກສານເບາະຮອງຫຍ້າ,ໂມ້ຖົ່ວເຫຼືອງເຮັດເຕົ້າຮູ້,ເຮັດອະນາໄມປັດກວາດເຮືອນຊານບ້ານຢູ່ແລະຊັກເຄື່ອງລ້າງຖ້ວຍຊາມໝໍ້ໄຫໄຕພາດໃຫ້ສະອາດສະອາງ.

ປີໃໝ່ເຜົ່າຢີທໍາມະດາແມ່ນ 3 ມື້.ມື້ທໍາອິດເປັນມື້ສະຫຼອງປີໃໝ່ເປັນທາງການ.ຕັ້ງແຕ່ເຊົ້າຕູ່ ເຂົາເຈົ້າໄດ້ສຸມກອງໄຟລຸກພ່າງ ໆຢູ່ໜ້າເຮືອນໃຜເຮືອນມັນທົ່ວໝູ່ບ້ານ,ນິມິດວ່າແປວຄວັນຕາງໜ້າໝົດທັງໄທເຮືອນຂໍໃຫ້ພະຍາຟ້າແຖນຈົ່ງດົນບັນດານຄວາມສຸກແລະເກັບກູ້ຜົນລະປູກໄດ້ອຸດົມສົມບູນໃນປີຂ້າງໜ້າ,ທັງເຊີນຊວນໃຫ້ດວງວິນຍານຂອງບັນພະບຸລຸດກັບມາສະຫຼອງບຸນນໍາລູກຫຼານເຫຼັນຫຼອນ.ຖັດມາມື້ຖ້ວນສອງເປັນມື້ຍູ້ທ່າງຫຼິ້ນ



ພາຍຫຼັງກິນເຂົ້າບຸນປີໃໝ່,ຜູ້ເປັນແມ່ປັນເຂົ້າໜົມອົມໃຫ້ລູກເຕົ້າ

吃年饭时，母亲给孩子们分发糖果

ກັນຢ່າງເບີກບານສະໜຸກສະໜານ,ເປັນກະແສສູງຂອງປີໃໝ່ເຜົ່າຢີ.ຊຸມໝູ່ເດັກນ້ອຍພາກັນຖືເອົາຂອງກິນຂອງຕົນໄປກິນເຂົ້າປ່າ(ປິກນິກ)ລວມໝູ່,ສ່ວນບ່າວ ໆສາວ ໆນຸ່ງເຄື່ອງເອ້ຢ້ອງປາງບຸນຊຸມລຸມກັນມ່ວນຊື່ນ,ຊຸມໝູ່ຜູ້ສາວດີດເຕີນ(ໃນປາກ)ທີ່ມ່ວນ ໆ ທັງດີດກະຈັບປີສົ່ງສຽງຂັບລໍາໄພເລາະເພາະຫູຢ່າງຄຶກຄື້ນ,ທ່າມກາງສຽງເຕີນສຽງກະຈັບປີແລະສຽງຂັບລໍາຊຸມໝູ່ບ່າວ ໆສາວ ໆພາກັນເຕັ້ນລໍາພື້ນເມືອງເຜົ່າຢີຢ່າງຊື່ນບານສໍາລານໃຈ ພ້ອມທັງດໍາເນີນການເຄື່ອນໄຫວກິລາກາຍະກໍາແລະການມ່ວນຊື່ນປະເພດຕ່າງ ໆ;ສ່ວນຜູ້ຊາຍທີ່ສ້າງຄອບຄົວແລ້ວນັ້ນພັດທະຍອຍກັນໄປຢີ້ໄປຢາມໝູ່,ຈັດພາເຂົ້າດື່ມເຫຼົ້າເຕັມຖ້ວຍ,ກິນຊີ້ນຕ່ອນໜາປາຕ່ອນໃຫຍ່,ສົ່ງພອນປີໃໝ່ແດ່ເຈົ້າບ້ານເຈົ້າເຮືອນ.

ມື້ຖ້ວນສາມເປັນມື້ສົ່ງລາບັນພະບຸລຸດກັບເມືອເມືອງແມນແດນຟ້າ.ໄທເຜົ່າຢີມີໃຈໃສສັດທາແລະຈິງໃຈທີ່ສຸດຈັດພິທີພາເຂົ້າທີ່ມີອາຫານແຊບຊ້ອຍເພື່ອສົ່ງລາດວງວິນຍານຂອງບັນພະບຸລຸດ.ພິທີສົ່ງລາຈັດຂຶ້ນຍິ່ງໄວກໍ່ຍິ່ງດີ.ເພື່ອຈະໄດ້ໃຫ້ດວງວິນຍານຂອງບັນພະບຸລຸດເດີນທາງກັບດ້ວຍຄວາມຕະຫຼອດປອດໄພ.ການບະບົນບັນພະບຸລຸດໃນປີໃໝ່ເຜົ່າຢີເປັນປະເພນີຂອງເຜົ່າຢີ,ເຂົາເຈົ້າເຄົາລົບຕໍ່ຄົນຜູ້ເຖົ້າ,ບູຊາບັນພະບຸລຸດ,ດັ່ງນັ້ນຮີດຄອງປະເພນີບະບັນພະບຸລຸດໄດ້ຜ່ານຫຼາຍຟ້າລາປີມາຈົນເທົ້າທຸກວັນນີ້,ພວກເຂົາເຈົ້າຖືວ່າ:ຄວາມຢູ່ດີມີສຸກໃນຄອບຄົວ,ຟ້າຝົນອໍານວຍໃນປີຕໍ່ມາແລະຄວາມຈະເລີນຂະຫຍາຍຕົວຂອງ


ພາບເກັບກູ້ອຸດົມສົມບູນ 丰收的喜悦

ລູກ ໆຫຼານ ໆລ້ວນແຕ່ອາໄສການປົກປ້ອງຈາກດວງວິນຍານຂອງບັນພະບຸລຸດ.

ອວຍພອນປີໃໝ່ກໍ່ແມ່ນເນື້ອໃນສຳຄັນທີ່ວັນບຸນປີໃໝ່. ໃນລະຫວ່າງວັນບຸນປີໃໝ່, ບໍ່ຈຳແນກເຊື້ອຊາດຫຼືແຂກແລະເຈົ້າພາບ, ທຸກ ໆເຮືອນກໍ່ລ້ວນແຕ່ອອກໄປສົ່ງພອນປີໃໝ່ໄປຍັງຍາດພີ່ນ້ອງ


ປີໃໝ່ເຜົ່າຢີ່ຂະເຈົ້າເອົາຊີ້ນຢ້າງຊັບສິນມາແຂ່ງຂັນກັນ 彝族年比腊肉比财比富


ສຸກສັນເຍົາໄວ 快乐童年

ເພື່ອນຝູງແລະຜູ້ເຖົ້າຜູ້ແກ່ອາວຸໂສເຖິງວ່າ ທາງໄກ ລຳບາກກາກກຳ, ຂຶ້ນພູລົງຫ້ວຍກໍ່ຕ້ອງໄປອວຍພອນປີໃໝ່. ຜູ້ໄປອວຍພອນປີໃໝ່ໃຜ ໆກໍ່ນຸ່ງເຄື່ອງເອ້ຢ້ອງ, ໜ້າຊື່ນຕາບານ. ເມື່ອໄປເຮືອນໃດກໍ່ແຂ່ງກັນຂັບຮ້ອງເພງເກັບກູ້ອຸດົມສົມບູນແລະກ່າວຄຳອວຍໄຊໃຫ້ພອນພ້ອມທັງມອບຂອງຂວັນສົ່ງພອນປີໃໝ່ນຳ

ອີກ, ເຈົ້າເຮືອນກໍ່ເອົາເຫຼົ້າຢາປາປີ້ງມາສູ່ແຂກຢ່າງອົບອຸ່ນ.

ປີໃໝ່ເຜົ່າຢີບໍ່ສະເພາະແຕ່ເປັນວັນບຸນຝີປາກເທົ່ານັ້ນ ຍັງເປັນວັນບຸນຜ້ຶງຫູອີກ. ເນື້ອໃນຂອງເພງຂັບຮ້ອງອຸດົມສົມບູນມາກຫຼາຍ, ທຳນອງຂັບຮ້ອງກໍ່ຄືງທີ່ແລະວິທີຂັບຮ້ອງເປັນເອກະລັກສະເພາະຂອງໄທເຜົ່າຢີ. ເນື້ອເພງຂັບລຳເລີ່ມແຕ່ທຳນາກ້າຫວ່ານເຂົ້າສາມລ່ຽມຮອດຍາມເກັບກ່ຽວ, ຍາມເກັບກ່ຽວຕໍ່ໃສ່ການລ້ຽງສັດອອກແມ່ແພ່ພັນຕະຫຼອດເຖິງຂັບລຳຊີວິດອັນສົດໃສພຽບພ້ອມໄປດ້ວຍຄວາມສຸກສະບາຍຫາຍຮ້ອນໃນປີຂ້າງໜ້າ... ຊຸມຊົນພາກັນຂັບຮ້ອງເພງປີໃໝ່, ຍູທ່າງມ່ວນຊື່ນລື່ນເລີງທ່າມກາງວັນບຸນຂອງເຂົາເຈົ້າ.

ໃນລະຫວ່າງປີໃໝ່ເຜົ່າຢີ, ບໍ່ວ່າທ່ານຈະເປັນຊາວພື້ນເມືອງຫຼືວ່າຊາວຕ່າງດ້າວທ້າວຕ່າງແດນຫຼືເປັນຜູ້ມາສົ່ງພອນປີໃໝ່ຫຼືຜູ້ທ່ຽວຊົມກໍ່ຕາມ ທະແນມແຕ່ເຂົ້າແວ່ເຮືອນໄທເຜົ່າຢີທີ່ຮັກແຂກແພງເພື່ອນແລ້ວ ກໍ່ຖືເປັນແຂກຜູ້ມີກຽດຍອດຢ້ຽມ, ສິ່ງທີ່ຮັບຕ້ອນທ່ານນັ້ນ ແມ່ນໃບໜ້າອັນຍິ້ມແຍ້ມແຈ່ມໃສຢ່າງກະຕືລືລົ້ນແລະພາເຂົ້າອາຫານໂອຊາລົດທີ່ອຸດົມຫຼາຍຫຼາກ.



ຊຸ້ນຂ້ຽວຕັດຫຍິບເສື້ອໃໝ່ 彝族年赶集的盛装妇女



ແມ່ຍິງນຸ່ງເຄື່ອງເອ້ໄປຕົກຕະຫຼາດປາງບຸນປີໃໝ່ 彝族年赶集的盛装妇女

文：陆 蕊　绘图：江 洋

wǒ néng yòng yí xià nǐ de xiàng pí cā ma
# 我能用一下你的橡皮擦吗?
# ຂ້ອຍຂໍໃຊ້ຢາງລຶບຂອງເຈົ້າຈັກໜ້ອຍຊິໄດ້ບໍ່

yī cí yǔ
## 一、词语 ຄຳສັບ:

xiàng pí cā
橡皮擦 ຢາງລຶບ

qiān bǐ
铅笔 ສໍດຳ

shū
书 ປຶ້ມ

yǔ sǎn
雨伞 ຄັນຮົ່ມ

kě yǐ
可以 ໄດ້ຢູ່

bào qiàn
抱歉 ຂໍໂທດ,ເສຍໃຈ

bù néng
不能 ບໍ່ໄດ້

néng
能 ໄດ້

jiè
借 ຢືມ

dāng rán
当然 ເອີ,ໄດ້

xiè xiè
谢谢 ຂອບໃຈ

nǎ li
哪里 ຢູ່ໃສ

huan
还 ສົ່ງຄືນ

èr jù zi
## 二、句子: ປະໂຫຍກ:

wǒ néng jiè yí xià nǐ de qiān bǐ ma
1、我能借一下你的铅笔吗?

(ຂ້ອຍ)ຂໍໃຊ້ສໍດຳຂອງເຈົ້າ(ນ້ອງ,ອ້າຍ)ຈັກໜ້ອຍໄດ້ບໍ?

néng bǎ nǐ de xiàng pí cā jiè wǒ yòng yí xià ma
2、能把你的橡皮擦借我用一下吗?

(ຂ້ອຍ)ຂໍໃຊ້ຢາງລຶບຂອງເຈົ້າ(ນ້ອງ,ອ້າຍ)ຈັກໜ້ອຍໄດ້ບໍ?

wǒ xiǎng kàn yí xià nǐ de shū kě yǐ ma
3、我想看一下你的书，可以吗?

(ຂ້ອຍ)ຂໍອ່ານປຶ້ມຂອງເຈົ້າ(ນ້ອງ,ອ້າຍ)ແດ່ໄດ້ບໍ?

wǒ kě yǐ bǎ wǒ de zì xíng chē jiè gěi nǐ
4、我可以把我的自行车借给你。

ຂ້ອຍຊິເອົາລົດຖີບຂອງຂ້ອຍຢືມໃຫ້ເຈົ້າ.

hěn bào qiàn wǒ de shū méi dài lái, bù néng jiè gěi nǐ le
5、很抱歉，我的书没带来，不能借给你了。

ຂໍໂທດ,ຂ້ອຍລືມເອົາປຶ້ມມານຳແລ້ວ,ຊິຢືມໃຫ້ເຈົ້າບໍ່ໄດ້ອີກ.

sān qíng jǐng huì huà
## 三、情景会话:

ການສົນທະນາໃນກໍລະນີແວດລ້ອມ:

liú hóng wǒ néng jiè yí xià nǐ de yǔ sǎn hé zì xíng chē ma
刘红：我能借一下你的雨伞和自行车吗?

ຫຼິວຫົງ: (ຂ້ອຍ)ຊິຢືມຄັນຮົ່ມແລະລົດຖີບຂອງເຈົ້າ(ນ້ອງ,ອ້າຍ)
ຈັກໜ້ອຍແດ່ໄດ້ບໍ?






lǐ míng yǔ sǎn kě yǐ jiè gěi nǐ bào qiàn
李 明： 雨 伞 可 以 借 给 你，抱 歉

de shì wǒ de zì xíng chē huài le
的 是 我 的 自 行 车 坏 了。

ລີໝິງ: ຊິຢືມຄັນຮົ່ມໃຫ້ແມ່ນໄດ້ຢູ່ດອກ,ເສຍດາຍແຕ່ວ່າລົດຖີບ
ຂອງຂ້ອຍເປ່ເພແລ້ວ.

liú hóng méi guān xi nà jiù bǎ yǔ sǎnjiè
刘 红： 没 关 系，那 就 把 雨 伞 借

wǒ yòng yí xià
我 用 一 下。

ຫຼິວຫົງ: ບໍ່ເປັນຫຍັງດອກ,ຄັນຊັ້ນຂໍຢືມຄັນຮົ່ມມາໃຊ້ຈັກໜ້ອຍ
ແດ່.

lǐ míng hǎo de méi wèn tí
李 明： 好 的， 没 问 题 。

ລີໝິງ: ເອີ,ໄດ້ຢູ່ດອກ.

liú hóng xiè xiè míng tiān huan nǐ
刘 红： 谢 谢， 明 天 还 你。

ຫຼິວຫົງ: ຂໍຂອບໃຈເດີ,ມື້ອື່ນຊິສົ່ງຄືນໃຫ້ເຈົ້າ.

lǐ míng bú zháo jí nǐ jǐn guǎn yòng ba
李 明： 不 着 急，你 尽 管 用 吧！

ລີໝິງ: ບໍ່ຕ້ອງຟ້າວດອກ,ໃຊ້ຕາມໃຈສາ!

liú hóng wǒ xiān zǒu le zài jiàn
刘 红： 我 先 走 了， 再 见。

ຫຼິວຫົງ: ຂ້ອຍຂໍລາໄປກ່ອນເດີ!

lǐ míng zài jiàn
李 明： 再 见。

ລີໝິງ: ໄປດີເດີ, ສະບາຍດີ!




sì tián kòng
## 四、填 空 ：ຂຽນໃສ່ບ່ອນຫວ່າງ:

xiàng pí cā jiè
橡 皮 擦 ຢາງລຶບ 借 ຢືມ

huan bào qiàn kě yǐ
还 ສົ່ງຄືນ 抱 歉 ຂໍໂທດ 可 以 ໄດ້(ຢູ່)

wǒ néng yí xià nǐ de sǎn ma
1、我 能 _____ 一 下 你 的 伞 吗 ？

ຂ້ອຍຂໍ____ຄັນຮົ່ມຂອງເຈົ້າຈັກໜ້ອຍໄດ້ບໍ?

néng bǎ nǐ de jiè wǒ yòng yí xià
2、 能 把 你 的____借 我 用 一 下

ma
吗？

ເອົາ____ຂອງເຈົ້າຢືມໃຫ້ຂ້ອຍຈັກໜ້ອຍໄດ້ບໍ?

wǒ hái xiǎng jiè yí xià nǐ de zì
3、 我 还 想 借 一 下 你 的 自

xíng chē ma
行 车 ，____吗？

ຂ້ອຍຍັງຢາກຢືມລົດຖີບຂອງເຈົ້າຈັກໜ້ອຍ_____ບໍ?

hěn wǒ de shū méi dài lái bù néng
4、很____，我 的 书 没 带 来 ，不 能

jiè gěi nǐ le
借 给 你 了。

____ຫຼາຍ,ປຶ້ມ(ຂອງຂ້ອຍ)ບໍ່ໄດ້ຕິດຕົວມາ,ຊິຢືມໃຫ້ເຈົ້າ
ບໍ່ໄດ້ເລີຍ.

wǒ huì jǐn kuài bǎ shū gěi nǐ de
5、我 会 尽 快 把 书 _____给 你 的。

ຂ້ອຍຊິເອົາປຶ້ມ____ໃຫ້ເຈົ້າໂດຍໄວເທົ່າທີ່ຄວນ.

(ຄໍາຕອບໃຫ້ເບິ່ງສະບັບໜ້າ)
dá àn qǐng guān zhù xià yī qī
（答 案 请 关 注 下 一 期）




shàng qī dá àn
## 上 期 答 案 ຄໍາຕອບສະບັບກ່ອນ:

zěn me zì xíng chē kāi chē bù xíng
1、怎 么 2、自 行 车 3、开 车 4、步 行



# ກິນໝາກເຂືອແລະແຕງໂມສົດຫຼາຍມີຜົນດີຫຼາຍປະການ

## 多吃新鲜茄子西瓜好处多

有关科学研究表明，茄子、西瓜等蔬菜水果具有防病抗癌的功效。因此，多吃新鲜茄子西瓜好处多。

ນັກວິທະຍາສາດຍີ່ປຸ່ນປະກາດບົດຄວາມວ່າ:ຕາມການຄົ້ນຄວ້າຫຼ້າສຸດໄດ້ສະແດງໃຫ້ຮູ້ວ່າ:ພືດຜັກໝາກໄມ້ໝາກເຂືອແລະໝາກແຕງໂມມີສັບພະຄຸນກັນພະຍາດຕ້ານມະເຮັງ.

ສາດສະດາຈານຂະແໜງເພສັດຊະສາດມະຫາວິທະຍາໄລເທກຽວທີ່ທຳການຄົ້ນຄວ້າທາດເຄມີພືດເຫັນວ່າ:ນອກຈາກທາດບຳລຸງ 5 ຊະນິດເຊັ່ນ:ໂປຼເຕອີນ,Carbohydrate,ທາດມັນ,ວິຕາມິນແລະແຮ່ທາດທີ່ມີທາດບຳລຸງແລ້ວ ຍັງຈະເອົາທາດເຄມີພືດຖືເປັນທາດບຳລຸງອັນດັບທີ 7 ທີ່ຄົ້ນພົບຕາມຫຼັງອາຫານເສັ້ນໃຍກໍ່ໄດ້.ພາຍໃນທາດເຄມີພືດມີສ່ວນປະກອບທີ່ເຊີດຊູຊີວະພະລັງຂອງເມັດເລືອດຂາວ,ສ່ວນເມັດເລືອດຂາວພັດມີຄຸນປະໂຫຍດດັບແລະລະງັບທາດພິດແຜກ,ຈຸລັງມະເຮັງແລະເຊື້ອໄວຣັດ.ນັກວິທະຍາສາດທີ່ຄົ້ນຄວ້າດັ່ງກ່າວເຫັນວ່າ:ທາດເຄມີພືດສາມາດເສີມຊີວະພະລັງເມັດເລືອດຂາວໃຫ້ແຂງແຮງແລະສາມາດກັນພະຍາດເຮັດໃຫ້ໂລຄາພະຍາດຜ່ອນຄາຍຫາຍດີ.

ໃນພືດຜັກໝາກໄມ້ບັນຈຸທາດເຄມີພືດຫຼວງຫຼາຍ,ໂດຍສະເພາະແມ່ນໝາກເຂືອແລະແຕງໂມບໍລິມາດບັນຈຸຫຼາຍ.ການຄົ້ນຄວ້າຍັງສະແດງໃຫ້ຮູ້ວ່າ:ພືດຜັກໝາກເຂືອສາມາດເພີ່ມ factor ຕາຍຂອງບາດແຜໃນເມັດເລືອດຂາວ,ມີຄວາມເຂັ້ມຂຸ້ນກາຍປາຕ້ານມະເຮັງແລະທາດກົດກວນອີກຊ້ຳ;ສ່ວນຜົນລະໄມ້ໝາກແຕງໂມນັ້ນມີຄຸນປະໂຫຍດເພີ່ມຊີວະພະລັງຂອງເມັດເລືອດຂາວ.ການເພີ່ມຊີວະພະລັງຂອງເມັດເລືອດຂາວບໍ່ພຽງແຕ່ມີຜົນຕໍ່ການປົວໂຣກມະເຮັງເທົ່ານັ້ນ ອາດຍັງມີຜົນຕໍ່ການປົວໄຂມັນໃນເລືອດສູງ,ສາຍເລືອດແຂງ,ພະຍາດເບົາຫວານຕະຫຼອດຮອດພະຍາດຕັບແລະອາການກະທົບຝືນອີກ,ດ້ວຍເຫດນີ້,ຈຶ່ງວ່າກິນໝາກເຂືອແລະແຕງໂມສົດ ໆຂຽວ ໆໃຫ້ຫຼາຍມີຜົນດີຫຼາຍປະການ.













《占芭》杂志老挝发行、销售代理处：向导书屋　电话：00856-21-213191

ຕົວແທນຈຳໜ່າຍວາລະສານ 《ຈຳປາ》 ໃນເມືອງລາວ:ແສງດາວຂາຍປຶ້ມ Tel:00856-21-213191


Welcome to Laos... Land of Timeless Beauty
ການບິນລາວ
Lao Airlines
The Beauty of Lao Hospitality